# <u>ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີ ພາສາລາວ</u>

**Copyright © 2006 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປຶ້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, 2004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-4
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 5-7
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 5-7
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 8-11
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 8-11
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 12-13 & Christmas Lesson
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11-12 & Christmast Lesson
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

## ບົດຮຽນທີ 1

## ຈາກຄວາມເປັນອັມະຕະມາເຖິງນີ້

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຢຮັນ 1:1-18, 29-36, 43-45

**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** ໂຢຮັນ ບົດທີ 1

**ຈຸດສໍາຄັນຂອງບົດຮຽນນີ້:** ພວກເຮົາຖືກເອີ້ນໃຫ້ມາຕິດຕາມພຣະເຢຊູ ຜູ້ເປັນຄວາມສວ່າງແຫ່ງຄວາມຈິງຂອງຄວາມເປັນອັມະຕະຂອງພຣະເຈົ້າ

**ຄໍາຖາມເພື່ອສໍາຣວດ:** ເປັນຫຍັງຈຶ່ງຕິດຕາມພຣະເຢຊູ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະອະທິບາຍເຖິງພຣະເຈົ້າຜູ້ເປັນອັມະຕະໄດ້ສະເດັດມາເປັນຕົວຕົນ ໃນຮູບຮ່າງຂອງພຣະເຢຊູ ເພື່ອຈະມີຜົນປາກົດໃນຊີວິດຂອງພວກເຮົາທຸກວັນນີ້

### ຄົ້ນຄວ້າພ້ອມກັບການປະຕິບັດ

- ຢັ້ງຢືນວ່າພຣະຄັມພີມີອໍານາດໃນການນໍາພາຊີວິດແລະໃນການປ່າວປະກາດ
- ແບ່ງປັນພຣະກິດຕິຄຸນໃຫ້ແກ່ທຸກຄົນ
- ເຊື່ອຟັງແລະຮັບໃຊ້ພຣະເຢຊູ ດ້ວຍຮ່າງກາຍ, ຈິດວິນຍານ, ແລະຄວາມຄິດຕ່າງໆ

### ຄໍານໍາ

ຖ້າຈະສໍາຣວດເບິ່ງມະນຸດໃນໂລກນີ້, 10 ຄົນທີ່ທ່ານຊື່ນຊອບທີ່ສຸດ ໃນບັນຊີຂອງທ່ານຈະມີຜູ້ໃດແດ່? ທ່ານອາດຈະລວມເອົາຊື່ພຣະເຢຊູເຂົ້າດ້ວຍຫລືບໍ່ກໍອາດຈະເປັນໄດ້. ສໍາຫລັບຂ້າພະເຈົ້າແລ້ວພຣະເຢຊູຄົງຈະເປັນຜູ້ນໍາຂະບວນ.

ພຣະເຢຊູຈະຄິດຢ່າງໃດ ກ່ຽວກັບການສະເດັດມາຮ່ວມຊາດມະນຸດ? ພຣະອົງບໍ່ໄດ້ສະເດັດມາເພື່ອຈະໃຫ້ຜູ້ໃດຜູ້ນຶ່ງນິຍົມຊົມຊອບແລະຍົກຍ້ອງ ແຕ່ພຣະອົງສະເດັດມາເພື່ອຊອກຫາຜູ້ທີ່ສແວງຫາພຣະອົງ. ໂຢຮັນໄດ້ເລີ້ມເຣື່ອງຂອງອົງພຣະເຢຊູແລະຜູ້ຕິດຕາມພຣະອົງດ້ວຍອໍານາດ, ດ້ວຍພຣະຄໍາອັນເປັນອັມະຕະແລະດ້ວຍການຊົງສ້າງຕ່າງໆຂອງພຣະອົງກ່ອນວາງຮາກຖານຂອງໂລກ. ພຣະກິດຕິຄຸນມັດທາຍ ໄດ້ກ່າວເຖິງການສະເດັດເຂົ້າມາໃນໂລກນີ້ຂອງພຣະເຢຊູໂດຍຜ່ານຊາຍທີ່ຊອບທັມຄືໂຢເຊບ, ພຣະກິດຕິຄຸນລູກາກ່າວວ່າໄດ້ ສະເດັດເຂົ້າມາດ້ວຍການເປີດຈິດໃຈຂອງນາງມາຣີອາ ແຕ່ພຣະກິດຕິຄຸນໂຢຮັນຊໍ້າພັດກ່າວຫວນຄືນໄປເຖິງການເລີ້ມສ້າງໂລກດ້ວຍການທີ່ບໍ່ມີອັນໃດທັງຫມົດເລີຍ. ໂຢຮັນຈຶ່ງໄດ້ກ່າວເຖິງການເດີນທາງຂອງພຣະເຢຊູຄັ້ງນີ້ວ່າ ຈາກຄວາມເປັນອັມະຕະເຂົ້າມາໃນໂລກແລະມາເຖິງທີ່ນີ້.

### ພຣະທັມ, ຊີວິດ, ແລະຄວາມສະວ່າງ (1:1-9)

ພຣະກິດຕິຄຸນໂຢຮັນໄດ້ປຸກແນວຄິດຈິດໃຈດ້ວຍການຍົກພຣະເຢຊູຂຶ້ນມາແລ້ວກ່າວວ່າ "ພຣະເຢຊູຊົງເປັນພຣະທັມ, ພຣະອົງເປັນຊີວິດແລະພຣະອົງເປັນຄວາມສະວ່າງຂອງໂລກນີ້. ພວກເຮົາສາມາດເຫັນຮູບພາບຂອງພຣະອົງຢ່າງເຕັມປ່ຽມ ຄືພຣະອົງຊົງເປັນມະນຸດແລະຊົງເປັນພຣະເຈົ້າ.

ສັຕວັດທຳອິດຂອງໂລກນີ້, ພວກເຂົາເຫັນພຣະອົງເປັນຜູ້ທຳນວາຍ. ບາງຄົນກໍຍັງເຫັນໂຢຮັນບັບຕິສໂຕເປັນຜູ້ເທົ່າທຽມກັບພຣະເຢຊູ ແລະບາງຄົນຍັງເຫັນວ່າໂຢຮັນເໜືອກວ່າ. ພຣະກິດຕິຄຸນໂຢຮັນບອກວ່າ ຖ້າຜູ້ໃດຮູ້ຈັກພຣະອົງ ຜູ້ນັ້ນກໍຈະຮູ້ຄວາມຈິງ ແລະຄວາມຈິງເທົ່ານັ້ນທີ່ຈະອະທິບາຍໃຫ້ເຂົາໄດ້.

ພຣະເຢຊູຊົງສະຖິດຢູ່ກັບພຣະເຈົ້າ, ແລະພຣະອົງກໍຊົງເປັນພຣະເຈົ້າ. ພຣະອົງຊົງເໜືອມະນຸດທົ່ວໄປ ເພາະພຣະອົງຊົງເປັນຮາກຖານຂອງໂລກ. ເຄື່ອງໝາຍສຳລັບຕົວຂອງພຣະເຢຊູແລ້ວ ແມ່ນ: ພຣະອົງເປັນພຣະຜູ້ສ້າງ (ໂຢຮັນ 1:1-3, 10-18) ການຊົງສ້າງຂອງພຣະອົງ ທຸກສິ່ງດີທັງໝົດ. "ພຣະເຈົ້າຊົງສ້າງສິ່ງທັງປວງຂຶ້ນມາໂດຍພຣະທັມ ໃນບັນດາສິ່ງທີ່ເປັນມານັ້ນ ບໍ່ມີຈັກສິ່ງທີ່ເປັນມາໂດຍນອກຈາກພຣະທັມ." ຖ້ອຍຄຳນີ້ ຄ້າຍໆ ກັບຈົດໝາຍຂອງໂປໂລທີ່ຂຽນໄປເຖິງພີ່ນ້ອງຊາວເມືອງໂກໂລຊາຍວ່າ: "ເພາະວ່າ ໃນພຣະອົງ ພຣະເຈົ້າໄດ້ຊົງສ້າງສັພສິ່ງຂຶ້ນທັງໃນທ້ອງຟ້າແລະເທິງແຜ່ນດິນໂລກ ສິ່ງທີ່ຕາເຫັນໄດ້ແລະທີ່ຕາບໍ່ເຫັນໄດ້ ຈະເປັນພຣະທີ່ນັ່ງຫລືເປັນອະນຸພາບເປັນຜູ້ປົກຄອງ ຫລືຜູ້ມີອຳນາດ ສິ່ງທັງປວງເຫລົ່ານີ້ແມ່ນພຣະເຈົ້າໄດ້ສ້າງໂດຍທາງພຣະອົງ ແລະສຳລັບພຣະອົງ. (ໂກໂລຊາຍ 1:16) ".........ແລະດ້ວຍພຣະບຸດນັ້ນ ພຣະອົງໄດ້ຊົງສ້າງໂລກທັງຫລາຍ." (ເຮັບເຣີ 1:2)

ພຣະເຢຊູເປັນຄວາມ "ສະຫວ່າງ" ຂອງໂລກ. ພວກເຮົາໄດ້ເຫັນການສະທ້ອນມາຈາກພຣະທັມເອຊາຢາ ບົດ 60 ແລະ 61. ຄຳວ່າ "ໂລກ" ບໍ່ແມ່ນແຕ່ພຽງມະນຸດເທົ່ານັ້ນ ສັພທຸກສິ່ງໃນໂລກກໍລ້ວນເປັນສິພຣະທັດຂອງພຣະອົງທັງສິ້ນ. ເມື່ອມະນຸດໄດ້ນຳຄວາມບາບເຂົ້າມາໃນໂລກຄວາມມືດຈຶ່ງປົກຄຸມໂລກ. ໂຢຮັນກໍເປັນຄວາມສະຫວ່າງແຕ່ກໍພຽງຊົ່ວຄາວເທົ່ານັ້ນ (ໂຢຮັນ 5:35) ແຕ່ພຣະເຢຊູຊົງປະກາດວ່າ "ຕາບໃດທີ່ເຮົາຍັງຢູ່ໃນໂລກນີ້ ເຮົາກໍເປັນຄວາມສະຫວ່າງຂອງໂລກ" (ໂຢຮັນ 9:5)

ໜ້າເສັຽດາຍໂລກທີ່ພຣະອົງຊົງສ້າງມານີ້ໄດ້ພາກັນປະຕິເສດພຣະອົງ. ເຖິງແມ່ນວ່າຈະປະຕິເສດປານ ໃດພຣະອົງກໍຍັງຊົງຮັກໂລກ ດັ່ງໂຢຮັນໄດ້ບັນທຶກໄວ້ໃນ ໂຢຮັນ 1:29 "ເບິ່ງແມ, ພຣະເມສານ້ອຍຂອງພຣະເຈົ້າຜູ້ຊົງຮັບເອົາຄວາມຜິດ ບາບຂອງມະນຸສໂລກໄປເສັຽ." ເມື່ອອ່ານຂໍ້ພຣະທັມຕອນນີ້ແລ້ວ ພວກເຮົາຈະເຫັນຄວາມຮັກຂອງພຣະອົງ. ແລະ ໂຢຮັນ 3:16 ຊຶ່ງກ່າວວ່າ ພຣະເຈົ້າຊົງຮັກໂລກ, ຮັກ ແມ່ນວ່າເຂົາຈະກຽດຊັງຫລືປະຕິເສດພຣະອົງກໍຕາມ.

<u>**ຂອງປະທານທີ່ໂລກພາກັນປະຕິເສດ**</u> (1:10-11)

ໃນສມັຍສັຕວັດທຳອິດ ຖ້າເວົ້າເຣື່ອງສາສນາແລ້ວແມ່ນກ່ຽວກັບພຣະເມຊີອາທັງສິ້ນ ແຕ່ຄົນທັງຫລາຍຍັງຂາດຄວາມເຂົ້າໃຈກ່ຽວກັບການສະເດັດມາຂອງພຣະເຈົ້າ. ພວກເຮົາຕ້ອງລະມັດລະວັງກ່ຽວກັບສາສນາຢູ່ໃນປະເທດສະຫະຣັດອະເມຣິການີ້ ພວກເຮົາມີໂອກາດຄົ້ນຄວ້າສຶກສາຫາຄວາມຈິງເຖິງຄວາມເປັນ ເອກລັກຂອງພຣະຄຣິດ. ຫລາຍຄົນໃນໂລກນີ້ຍັງບໍ່ທັນເຂົ້າໃຈໃນຄຳທີ່ວ່າພຣະອົງສະເດັດເຂົ້າມາໃນບ້ານເມືອງຂອງຕົນເອງ ແລະຊາວບ້ານຊາວເມືອງຂອງພຣະອົງບໍ່ໄດ້ຕ້ອນຮັບພຣະອົງ. (1:11)

ຄຳວ່າ "ເມືອງຂອງຕົນ" ແລະ "ຊາວບ້ານຊາວເມືອງຂອງຕົນເອງ" ແມ່ນໃຜ? ຜູ້ໃດ? ຢູ່ໃສ? ພຣະເຢຊູສະເດັດມາເປັນຄົນຍິວຄົນຂອງພຣະອົງ ແຕ່ພວກເຮົາຕ້ອງເຂົ້າໃຈວ່າພວກເຮົາເປັນຂອງພຣະອົງ. ເພາະໂລກ ນີ້ທັງໝົດເປັນຂອງພຣະອົງ. ເພງສັຣເສີນ 24:1 ໄດ້ເຕືອນພວກເຮົາວ່າ: "ແຜ່ນດິນໂລກແລະສັພສິ່ງໃນນັ້ນເປັນຂອງພຣະເຈົ້າທັງຈັກກະວານແລະບັນດາທີ່ຢູ່ໃນຈັກກະວານນັ້ນ"

ຖ້າພຣະເຢຊູຫາກມີຕົວຕົນ, ພຣະອົງມາທີ່ນີ້ພວກເຮົາຈະຮູ້ຈັກພຣະອົງບໍ່? ຫລາຍຄົນຄົງຈະເຫັນວ່າພຣະອົງຕ້ອງມີ

ຕາເປັນສີຟ້າ, ມີຜົມຍາວ ແລະມີໜວດມີເຄົາອີກດ້ວຍ. ພຣະເຢຊູເປັນຄົນຜິວຂາວບໍ່? ຫລືພຣະອົງຕ້ອງມີສີສັນເໝືອນຄົນເອເຊັຽຕາເວັນອອກກາງບໍ່? ພວກເຮົາສາມາດພົບພຣະເຢຊູທີ່ນີ້ ຖ້າພວກເຮົາຫາກສແວງຫາເພາະພຣະອົງຢູ່ທຸກບ່ອນ.

ມັດທາຍ 25:40 "ເຮົາບອກຄວາມຈິງແກ່ທ່ານທັງຫລາຍວ່າ ຊຶ່ງທ່ານໄດ້ກະທຳແກ່ຄົນໃດຄົນນຶ່ງໃນພວກພີ່ນ້ອງຂອງເຮົານີ້ ເຖິງແມ່ນຈະຕ່ຳຕ້ອຍປານໃດກໍເໝືອນໄດ້ກະທຳແກ່ເຮົາດ້ວຍ"

**ຈົ່ງພາກັນຕ້ອນຮັບພຣະອົງ** (1:12-18)

ພຣະກິດຕິຄຸນໂຢຮັນກ່າວເຖິງຜູ້ທີ່ຕ້ອນຮັບເອົາພຣະອົງ ໃນໂຢຮັນ 1: 12 "ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພຣະເຢຊູ ຜູ້ທີ່ເຊື່ອໃນພຣະນາມຂອງພຣະອົງ ພຣະອົງກໍຊົງປະທານສິດໃຫ້ເປັນບຸດຂອງພຣະເຈົ້າ" ພຣະຄຸນຂອງພຣະເຈົ້າບໍ່ມີວົງຈຳກັດນຂອບເຂດ ພຣະອົງຍັງມີສຳລັບທຸກໆຄົນແລະພຣະອົງກໍຍັງມີຫ້ອງວ່າງສຳລັບທຸກໆຄົນ.

ແຕ່ທີ່ຈະກາຍມາເປັນບຸດຂອງພຣະເຈົ້າພວກເຮົາຕ້ອງໄດ້ເກີດໃໝ່. ການເກີດໃໝ່ນີ້ບໍ່ແມ່ນການເກີດຝ່າຍເນື້ອໜັງແຕ່ຕ້ອງເກີດຝ່າຍຈິດວິນຍານ. ດັ່ງບົດສົນທະນາລະຫວ່າງພຣະເຢຊູ ແລະນີໂກເດມໃນໂຢຮັນ ບົດ 3 ຫລາຍຄົນສອນວ່າທຸກຄົນເປັນລູກຂອງພຣະເຈົ້າ. ແຕ່ຂ້າພະເຈົ້າຢາກເວົ້າວ່າທຸກຄົນແມ່ນສິ່ງພຣະຫັດຂອງພຣະເຈົ້າ ທີ່ຈະເປັນລູກຂອງພຣະເຈົ້ານັ້ນຄົນນັ້ນຈຳເປັນຕ້ອງໄດ້ເກີດໃໝ່ຝ່າຍວິນຍານເສັຽກ່ອນ. ການເກີດຝ່າຍວິນຍານນັ້ນແມ່ນພຣະວິນຍານຊົງນຳ. ຫລັງຈາກນັ້ນເຮົາກໍກັບການມາເປັນຜູ້ຕິດຕາມພຣະວິນຍານ ແລະຕິດຕາມພຣະເຈົ້າ.

ຂໍ້ 14 ໄດ້ສຳແດງໃຫ້ພວກເຮົາໄດ້ເຫັນວ່າ ພຣະເຈົ້າຊົງສະເດັດມາໃນສະພາບຂອງມະນຸດ. ພຣະເຢຊູບໍ່ແມ່ນມະນຸດແລ້ວກາຍເປັນພຣະເຈົ້າ ແຕ່ແມ່ນພຣະເຈົ້າທີ່ກາຍມາເປັນມະນຸດ. ພຣະອົງພຽບພ້ອມໄປດ້ວຍພຣະຄຸນແລະຄວາມຈິງ ດັ່ງນັ້ນພຣະອົງຈຶ່ງສາມາດເອົາຊີວິດປະທານໃຫ້ແກ່ພວກເຮົາໄດ້.

**ພະຍານ** (1:29-36)

ໃນໂຢຮັນ 1:29-30 ເຮົາສາມາດເຫັນການເປີດເຜີຍຂອງພຣະເຢຊູໂດຍໂຢຮັນບັບຕິສໂຕວ່າ "ເບິ່ງແມ, ພຣະເມສານ້ອຍຂອງພຣະເຈົ້າ ຜູ້ຊົງຮັບເອົາຄວາມຜິດບາບຂອງມະນຸສໂລກໄປເສັຍ. ຜູ້ນີ້ແຫລະ ທີ່ເຮົາກ່າວວ່າຈະມີຜູ້ນຶ່ງມາພາຍຫລັງເຮົາ ຈະອອກກ່ອນໜ້າເຮົາ ເພາະວ່າທ່ານເປັນຢູ່ກ່ອນເຮົາ."

ເຖິງແມ່ນວ່າໂຢຮັນຈະເປັນຜູ້ໃຫ້ພຣະເຢຊູຮັບບັບຕິສມາກໍຕາມ ລາວກໍຮູ້ວ່າລາວເປັນຜູ້ທີ່ຕ່ຳກ່ວາພຣະເຢຊູຢູ່ສເມີ. ພຣະເຢຊູຈະເປັນຜູ້ໃຫ້ທ່ານຮັບບັບຕິສມາດ້ວຍພຣະວິນຍານບໍຣິສຸດ. ເພາະດ້ວຍຕາຂອງລາວທີ່ເຫັນພຣະວິນຍານລົງມາຈາກຟ້າສວັນ ແລະຊົງສະຖິດຢູ່ເໜືອທ່ານ.

**ຕາມເສັ້ນທາງ** (1:43-45)

ເມື່ອອັນເດອາແລະສາວົກຜູ້ອື່ນກຳລັງຕິດຕາມພຣະອົງໄປນັ້ນ ອັນເດອາໄດ້ພົບອ້າຍຂອງລາວຊື່ວ່າ ຊີໂມນ ເປໂຕ ແລະລາວກໍໄດ້ບອກອ້າຍຂອງລາວວ່າ "ໝູ່ເຮົາໄດ້ພົບພຣະເມຊີອາແລ້ວ" (ທີ່ແປວ່າ ພຣະຄຣິດ) (ໂຢຮັນ 1:40-41)

ຕໍ່ມາພຣະອົງກໍຊົງເອີ້ນເອົາຟີລິບອີກ. ເມື່ອຟີລິບພົບນະທານະເອນລາວກໍບອກວ່າ "ເຮົາໄດ້ພົບຜູ້ທີ່ໂມເຊໄດ້ກ່າວເຖິງໃນໜັງສືພຣະບັນຍັດແລະທີ່ພວກຜູ້ປະກາດພຣະທັມໄດ້ກ່າວເໝືອນກັນ ຄືລູກຂອງໂຢເຊບໄທນາ ຊາເຣັດ." (1:44-45) ພຣະເຢຊູຊົງຮຽກເອີ້ນສາວົກຂອງພຣະອົງໄປເລື້ອຍໆ ຈົນຄົບຈຳນວນທີ່ພຣະອົງຕ້ອງການ. ທ່ານເປັນສາວົກທີ່ພຣະອົງຊົງຮຽກເອີ້ນຫລືບໍ່? ພວກເຮົາພໍໃຈໃນພຣະອົງຫລືບໍ່?

**<u>ຄຳຖາມ</u>**

1. ທ່ານເຄີຍເຫັນຄວາມເປັນພຣະເຈົ້າຂອງພຣະເຢຊູຢູ່ທີ່ໃດ? ແມ່ນຫຍັງຄືຄວາມແຕກຕ່າງລະຫວ່າງພຣະເຈົ້າ ແລະມະນຸດຂອງພຣະເຢຊູຄຣິດ?

2. ທ່ານເຄີຍຄິດເຖິງການປ່າວປະກາດໃນຄຣິສຕະຈັກຂອງທ່ານຫລືບໍ່?

3. ທ່ານເຄີຍຄິດບໍ່ວ່າທ່ານຈະເປັນພະຍານຝ່າຍພຣະຄຣິດ? ຈະເປັນພະຍານແບບໃດ?

4. ທ່ານຈະອະນຸຍາດໃຫ້ພຣະເຢຊູຮຽກເອີ້ນທ່ານບໍ່?

*ດຣ. ບຸນໂຮມ ພົມມະຈັນ*

# <u>ບົດຮຽນທີ 2</u>

# <u>ຊອກສແວງຫາຊີວິດທີ່ແທ້ຈິງ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ໂຢຮັນ 3:1-16

**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ໂຢຮັນ ບົດທີ 3

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຊີວິດທີ່ແທ້ຈິງຄືຊີວິດທີ່ເກີດມາຈາກເບື້ອງບົນ, ໂດຍທາງຄວາມເຊື່ອໃນອົງພຣະເຢຊູຄຣິດ, ພຣະບຸດຂອງພຣະເຈົ້າ.

**<u>ຄຳຖາມເພື່ອສຳຣວດ</u>:** ເຮົາຈະສາມາດຮັບເອົາຊີວິດທີ່ແທ້ຈິງໄດ້ຢ່າງໃດ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອຈະອະທິບາຍວ່າເຮົາຈຳເປັນຕ້ອງເກີດຈາກເບື້ອງເທິງ, ແລະຈະເກີດຈາກເບື້ອງບົນຢ່າງໃດ?

**<u>ສຶກສາຄົ້ນຄວ້າແລະຈຸດເນັ້ນໜັກ</u>**

- ຢັ້ງຢືນວ່າ ພຣະຄັມພີມີອຳນາດນຳພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນພຣະກິດຕິຄຸນໃຫ້ແກ່ທຸກໆຄົນ
- ເສີມຂຍາຍຄວາມກ້າວໜ້າ, ແລະເຄື່ອນໄຫວດ້ວຍຄວາມເຊື່ອ

## <u>ຄຳນຳ</u>

ເປັນຫຍັງຂ້ອຍຈຶ່ງຈະມາເຊື່ອພຣະເມຊີອາ ໃນເມື່ອຂ້ອຍມີພຣະພຸດຢູ່ແລ້ວ? ນີ້ແມ່ນຄຳຖາມຂອງປັນຍາຊົນ (ຄົນລາວ) ຄົນນຶ່ງ. ນີ້ຄືບັນຫາທີ່ຍິ່ງໃຫຍ່ທີ່ຜູ້ປ່າວປະກາດຊາວລາວມີບັນຫາ. ຈະເຮັດຢ່າງໃດ ໃນເມື່ອຣະບົບປະສາດຂອງພວກເຂົາບໍ່ເປີດຮັບ? ຍິ່ມເຈັ້ຽປ່າວປະກາດໃຫ້ແກ່ເຂົາ ແລະຂໍຮ້ອງໃຫ້ເຂົາອ່ານ. ບາງຄົນກໍອາດຈະອ່ານໂລດ, ແຕ່ບາງຄົນກໍຈັບໃສ່ຖົງແລ້ວກໍຈາກໄປ.

ນີ້ແມ່ນການປ່າວປະກາດຢ່າງນຶ່ງທີ່ພວກເຂົາບໍ່ສາມາດໂຈມຕີເຮົາໄດ້ ເພາະເຮົາບໍ່ໄດ້ເປັນຜູ້ຂຽນ. ໃນສມັຍຂອງໂຢຮັນກໍມີປັນຍາຊົນຄົນນຶ່ງ ຊື່ນີໂກເດມ ທີ່ເຂົ້າມາຫາພຣະເຢຊູໃນຕອນກາງຄືນ. ພຣະເຢຊູຊົງຊາບດີເຖິງວັທນະທັມຂອງຊາວຍິວໂດຍສະເພາະແມ່ນຜູ້ນຳທາງສາສນາ. ຄົນຜູ້ນີ້ເຂົ້າມາເພື່ອຊອກສແວງຫາຊີວິດທີ່ແທ້ຈິງ. ເພື່ອຢາກຈະເຂົ້າໃຈໃນຊີວິດຂອງຕົນເອງ.

ນີໂກເດມ ເປັນຄົນນັບຖືສາສນາ ແນ່ນອນລາວໄປນະມັສການເປັນປະຈຳ, ລາວເປັນຜູ້ນຳພວກຍິວ ແນ່ນອນລາວຕ້ອງຢູ່ໃນສະພາການປົກຄອງ. ແຕ່ວ່າໃນແງ່ສາສນາຂອງລາວແລ້ວ, ລາວຄິດວ່າຍັງມີອັນໃດອັນນຶ່ງຂາດເຂີນຢູ່. ລາວກ່າວວ່າ: "ພຣະອາຈານເອີຍ, ພວກຂ້າຊາບຢູ່ວ່າທ່ານເປັນຄຣູທີ່ມາຈາກພຣະເຈົ້າ ເພາະບໍ່ມີຜູ້ໃດອາດເຮັດໝາຍສຳຄັນທີ່ທ່ານເຮັດຢູ່ນັ້ນ ເວັ້ນແຕ່ພຣະເຈົ້າຊົງສະຖິດຢູ່ນຳ" (ຢຮ. 3:2) ນີໂກເດມ ເຫັນຮູບຮ່າງຂອງພຣະວິນຍານບໍຣິສຸດ ແຕ່ບໍ່ໄດ້ມີໃນຊີວິດຂອງລາວເອງ ນັ້ນລະຄືສິ່ງລາວຂາດ. ລາວເຫັນສິ່ງນີ້ໃນອົງພຣະເຢຊູ.

**<u>ການເກີດຂອງພຣະວິນຍານເລີ້ມຕົ້ນຢູ່ທີ່ ການຍອມຮັບຕົວເອງວ່າບໍ່ສາມາດຊ່ວຍຕົວເອງໄດ້</u>** (3:1-2)

ນີໂກເດມແມ່ນໃຜ? ເປັນສະມາຊິກປົກຄອງຂອງສະພາ ແຊນດຣິນ, ພັກພວກຂອງຟາຣີຊາຍ, ເປັນນາຍຂອງພວກຍິວ

ເປັນຫຍັງນີໂກເດມຈຶ່ງມາຫາພຣະເຢຊູຍາມກາງຄືນ? ເພາະວ່າຢ້ານເສັຍຄວາມລັບ, ຕົນເອງເປັນປັນຍາຊົນຍັງຈະຕ້ອງ ມາສອບຖາມຄວາມຮູ້ຈາກຜູ້ອື່ນຄືແນວໃດ. ພວກເຮົາເຫັນວ່າເວລາລາວເຂົ້າມາຫາພຣະເຢຊູ ລາວຮ້ອງພຣະເຢຊູທັນທີວ່າ <u>ພຣະອາຈານເຈົ້າເອີຍ</u>........ໃນຄວາມຫມາຍກໍມີຢູ່ວ່າ ພຣະເຢຊູຊົງເຫນືອກວ່າປັນຍາຊົນທັມດາ, ເຫນືອກວ່ານັກສາສນາອື່ນໆ, ເຫນືອກວ່າອຳນາດການປົກຄອງຕ່າງໆ<u>... ບໍ່ມີຜູ້ໃດອາດເຮັດຫມາຍສຳຄັນໄດ້..</u> ໃນໂລກນີ້ທີ່ຜ່ານມາ ບໍ່ເຄີຍເຫັນຜູ້ໃດສະແດງອັສຈັນໄດ້. ສິ່ງທີ່ທ່ານເຮັດໄດ້ນັ້ນລະຂ້ານ້ອຍຍັງຂາດຢູ່.

ແມ່ນຫຍັງຄືສິ່ງທີ່ພວກເຮົາຄວນຈະລະຖິ້ມ ເພື່ອຈະໄດ້ມີຄວາມສັມພັນທີ່ຖືກຕ້ອງກັບພຣະເຢຊູ? ຟາຣີຊາຍຍັງມີຊີວິດຢູ່, ຟາຣີຊາຍຍັງຢູ່ໃນໂລກນີ້, ຟາຣີຊາຍຍັງຢູ່ໃນໂບດຂອງພວກເຮົາໃນທຸກວັນນີ້. ແມ່ນຫຍັງຈະເກີດຂື້ນຖ້າພວກເຮົາຫາກທະນົງຕົວໃນຫນ້າທີ່, ໃນຄວາມສົມບູນມັ່ງຄັ່ງ, ໃນການທຳທ່າເປັນຜູ້ດີ, ໃນການທີ່ຖືວ່າຕົນເອງມີພຣະວິນຍານ, ໃນການຕັດສິນຜູ້ອື່ນ? ແມ່ນຫຍັງຈະເກີດຂື້ນຖ້າເຮົາຫາກປະສົມສາສນາ?ແມ່ນຫຍັງຈະເກີດຂື້ນຫາກເຮົາສຳນຶກໃນຄວາມບົກພ່ອງຂາດເຂີນຂອງພວກເຮົາ? ນີໂກເດມ ຮູ້ສຶກໃນຄວາມບົກພ່ອງ ນຳຕົວເອງມາຫາພຣະເຢຊູ.

## <u>ການເກີດຂອງພຣະວິນຍານປ່ຽນແປງເຮົາໃຫ້ກາຍເປັນລູກຂອງພຣະເຈົ້າ</u> (3:3-8)

ພຣະເຢຊູເຫັນການຊອກສແວງຫາຂອງນີໂກເດມ. ພຣະອົງຈຶ່ງໄດ້ແນະນຳເສັ້ນທາງໃຫ້ກັບເຂົາວ່າ "ເຮົາບອກທ່ານຕາມຄວາມຈິງວ່າ ຖ້າຜູ້ໃດບໍ່ບັງເກີດມາໃຫມ່ຜູ້ນັ້ນຈະເຫັນຣາຊແຜ່ນດິນຂອງພຣະເຈົ້າບໍ່ໄດ້" (3:3)ພຣະເຢຊູຫມາຍຄວາມວ່າແນວໃດ? ເຈົ້າຈະເຂົ້າໄປສວັນບໍ່ໄດ້ຖ້າເຈົ້າບໍ່ເກີດໃຫມ່ເສັຍກ່ອນແມ່ນບໍ່? ແມ່ນແລ້ວ. ພວກເຮົາບໍ່ສາມາດຈະສ້າງສວັນຂອງຕົວເອງໄດ້ເພາະວ່າສວັນມີຢູ່ແລ້ວ ອົງພຣະເຢຊູຊົງເປັນເຈົ້າຂອງ. ພວກເຮົາຈະເຂົ້າແຜ່ນດິນສວັນໄດ້ກໍຕໍ່ເມື່ອເຮົາຮັບຮູ້ແລະຕ້ອນຮັບເອົາຜູ້ເປັນເຈົ້າຂອງສວັນເທົ່ານັ້ນ. ໃນພຣະຄັມພີໃຫມ່ໄດ້ບັນທຶກໄວ້ກ່ຽວກັບ "ການຮັບ" ແລະ "ການເຂົ້າໄປ" ໃນສວັນ.(ມັດທາຍ. 5:20; 7:21; 18:3; 19:23-24; 23: 13; ມາຣະໂກ 9:47; 10:15) ບໍ່ມີຜູ້ໃດທີ່ຈະຂື້ນໄປສວັນດ້ວຍຕົວເອງໄດ້.

ທ່ານຈະສ້າງສິ່ງໃດກໍແລ້ວແຕ່, ສິ່ງຂອງຝ່າຍໂລກນີ້ຈະຢູ່ໃນໂລກນີ້ ສິ່ງທີ່ເປັນວິນຍານກໍຈະນຳທ່ານໄປເຖິງຝ່າຍວິນຍານໄດ້. ພຣະເຢຊູຊົງເປັນພຣະເຈົ້າແລະຊົງເປັນວິນຍານດ້ວຍ. ໂຢຮັນ 3:13 *"ບໍ່ມີຜູ້ໃດໄດ້ຂື້ນໄປສູ່ສວັນ ນອກຈາກຜູ້ທີ່ລົງມາຈາກສວັນຄືບຸດມະນຸດ"* ພຣະເຢຊູຊົງກ່າວວ່າ "ທ່ານຢ່າປລາດໃຈທີ່ເຮົາບອກທ່ານວ່າ ທ່ານທັງຫລາຍຈຳເປັນຕ້ອງບັງເກີດມາໃຫມ່" (3:7) ແລະພຣະອົງຍັງໄດ້ຍົກຕົວຢ່າງເຣື່ອງລົມແລະສຽງໃຫ້ຟັງອີກ.

## <u>ຜູ້ທີ່ມີຊີວິດໃຫມ່, ພຣະເຈົ້າຈະມີແຜນຕໍ່ຊີວິດນັ້ນ</u> (3:9-16)

ນີໂກເດມກາຍມາເປັນຜູ້ຕິດຕາມພຣະເຢຊູໃນວັນນັ້ນບໍ່? ຕາມທີ່ຈິງແລ້ວລາວສົງສັຍພຣະເຢຊູ. ເບິ່ງຄຳເວົ້າຂອງພຣະເຢຊູ "ເຮົາບອກຄວາມຈິງແກ່ທ່ານ.." ພຣະອົງກ່າວເຖິງສາມຄັ້ງ. (3:3,5,11) ແລະພຣະອົງກໍຍັງເຊີນນີໂກເດມໃຫ້ບັງເກີດໃຫມ່. ແລ້ວພຣະອົງກໍສລູບຢ່າງເສົ້າໃຈໃນ 3:11 ວ່າ "ເຮົາບອກຄວາມຈິງແກ່ທ່ານວ່າ ພວກເຮົາ ເວົ້າສິ່ງທີ່ເຮົາຮູ້ແລະເປັນພະຍານເຖິງສິ່ງທີ່ພວກເຮົາໄດ້ເຫັນ ແຕ່ທ່ານທັງຫລາຍບໍ່ໄດ້ຮັບຄຳພະຍານຂອງເຮົາ." ພຣະອົງກ່າວເຖິງສິ່ງທີ່ຢູ່ໃນໂລກແຕ່ນີໂກເດມກໍຍັງບໍ່ເຂົ້າໃຈ ບັດນີ້ພຣະອົງກ່າວກັບເຣື່ອງຂອງສວັນ.

ພວກເຮົາທັງຫລາຍທີ່ເປັນຄຣິສຕຽນເຂົ້າໃຈເຣື່ອງແຜ່ນດິນສວັນດີ. ຖ້າພວກເຮົາຫາກຄິດເຖິງແຕ່ສິ່ງຂອງໃນໂລກພວກເຮົາຈະເປັນຢ່າງໃດ. ອາຈານໂປໂລກ່າວໃນ ໂກໂລຊາຍ 3:2 ວ່າ "ຈົ່ງເອົາໃຈໃສ່ສິ່ງທີ່ຢູ່ເບື້ອງເທິງ ບໍ່ແມ່ນສິ່ງ

ຊີ່ງຢູ່ແຜ່ນດິນໂລກ." ພຣະເຢຊູສາມາດອະທິບາຍສິ່ງຕ່າງໆໄດ້ກ່ຽວກັບສວັນ ເພາະພຣະອົງສະເດັດມາຈາກສວັນ. (3:13)

ຂໍ້ 14 ເປັນສິ່ງນຶ່ງທີ່ເຮັດໃຫ້ພວກເຮົາລະນຶກເຖິງການປົດປ່ອຍຂອງຊາວອິສຣາເອນ ຊຶ່ງບັນທຶກໄວ້ໃນພຣະທັມຈົດບັນຊີບົດທີ 21. ຫລັງຈາກຄົນອິສຣາເອນ ໄດ້ຈົ່ມຕໍ່ວ່າໂມເຊແລະພຣະເຈົ້າແລ້ວ ພຣະເຈົ້າກໍສົ່ງງູມາຕອດພວກເຂົາຕາຍຫລາຍຄົນ. ພວກເຂົາກໍແລ່ນມາຫາໂມເຊໃຫ້ໂມເຊທູນຂໍຕໍ່ພຣະເຈົ້າ. ເມື່ອທູນຂໍແລ້ວພຣະເຈົ້າກໍໄດ້ກ່າວຕໍ່ໂມເຊວ່າຈົ່ງເຮັດຮູບງູຕົວນຶ່ງຕິດໄມ້ໄວ້ເພື່ອໃຫ້ຄົນທັງຫລາຍຫລຽວເຫັນ. ໂມເຊກໍຈຶ່ງເຮັດຮູບງູດ້ວຍທອງສຳຣິດແລະຕອກຕິດໃສ່ໄມ້ແລ້ວກໍຍົກຂຶ້ນ. ຖ້າຜູ້ໃດຫາກຖືກງູຕອດກໍໃຫ້ເຂົາຫລຽວເບິ່ງງູນັ້ນ ແລ້ວເຂົາຈະບໍ່ຕາຍ. ກະຊວງສາທາຣະນະສຸກຢູ່ໃນໂລກນີ້ສ່ວນຫລາຍກໍຈະໃຊ້ສັນຍາລັກອັນນີ້. ປະເທດລາວກໍໃຊ້ສັນຍາລັກນີ້ເຊັ່ນກັນຄື **ຮູບງູກ້ຽວໄມ້ກາງແຂນ.** ສິ່ງນີ້ສະແດງເຖິງຄວາມຮັກຂອງພຣະເຈົ້າຜູ້ຊຶ່ງມີຄວາມຮັກຕໍ່ມວນມະນຸດທັງຫລາຍ.

ໂຢຮັນ ຍັງໄດ້ເວົ້າເຖິງຄວາມຮັກຂອງພຣະເຈົ້າວ່າ: "ເພາະວ່າ ພຣະເຈົ້າຊຶ່ງຮັກໂລກຈຶ່ງໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ເຊື່ອແລະວາງໃຈໃນພຣະເຢຊູຜູ້ນັ້ນຈະບໍ່ຈິບຫາຍແຕ່ຈະມີຊີວິດອັນຕລອດໄປເປັນນິດ." (3:16)
ພວກເຮົາທຸກຄົນ ພ້ອມແລ້ວທີ່ຈະເລີ້ມຕົ້ນຊີວິດໃຫມ່, ຊຶ່ງຊີວິດໃຫມ່ນັ້ນພວກເຮົາສາມາດພົບໄດ້ທີ່ພຣະເຢຊູພວກເຮົາສາມາດເກີດຈາກເບື້ອງເທິງໄດ້ໃນວັນນີ້. ຖ້າພວກເຮົາຫາກຕ້ອນຮັບພຣະອົງ, ພຣະອົງຈະຊົງມອບຄວາມລອດພົ້ນໃຫ້ແກ່ພວກເຮົາທັນທີ

**<u>ຄຳຖາມ</u>**

1. ເມື່ອທ່ານຫາກສັງເກດເບິ່ງການສົນທະນາແລະການບໍ່ຮັບເອົາພຣະເຢຊູຂອງນີໂກເດມໃນເວລານັ້ນ, ທ່ານມີແນວຄິດຢ່າງໃດ?

2. ພຣະເຢຊູກ່າວວ່າຢ່າງໃດໃນການສົນທະນາກ່ຽວກັບການບັງເກີດໃຫມ່ໃນພຣະວິນຍານ? ທ່ານຍັງຄິດເຖິງຈຸດໃດອີກແດ່ບໍ່ກ່ຽວກັບການເກີດໃຫມ່ໃນພຣະຄັມພີ? ການເກີດໃຫມ່ມີຂັ້ນຕອນຢ່າງໃດແດ່?

3. ພຣະເຢຊູບໍ່ໄດ້ໃຫ້ຄຳຮັບປະກັນໃດໆແກ່ນີໂກເດມກ່ຽວກັບຊີວິດອັນຕລອດໄປເປັນນິດ ແຕ່ພຣະອົງຊົງກ່າວເຖິງຣາຊອານາຈັກຂອງພຣະເຈົ້າ. (ໂຢຮັນ 3:5) ຣາຊອານາຈັກຂອງພຣະເຈົ້າແມ່ນຫຍັງ? ເປັນຫຍັງພຣະເຢຊູຈຶ່ງສົນທຽບວ່າຖ້າຜູ້ໃດໄດ້ຮັບຄວາມລອດ ຜູ້ນັ້ນຈະໄດ້ເຂົ້າໄປໃນຣາຊອານາຈັກຂອງພຣະອົງ?

4. ພວກເຮົາບໍ່ໄດ້ກໍ່ສ້າງຣາຊອານາຈັກຂອງພຣະເຈົ້າ ແຕ່ພວກເຮົາຈະໄດ້ຮັບເປັນມໍຣະດົກຂອງພວກເຮົາໃນຖານະທີ່ພວກເຮົາບັງເກີດໃຫມ່ແລ້ວ. ແມ່ນຫຍັງຄືສິ່ງທີ່ນຳພາພວກເຮົາໃຫ້ເຂົ້າໄດ້?

5. ເຣື່ອງລາວຂອງນີໂກເດມບໍ່ໄດ້ສິ້ນສຸດລົງໃນ ໂຢຮັນ ບົດທີ 3 ພຽງທີ່ນີ້ (ເບິ່ງໃນ 7:50-51; 19:39-41) ລາວຍັງສືບຕໍ່ຊອກສແວງຫາອີກຕໍ່ໄປ. ໃນໂຢຮັນ 19:39 ພວກເຮົາຈະເຫັນລາວມາການບຕໍ່ສົບຂອງພຣະເຢຊູ. ທ່ານເຄີຍຄິດບໍ່ວ່າເມື່ອເວລາທ່ານເວົ້າເຣື່ອງພຣະເຢຊູໃຫ້ເຂົາຟັງແລ້ວ ເຂົາຈະບໍ່ຕັດສິນໃຈໃນເວລານັ້ນໂລດ ແຕ່ພາຍຫລັງມາມີວັນນຶ່ງພຣະວິນຍານຈະທຳງານໃນຈິດໃຈຂອງພວກເຂົາ.

*ດຣ. ບຸນໂຣມ ພົມມະຈັນ*

# ບົດຮຽນທີ 3
# ພົບກັບພຣະຜູ້ຊ່ວຍຂອງໂລກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 4:1-30, 39-42

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຢຮັນ 4:1-42

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຄຣິດໄດ້ຍອມຖວາຍຕົນເອງແລະເສັ້ນທາງຂອງພຣະອົງເພື່ອທຸກຄົນທີ່ຕ້ອນຮັບເອົາພຣະອົງ, ແມ່ນວ່າຊີວິດຜ່ານມາຂອງເຂົາຈະເປັນຢ່າງໃດກໍຕາມ.

**ຄຳຖາມເພື່ອສຳຣວດ:** ຖ້າທ່ານສາມາດເວົ້າໂດຍກົງກັບພຣະເຢຊູໄດ້? ທ່ານຈະອະທິບາຍເຣື່ອງຊີວິດຂອງທ່ານແລະການພົບພຣະເຢຊູຢ່າງໃດໃຫ້ຜູ້ອື່ນເຫັນ?

**ຈຸດປະສົງຂອງບົດຮຽນ:** ເພື່ອຕິດຕາມຄວາມໝາຍໃນການສົນທະນາລະຫວ່າງພຣະເຢຊູ ແລະຍິງຊາວຊະມາເຣັຽ ແລະນຳມາໃຊ້ຕໍ່ບຸກຄົນທີ່ມີຄວາມສັມພັນກັບພຣະເຢຊູ.

**ສຶກສາຄົ້ນຄ້ວາ ແລະຈຸດເນັ້ນໜັກ**

- ❖ ຢັ້ງຢືນວ່າພຣະຄັມພີມີອຳນາດໃນການນຳພາຊີວິດແລະການປ່າວປະກາດ
- ❖ ແບ່ງປັນພຣະກິດຕິຄຸນໃຫ້ແກ່ທຸກຄົນ
- ❖ ເສີມຂຍາຍການເຕີບໃຫຍ່ ແລະ ເພີ້ມພູນຄວາມເຊື່ອ
- ❖ ຮວບຮວມຄອບຄົວຂອງພຣະເຈົ້າໃຫ້ມີການຕັດສິນໃຈໃນການຮັບໃຊ້
- ❖ ຍົກສູງທຸກຄົນ ເພາະທຸກຄົນຖືກສ້າງຕາມແບບຂອງພຣະເຈົ້າ

## ຄຳນຳ

ຂ້າພະເຈົ້າເກີດຂຶ້ນມາ ແລະຈະເຣີນເຕີບໃຫຍ່ໃນສາສນາພຸດ, ຂ້າພະເຈົ້າໄດ້ຕໍ່ສູ້ກັບຄວາມຫຍຸ້ງຍາກສັບສົນໃນຄອບຄົວຫລາຍທີ່ສຸດ. ແມ່ຂອງຂ້າພະເຈົ້າເສັຍຊີວິດເວລາອາຍຸພຽງ 3 ປີ. ອ້ອມຮອບຄອບຄົວຂອງຂ້າພະເຈົ້າພາກັນນັບຖືສາສນາພຸດທັງໝົດ. ຂ້າພະເຈົ້າເຄີຍບວດເປັນຈົວ, ເຄີຍບວດເປັນຄູບາເມື່ອອາຍຸຊາວເອັດປີ. ສິ່ງທີ່ຂ້າພະເຈົ້າເຮັດທັງໝົດແມ່ນຊອກສແວງຫາຄວາມຮັກແລະຄວາມລອດພົ້ນ.

ຂ້າພະເຈົ້າຄົງຈະລອດພົ້ນບໍ່ໄດ້ເພາະຂ້າພະເຈົ້າບໍ່ມີອັນໃດຈະນຳມາຖວາຍພຣະສົງເໝືອນກັບຄົນທີ່ເຂົາຮັ່ງມີ. ຂ້າພະເຈົ້າບໍ່ຮູ້ວ່າພຣະພຸດຈະຮັບຟັງຄຳອະທິຖານຂອງຂ້າພະເຈົ້າຫລືບໍ່. ແຕ່ເມື່ອຂ້າພະເຈົ້າໄດ້ພົບກັບອົງພຣະເຢຊູຄຣິດທີ່ສູນອົພຍົບ ໜອງຄາຍ ປະເທດໄທ ປາກົດວ່າພຣະອົງຊົງຟັງຄຳອະທິຖານ ພຣະອົງມີຄວາມຮັກທີ່ຂ້າພະເຈົ້າຕ້ອງການນັ້ນ ແລະແລ້ວຂ້າພະເຈົ້າກໍໄດ້ເຊີນພຣະອົງເຂົ້າມາເປັນພຣະເຈົ້າໃນຊີວິດຂອງຂ້າພະເຈົ້າ.

ຈົ່ງອ່ານປວັດຂອງຍິງຊາວຊະມາເຣັຍ ໂຢຮັນ 4:7-30

## ຈົ່ງພິຈາຣະນາເບິ່ງວ່າທ່ານເປັນຂອງຜູ້ໃດໃນເຣື່ອງນີ້?

ການເດີນທາງໄລຍະໄກຂອງພຣະເຢຊູ, ພຣະອົງໄດ້ປົ່ນປົວຊີວິດຂອງຍິງຊາວຊະມາເຣັຽຄົນນຶ່ງ ແລະກໍໄດ້ປົ່ນປົວໝົດທັງໝູ່ບ້ານ. ຍິງຄົນນີ້ກົງກັນຂ້າມກັບນີໂກເດມທີ່ພວກເຮົາໄດ້ສຶກສາຜ່ານມາ. ນີໂກເດມເປັນຜູ້ຊາຍ, ເປັນຫົວໜ້າພວກຍິວ, ເປັນຄົນມີສັງຄົມສູງ, ເປັນຄົນນັບຖືສາສນາ, ເປັນອາຈານສອນສາສນາ, ເປັນຄົນມີການສຶກສາສູງ. ຍິງຄົນ

ນີ້ເປັນຄົນຊາວຊະມາເຣັຽ, ເປັນຄົນທີ່ສັງຄົມຊາວຢິວປະຕິເສດ, ເປັນຄົນທີ່ບໍ່ມີຄວາມເຊື່ອ ເພາະຊາວຊະມາເຣັຽຈະບໍ່ມີສາສນາເປັນຫລັກ, ເປັນຄົນຖືກຊາວບ້ານລັງກຽດ, ເປັນຄົນທີ່ມີຈະຣິຍາຕໍ່າ, ເປັນຄົນທີ່ມີຜົວເຖິງຫ້າຄົນແລ້ວ.

ເມື່ອອ່ານເຣື່ອງຍິງຊາວຊະມາເຣັຽນີ້ແລ້ວ ທ່ານຄິດວ່າທ່ານເປັນໃຜໃນເຣື່ອງນີ້: ທ່ານເປັນສາວົກຂອງພຣະເຢຊູບໍ່? ທ່ານເປັນຍິງຊາວຊະມາເຣັຽບໍ່? ທ່ານເປັນຊາວເມືອງບໍ່? ການຊົງໄຖ່ໄດ້ເກີດແກ່ທ່ານແລ້ວ ແລະຊາວບ້ານຊາວເມືອງເດ?

ທ່ານເຫັນຄວາມອິດເມື່ອຍຫລືຄວາມສົນໃຈຂອງພວກສາວົກບໍ່? ທ່ານເຄີຍຄິດເຫມືອນດັ່ງຍິງຄົນນີ້ຫລືບໍ່. ລາວມີບັນຫາສໍາລັບຕົວລາວເອງ ແຕ່ອອກໄປທຸກງບ່ອນເພື່ອພຣະເຈົ້າ. ທ່ານເຄີຍຄິດວ່າທ່ານເປັນຊາວບ້ານຊາວເມືອງທັມດາບໍ່? ເມື່ອໄດ້ຍິນແລ້ວກໍແລ່ນມາເບິ່ງເພື່ອຢາກເຫັນສິ່ງແປກໆເພື່ອບໍາລຸງສາຍຕາຊື່ງ.

ນາງເອກໃນເຣື່ອງນີ້ແມ່ນຜູ້ຍິງທີ່ເປັນແມ່ຮ້າງມາແລ້ວຫ້າເທື່ອ ແລະປັດຈຸບັນກໍຍັງບໍ່ໄດ້ຢູ່ກັບຜູ້ໃດ. ລາວກາຍມາເປັນນາງເອກໄດ້ຢ່າງໃດ? ການຕິດຕໍ່ຂອງລາວກັບພຣະເຢຊູປ່ຽນແປງລາວ, ປົດປ່ອຍລາວໃຫ້ລາວໄດ້ມີເປົ້າຫມາຍຂອງຊີວິດແບບໃຫມ່ ໂດຍສະເພາະລາວໄດ້ແບ່ງປັນຄວາມຮັກຂອງພຣະເຈົ້າໃຫ້ກັບຄົນອື່ນ. ບໍ່ມີບັນຫາຫຍັງ ເຖິງແມ່ນວ່າສາວົກຂອງພຣະເຢຊູຈະເຂົ້າໄປໃນເມືອງແລ້ວກໍຕາມ, ບາງຄັ້ງພວກນີ້ຄົງຈະບໍ່ເວົ້າເຖິງເຣື່ອງພຣະເຢຊູຊໍ້າ. ໃນເວລານີ້ພວກສາວົກຄົງຈະສົນໃຈແຕ່ເຣື່ອງອາຫານເທົ່ານັ້ນ. ແຕ່ອົງພຣະເຢຊູທຸກຄັ້ງພຣະອົງຈະຄິດເຖິງການປູກຝັງ ແລະການເກັບກ່ຽວຝ່າຍຈິດວິນຍານຢູ່ສເມີ.

**ອັນຕະລາຍສໍາລັບພວກເຮົາ**: ການເປັນນັກບໍຣິໂພກດ້ວຍວັດຖຸສິ່ງຂອງໃນໂລກນີ້ຫລາຍຈົນເກີນໄປ ບາງຄັ້ງຈົນບໍ່ສາມາດຈະບໍຣິໂພກພຣະຄໍາຂອງພຣະເຈົ້າເຂົ້າໄປໄດ້ອີກ.(ມັດທາຍ) 4:4 "ມະນຸດຈະບໍ່ລ້ຽງຊີວິດດ້ວຍອາຫານສິ່ງດຽວແຕ່ລ້ຽງດ້ວຍພຣະທັມທຸກຂໍ້ທີ່ອອກມາຈາກພຣະໂອດຂອງພຣະເຈົ້າ." ຖ້າພວກເຮົາຫາກລະລຶກເຖິງພຣະທັມຕອນນີ້ພວກເຮົາກໍຈະເຫັນຄວາມສໍາຄັນຂອງການບໍຣິໂພກສິ່ງຂອງຕ່າງໆ.

## <u>ຈົ່ງສໍາເຣັດວຽກງານທີ່ສໍາຄັນກ່ອນ</u> (4:1-4)

ການປ່າວປະກາດວຽກງານຂອງພຣະເຈົ້າ ພວກເຮົາຕ້ອງຮູ້ວ່າອັນໃດຄວນຈະມາກ່ອນມາລຸນ. ໂຢຮັນໄດ້ກ່າວເຖິງການເກັບກ່ຽວແມ່ນຈໍາເປັນທີ່ສຸດ. ໃນໂຢຮັນ 4:1-3 ພວກເຮົາເຫັນການປ່າວປະກາດຂອງສາວົກແລະພຣະເຢຊູໄດ້ຮັບຜົນດີທີ່ແຄວ້ນຢູເດັຽ. ເມື່ອພວກຟາຣີຊາຍໄດ້ຍິນດັ່ງນັ້ນກໍຮ້ອນຮົນໃຈ, ພຣະເຢຊູຈຶ່ງຫນີຈາກທີ່ນັ້ນກ່ອນ ເພາະພຣະອົງບໍ່ຢາກປະເຊີນຫນ້າກ່ອນເວລາຂອງພຣະອົງຈະມາເຖິງ.

ພວກສາວົກກໍມີຄວາມດີໃຈຫລາຍເພາະຈະໄດ້ກັບໄປແຄວ້ນຄາລີເລຖິ່ນເດີມຂອງຕົນ. ການເດີນທາງຈໍາເປັນຕ້ອງຜ່ານຊະມາເຣັຽ ເພາະ(1) ມີເສັ້ນທາງດຽວເທົ່ານັ້ນທີ່ຈະເດີນທາງງບົກຂຶ້ນໄປແຄວ້ນຄາລີເລ. (2) ພຣະອົງມີນັດກັບຍິງຄົນນຶ່ງທີ່ນໍ້າສ້າງຂອງເມືອງນຶ່ງຊື່ ຊີຄາ ແຂວງຊາມາເຣັຍ (ຝ່າຍຈິດວິນຍານ).

ພວກເຮົາເຄີຍມີຕາຕະລາງປະຈໍາຕົວຂອງພວກເຮົາກັບພຣະເຢຊູບໍ່? ຖ້າພວກເຮົາຫາກເຫັນກວ້າງໄກ ພວກເຮົາກໍຈະເຫັນໄກເຫມືອນກັບພຣະເຢຊູ ແລະກໍຈະມີການນັດຫມາຍທາງຈິດວິນຍານທຸກງວັນ. ເມື່ອສາວົກຈາກພຣະເຢຊູແລະເຂົ້າໄປໃນເມືອງເພື່ອຊື້ອາຫານແລ້ວ ພຣະອົງກໍເລີ່ມທໍາງານຂອງພຣະອົງ.

## ຫລີກລ້ຽງກົດຮີດຄອງປະເພນີເພື່ອຈິດວິນຍານ (4:5-9)

ເມື່ອໂຢຮັນກ່າວຄໍາວ່າ "ພຣະທັມຊົງບັງເກີດເປັນມະນຸດ"(1:14) ພຣະເຢຊູຊົງເປັນມະນຸດຮ້ອຍເປີເຊັນ. ພຣະອົງຊົງມີຮ່າງກາຍ ພຣະອົງຊົງອິດເມື່ອຍ (4:6-7) ຊົງຫິວອາຫານ (4:31) ເຫມືອນຢ່າງພວກເຮົາທຸກຄົນ. ພຣະອົງຊົງຫິວນ້ຳ ທີ່ເຫັນໄດ້ຈາກການຂໍດື່ມນ້ຳຈາກຜູ້ຍິງ (4:9)

ພວກເຮົາຄວນຮູ້ຈັກໃຈ້ແຍກລະຫວ່າງຮີດຄອງປະເພນີແລະຈິດວິນຍານເຫມືອນກັບອົງພຣະເຢຊູ ເພື່ອຫລີກຈາກການຕົກຢູ່ໃນວົງລ້ອມຂອງການຕິຕຽນຕ່າງໆ. ໃນເວລານີ້ພວກເຮົາເຫັນວ່າພຣະອົງໄດ້ກະທຳຜິດກົດປະເພນີ 2 ຂໍ້. (1) ພຣະອົງຜູ້ຊາຍບໍ່ຄວນເວົ້າກັບຜູ້ຍິງໃນທີ່ສາທາລະນະ. (2)ຄົນຢິວຈະບໍ່ສົນທະນາກັບຄົນຊາມາເຣັຽ ເພາະຄົນຊະມາເຣັຽເປັນຄົນທີ່ບໍ່ບໍຣິສຸດ.

ສາວົກຂອງພຣະອົງກໍຕົກໃຈ (4:27) ຍິງຊາວຊະມາເຣັຍຄົນນັ້ນກໍຕົກໃຈຊຶ່ງເຫັນໄດ້ໃນຄຳຖາມ (4:9) ຢ່າງໃດກໍຕາມເມື່ອສຶກສາເບິ່ງໃຫ້ດີກໆແລ້ວຈະເຫັນໄດ້ໃນຄວາມຮັກຂອງພຣະເຢຊູ. ພຣະອົງບໍ່ໄດ້ເຫັນຮີດຄອງປະເພນີແລະກົດລະບຽບຕ່າງໆ ເປັນສິ່ງທີ່ກີດຂວາງການຊ່ວຍເຫລືອທາງດ້ານຈິດວິນຍານຂອງພຣະອົງ. ແມ່ນໃຜເປັນຊາວຊະມາເຣັຽສຳລັບພວກເຮົາ? ພວກເຂົາແມ່ນໃຜ ເປັນຫຍັງພວກເຮົາຈຶ່ງໄປບໍ່ເຖິງພວກເຂົາ?

ພຣະເຢຊູບໍ່ເບິ່ງຄວາມບາບຂອງນາງ. ພຣະເຢຊູບໍ່ເບິ່ງຄວາມແຕກຕ່າງຂອງນາງ. ພຣະເຢຊູເບິ່ງວ່າແມ່ນໃຜເປັນຜູ້ທີ່ຕ້ອງການພຣະອົງຢ່າງແທ້ຈິງ.

## ດື່ມນ້ຳແຫ່ງຊີວິດ (4:10-30)

ພຣະເຢຊູກ່າວຕໍ່ຍິງນັ້ນວ່າ ຖ້າເຈົ້າຮູ້ວ່າຜູ້ທີ່ກຳລັງເວົ້າກັບເຈົ້າຢູ່ນີ້ແມ່ນໃຜ ເຈົ້າກໍຄົງຈະຂໍນ້ຳດື່ມຈາກເພິ່ນ.(4:10) ນ້ຳສ້າງເປັນບ່ອນຜລິດນ້ຳ, ນ້ຳກໍເປັນສິ່ງຈຳເປັນສຳລັບຊີວິດມະນຸດ. ແຕ່ໃນຄຳເວົ້າຂອງພຣະເຢຊູຕອນນີ້ເຮັດໃຫ້ນາງບໍ່ເຂົ້າໃຈນາງຈຶ່ງໄດ້ໂຕ້ຕອບຄືນ. ທ່ານບໍ່ມີອັນໃດຈະຕັກນ້ຳແລະນ້ຳສ້າງກໍເລິກທ່ານຈະເອົານ້ຳມາຈາກໃສ. ແລະ ນາງຍັງກ່າວຍ້ອນຄືນໄປເຖິງຢາໂຄບໃນສມັຍເດີມ. ພຣະເຢຊູຕອບນາງວ່າ "ໃຜກໍຕາມຖ້າດື່ມນ້ຳຈາກສ້າງນີ້ແລ້ວກໍຍັງຢາກ ອີກ. ແຕ່ຖ້າຜູ້ໃດດື່ມນ້ຳທີ່ເຮົາປະທານໃຫ້ນີ້ຈະບໍ່ຢາກອີກຈັກເທື່ອ. ພຣະເຢຊູໄດ້ປ່ຽນເຣື່ອງຄືພຣະອົງຊົງບອກໃຫ້ນາງໄປເອີ້ນຜົວຂອງລາວມາ. ນາງກໍປະຕິເສດທັນທີວ່ານາງບໍ່ມີຜົວ. ພວກເຮົາເຫັນໄດ້ວ່າພຣະອົງຊົງຮອບຮູ້ທຸກຢ່າງແລະນາງຄົນນັ້ນກໍຮັບຮູ້ພຣະອົງ ແລະການສົນທະນາກໍເລີຍໄປເຖິງການນະມັສການທີ່ພູນີ້ຫລືທີ່ກຸງເຢຣູຊາເລັມ. ພຣະອົງຊົງຕອບວ່າຈະຢູ່ໃສກໍແລ້ວແຕ່ຂໍໃຫ້ນະມັສການພຣະເຈົ້າດ້ວຍຈິດວິນຍານແລະຄວາມຈິງ. (4:23)

## ກ່າວດ້ວຍຄວາມຈິງຜູ້ອື່ນກໍຈະເຊື່ອດ້ວຍ (4:39-42)

ເມື່ອຍິງຄົນນັ້ນແລ່ນກັບເຂົ້າໄປໃນບ້ານຫລັງຈາກສົນທະນາກັບພຣະເຢຊູແລ້ວ. ສາວົກກໍເຊີນພຣະອົງຮັບປະທານອາຫານ (4:28-30) ພຣະອົງກໍໄດ້ຕອບພວກເຂົາວ່າຊີວິດເປັນສິ່ງສຳຄັນກວ່າອາຫານ. ພຣະອົງກໍຍັງບອກພວກເຂົາໃຫ້ເບິ່ງທົ່ງເພາະເຂົ້າກໍເຫລືອງແລ້ວ.(4:35)

ນາງຄົນນັ້ນເຊື່ອວ່າພຣະອົງເປັນພຣະເຈົ້າແລະເປັນພຣະເມຊີອາທີ່ພວກເຂົາກຳລັງລໍຄອຍ. ລາວເວົ້າເຖິງພຣະເມຊີອາທີ່ຮູ້ທຸກສິ່ງທຸກຢ່າງໃນຊີວິດຂອງລາວ, ບໍ່ແມ່ນແຕ່ທໍ່ນັ້ນ ຊີວິດຂອງພວກເຮົາພຣະອົງກໍຊົງຮູ້ເຫມືອນກັນ. ພຣະເຢຊູເຫນືອກວ່າຜູ້ທຳນວາຍ ແລະເຫນືອກວ່າຄຣູສອນ ຝູງຊົນທັງຫລາຍເຊື່ອໃນພຣະອົງເພາະພຣະອົງຊົງ ເປັນຜູ້ປົດປ່ອຍຊາວໂລກທັງຫລາຍ. (4:42)

ຜູ້ຄົນທີ່ມາເຊື່ອໃນພຣະອົງມີຢູ່ ສອງ ກໍຣະນີ:
(1) ເຮົາກ່າວຄວາມຈິງຂອງຊີວິດເຮົາ
(2) ເຮົາກ່າວຄວາມຈິງຂອງພຣະເຈົ້າ

__ຄຳຖາມ:__

1. ພຣະເຢຊູອອກຈາກແຄວ້ນຢູເດັຽເພື່ອມຸ້ງໄປແຄວ້ນຊະມາເຣັຽ. ພຣະເຈົ້າຊົງເອີ້ນເຮົາໃຫ້ໄປເຮັດອັນໃດແດ່ບໍ່?

2. ທ່ານຈະໃຊ້ເວລາຂອງທ່ານໄປນຳເອົາຄົນມາເປັນຄຣິສຕຽນບໍ່? ຫລືຈະໃຊ້ເວລາຂອງທ່ານຊ່ວຍຄຣິສຕຽນໃຫມ່ບໍ່?

3. ພຣະເຢຊູຖ່ອມຕົວຢ່າງໃດ ເມື່ອມາເຖິງຍິງຊາວຊະມາເຣັຽ? (4:6-7) ເພາະພຣະຄຳຂອງພຣະເຈົ້າທ່ານສາມາດຖ່ອມຕົວຂອງທ່ານໄດ້ບໍ່?

4. ຄົນຍິວບໍ່ປາກກັບຄົນຊະມາເຣັຽ. ແມ່ນໃຜເປັນຄົນຊະມາເຣັຽສຳລັບທ່ານ?

5. ການສາຣະພາບຂອງຍິງຄົນນີ້ ເຮັດໃຫ້ຄຳເວົ້າຂອງລາວມີປະສິດທິພາບ. (4:29) ທ່ານມີຫຍັງຈະສາຣະພາບບໍ່?

*ດຣ. ບຸນໂຮມ ພົມມະຈັນ*

## ບົດຮຽນທີ 4
## ຖວາຍກຽດແກ່ພຣະບຸດ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຢຮັນ 5:1-24
**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** ໂຢຮັນ ບົດທີ 5
**ຈຸດສໍາຄັນຂອງບົດຮຽນນີ້:** ພຣະເຢຊູປະກາດຕົນເອງວ່າເປັນພຣະບຸດຂອງພຣະເຈົ້າ ແລະຊົງລົງມາ ກະທໍາຕາມພຣະບິດາ.
**ຄໍາຖາມເພື່ອສໍາຣວດ:** ພວກເຮົາຈະຖວາຍກຽດແດ່ພຣະບຸດພຣະເຈົ້າຢ່າງໃດ?
**ຈຸດປະສົງຂອງບົດຮຽນ:** ເພື່ອຈະອະທິບາຍໃຫ້ເຫັນວ່າ ການຖວາຍກຽດແດ່ພຣະບຸດພຣະເຈົ້ານັ້ນ ພວກເຮົາຕ້ອງການຫຍັງແດ່?

**ສຶກສາຄົ້ນຄວ້າ ແລະ ເນັ້ນຫນັກ**

- ✓ ຢັ້ງຢືນວ່າ ພຣະຄັມພີມີອໍານາດນໍາພາໃນການດໍາເນີນຊີວິດ ແລະ ການປ່າວປະກາດ
- ✓ ແບ່ງພຣະກິດຕິຄຸນໃຫ້ແກ່ທຸກໆຄົນ
- ✓ ເສີມຂຍາຍການເຕີບໃຫຍ່ ແລະເພີ້ມເຕີມຄວາມເຊື່ອ
- ✓ ເຊື່ອຟັງແລະຮັບໃຊ້ພຣະເຢຊູທັງຮ່າງກາຍແລະຈິດວິນຍານ ແລະຄວາມນຶກຄິດທຸກຢ່າງ
- ✓ ຝຶກຝົນສະມາຊິກໃຫ້ກາຍເປັນຜູ້ຮັບໃຊ້

### ຄໍານໍາ

**ແມ່ນຫຍັງທີ່ພວກເຮົາຕ້ອງການຈາກພຣະເຈົ້າ?**

ຂ້າພະເຈົ້າມັກເຣື່ອງນຶ່ງທີ່ເລົ່າກັນມາວ່າ ມີມື້ນຶ່ງເກີດພາຍຸລົມຫົວກຸດພັດມາຢ່າງແຮງ. ແມ່ແລະລູກຊາຍກໍອອກໄປນອກເຮືອນໄປກອດແຫນ້ນຢູ່ຕົ້ນໄມ້ ແລະອີກມືເບື້ອງນຶ່ງກໍກອດລູກຢ່າງແຫນ້ນເຫມືອນກັນ. ລົມພັດຢ່າງຫນັກເປັນບາດໆ ແລະສຸດທ້າຍລົມຫົວກຸດກໍໄດ້ພັດເອົາລູກໄປທີ່ໃດບໍ່ຮູ້ ລາວຕົກໃຈຈຶ່ງຮ້ອງໃຫ້ພ້ອມກັບອະທິຖານອ້ອນວອນຕໍ່ພຣະເຈົ້າທັນທີວ່າ "ໂປດກະຣຸນາຂ້ານ້ອຍແດ່ທ່ອນ, ຂ້ານ້ອຍມີລູກຊາຍຄົນດຽວນີ້, ນໍາລາວຄືນມາໃຫ້ຂ້ານ້ອຍແດ່, ຖ້າຂ້ານ້ອຍໄດ້ລາວຄືນມາຂ້ານ້ອຍຈະຮັບໃຊ້ພຣະອົງຕລອດຊີວິດຂອງຂ້ານ້ອຍ

ບໍ່ພໍທີ່ໃດນາທີ ລົມກໍຫາຍໄປ ແລະລາວກໍເຫັນລູກຂອງລາວຢູ່ຕໍ່ຫນ້າຂອງລາວ ແລະລາວກໍຊາວມືໄປກອດລູກຂອງລາວດ້ວຍຄວາມດີໃຈ.

ບາງຄັ້ງພວກເຮົາກໍອະທິຖານຕໍ່ພຣະເຈົ້າໂດຍບໍ່ຕັ້ງໃຈ, ເມື່ອພຣະເຈົ້າຕອບຄໍາອະທິຖານແລ້ວກໍລືມໄປທີ່ສະເບດຊະທາ ຜູ້ກຽວໄດ້ຮັບການປິ່ນປົວຝ່າຍຮ່າງກາຍ ແຕ່ຍັງບໍ່ທັນໄດ້ປິ່ນປົວທາງດ້ານຈິດວິນຍານ

**ພວກເຮົາຕ້ອງການຫຍັງຈາກພຣະເຈົ້າ ?** (5:1-9)

ພວກເຮົາຈະເຫັນວ່າໃນສ່ວນຕົວແຕ່ລະບຸກຄົນພຣະເຢຊູຍັງເປັນຫ່ວງເປັນໃຍ. ຫລັງຈາກທີ່ພຣະອົງໄດ້ພົບຜູ້ຍິງທີ່ນໍ້າສ້າງແລ້ວ (ໂຢຮັນ 4) ພຣະອົງກໍໄດ້ມຸ້ງຫນ້າສູ່ກຸງເຢຣູຊາເລັມທັນທີ ໃນທີ່ນັ້ນມີສະແຫ່ງນຶ່ງ ຊື່ງມີຄົນປ່ວຍເປັນຈໍາ

ນວນຫລວງຫລາຍເຊັ່ນ ຄົນຕາບອດ, ຄົນຂາເສັ້ງ, ຄົນຂາລີບ ແຂນລີບ ເພື່ອມາລໍຖ້ານ້ຳເລື່ອນຂື້ນມາຖືກ. ລາວລໍຄວາມຫວັງຈະມາເຖິງຕົວຂອງລາວ ບໍ່ເວລາໃດກໍເວລານຶ່ງ. ທຸກວັນລາວກໍຄອງຄອຍວ່າວັນນັ້ນຈະມາເຖິງ.

ເມື່ອພຣະເຢຊູຊົງເຫັນຊາຍຄົນນັ້ນ ພຣະອົງກໍຖາມຊາຍຄົນນັ້ນວ່າ: ເຈົ້າຢາກດີພະຍາດບໍ່? (ຂໍ້ 6) ພຣະອົງຊົງຮູ້ດີວ່າລາວຕ້ອງການຢາກດີພະຍາດ ແຕ່ພຣະອົງກໍຈຳເປັນຕ້ອງຖາມ. ເໝືອນກັບຄຳຖາມທີ່ວ່າໃຜຢາກເປັນເຈົ້າຂອງເງິນລ້ານ? ເປັນຫຍັງຈຶ່ງຖາມຄຳຖາມນີ້ອອກມາ ແລະຄຳຕອບກໍຮູ້ແລ້ວວ່າທຸກຄົນຢາກເປັນ?

ພຣະເຢຊູເຫັນສິ່ງໃດສິ່ງນຶ່ງໃນຕົວຂອງຊາຍຄົນນີ້ ຄືລາວພະຍາຍາມຫລີກຄວາມຜິດ ລາວກ່າວຫາວ່າບໍ່ມີຜູ້ ໃດຈະຊ່ວຍລາວ. ພຣະເຢຊູຈຶ່ງຢາກໃຫ້ລາວຊ່ວຍຕົວເອງ ຄືບອກໃຫ້ລາວຍົກເອົາທີ່ນອນຂອງຕົນເອງແລ້ວ ໃຫ້ຍ່າງໄປ. ເມື່ອຊາຍຄົນນັ້ນຍົກເອົາທີ່ນອນຂອງຕົນ ພວກຟາຣີຊາຍກໍກ່າວຫາລາວວ່າ ການຍົກເອົາທີ່ນອນຂອງຕົນອອກໄປກໍແມ່ນການເຮັດຜິດຕໍ່ພຣະບັນຍັດ. ລາວກໍຕອບພວກເຂົາວ່າຜູ້ເຮັດໃຫ້ຂ້ອຍດີພະຍາດນັ້ນແຫລະເປັນຜູ້ບອກຂ້ອຍ (5:11)

ຊາຍຄົນນີ້ໄດ້ຮັບການປົວພະຍາດທາງດ້ານຮ່າງກາຍ ແຕ່ສ່ວນທີ່ດີເລີດນັ້ນລາວບໍ່ໄດ້ຈາກພຣະເຢຊູ. ພຣະເຢຊູມີເວລາຫວ່າງສຳລັບແຕ່ລະຄົນ. ຖ້າພວກເຮົາຫາກຍັງມີຄວາມເຈັບປວດ ຫວາດກົວ ພຣະເຢຊູຍັງມີເວລາສຳລັບພວກເຮົາ ແລະພຣະອົງຍັງມີຫລາຍສິ່ງຫລາຍຢ່າງທີ່ຈະໃຫ້ພວກເຮົາ ຂໍຢ່າວາງຂອບເຂດຂອງຄວາມສາມາດຂອງພຣະເຈົ້າ. ບາງຄັ້ງພວກເຮົາກໍຍັງໄດ້ອ້ອນວອນເພື່ອຜູ້ທີ່ຍັງບໍ່ທັນເຊື່ອ, ອ້ອນວອນໃຫ້ພຣະອົງປິ່ນປົວຄົນທີ່ບໍ່ທັນເຊື່ອແມ່ນບໍ່? ແລະການອ້ອນວອນຂອງພວກເຮົາກໍເຫັນຜົນອອກມາ.

ພຣະເຈົ້າຕ້ອງການທຸກພາກສ່ວນໃນຊີວິດຂອງເຮົາ--ທັງຮ່າງກາຍ, ທັງຈິດໃຈ ແລະແນວຄິດ. ທ່ານຈະສາມາດໃຫ້ພຣະອົງທັງໝົດໄດ້ບໍ່? ບາງຄົນກໍບອກວ່າຂໍໃຫ້ແກ້ໄຂເລື້ອງການເງິນເທົ່ານັ້ນກໍພໍແລ້ວ,.....ພຣະເຢຊູຕ້ອງການທັງໝົດໃນຊີວິດຂອງເຮົາ.

ຄຳຖາມຍັງຖາມຢູ່ເໝືອນເດີມວ່າພວກເຮົາຕ້ອງການຫຍັງຈາກພຣະເຈົ້າ? ປິ່ນປົວພະຍາດ, ແກ້ໄຂບັນຫາເຣື່ອງການເງິນ. ທ່ານຕ້ອງການແຕ່ທໍ່ນັ້ນບໍ່? ຫລືວ່າທ່ານຍັງຕ້ອງການທີ່ຈະຮູ້ຈັກເຣື່ອງຜູ້ເປັນທີ່ມາຂອງສິ່ງຕ່າງໆບໍ່? ພຣະເຢຊູຕ້ອງການທີ່ຈະປິ່ນປົວທາງຮ່າງກາຍ ແລະທາງດ້ານຈິດວິນຍານດ້ວຍ.

## <u>ພວກເຮົາຈະກະທຳຢ່າງໃດແດ່ເພື່ອພຣະເຈົ້າ ?</u> (5:10-15)

ເມື່ອພວກເຮົາເຂົ້າມາມີສ່ວນຮ່ວມກັບອົງພຣະເຢຊູຄຣິດແລ້ວ ພວກເຮົາຄວນຄິດວ່າພວກເຮົາຈະເຮັດຢ່າງໃດຕໍ່ໄປ. (ສຳລັບຜູ້ທີ່ເຊື່ອພຣະເຢຊູຢ່າງແທ້ຈິງ) ຊາຍຄົນນີ້ຄັ້ງທຳອິດອາດຈະເປັນຄວາມຜິດຂອງຄົນທົ່ວໄປທີ່ບໍ່ຊ່ວຍເອົາລາວໄປລົງນ້ຳ(5:7), ຄັ້ງທີສອງລາວຄົງຢາກຕີພຣະເຢຊູ ເພາະພຣະອົງບອກໃຫ້ລາວຍົກທີ່ນອນຂອງລາວໄປ. (5:11) ແຕ່ເມື່ອພຣະເຢຊູພົບກັບລາວອີກພຣະອົງຈຶ່ງບອກລາວວ່າຢ່າເຮັດບາບອີກ.(5:14)

ພຣະເຢຊູໃຊ້ຄຳວ່າ "ເຈົ້າດີພະຍາດແລ້ວ" ແທນທີ່ພຣະອົງຈະກ່າວວ່າເຈົ້າລອດແລ້ວ. ເມື່ອເບິ່ງໃນພຣະທັມມາຣະໂກ 2:1-12 ພຣະເຢຊູປິ່ນປົວຄົນເປັ້ຍ, ພຣະອົງຊົງກ່າວວ່າ "ລູກເອີຍ ຜິດບາບຂອງເຈົ້າໄດ້ຮັບອະພັຍແລ້ວ." ເມື່ອຄົນເປັ້ຍຫາຍດີພະຍາດແລ້ວລາວກໍປ່ຽນແປງ. ສ່ວນຄົນນີ້ເມື່ອຫາຍຈາກພະຍາດແລ້ວ ລາວກໍຍັງກະທຳບາບອີກຢູ່. ລາວບໍ່ຢາກຮັບຜິດຊອບໃນຊີວິດຂອງລາວເອງ. ລາວຮູ້ພຣະເຢຊູກໍແມ່ນຮູ້ວ່າເປັນຜູ້ປົວລາວບໍ່ແມ່ນຮູ້ໃນຖານະເປັນພຣະເຈົ້າຂອງລາວ.

ກົງກັນຂ້າມ, ມາພິຈາຣະນາເບິ່ງ ໂຢຮັນ 9:24-33 ຄົນຜູ້ນຶ່ງເຄີຍເປັນຄົນຕາບອດເມື່ອພຣະເຢຊູປິ່ນປົວລາວ ແລ້ວລາວກໍຖືກໂຈມຕີແບບດຽວກັນນີ້ລະ ແຕ່ລາວກໍພະຍາຍາມທີ່ຈະປົກປ້ອງພຣະເຢຊູ ແລະຍົກຍ້ອງພຣະເຢຊູ. ຈິດວິນຍານຈະເກີດຂຶ້ນມາກໍຍ້ອນຮ່າງກາຍໄດ້ຮັບການປິ່ນປົວ. ເຂົ້າສ່ວນຮ່ວມກັບພຣະເຢຊູໝາຍເຖິງການຮັບຜິດຊອບໃນການກະທຳທຸກຢ່າງແລະການຕັດສິນໃຈດ້ວຍ.

ທຸກຄົນມີແນວຄິດແຕກຕ່າງກັນ, ບາງຄົນກໍບໍ່ຢາກດີພະຍາດ, ບາງຄົນກໍຢາກດີ, ຄິດວ່າພໍຫົນໄດ້ກໍຫົນໄປກາຍເປັນເຫຍື່ອຂອງມານໄປຕລອດຊີວິດກໍມີ. ເຖິງແມ່ນຈະມີຜູ້ທີ່ມາຊ່ວຍກໍຕາມເຂົາກໍຍັງຢາກໃຊ້ຕາມວິຖີຊີວິດເຊັ່ນເດີມຂອງເຂົາ, ໜ້າເສັຍໃຈ ! ! !

**<u>ພຣະເຈົ້າຕ້ອງການຫຍັງຈາກເຮົາ? ແລະເຮົາຄວນເຮັດຫຍັງເພື່ອພຣະອົງ?</u>** (5:16-24)

ພວກຢິວທີ່ເປັນນັກທັມ, ພວກນັກສາສນາເມື່ອເຫັນພຣະເຢຊູກະທຳເຊັ່ນນັ້ນກໍພາກັນຮ້ອນຮົນໂກດເຄືອງ ຈຶ່ງພາກັນຫາເຣື່ອງໃສ່ພຣະເຢຊູວ່າພຣະອົງບໍ່ຮັກສາຂະນົບທັມນຽມຂອງຊາວຢິວ, ທຳງານແມ້ກະທັ້ງເປັນວັນຊະບາໂຕ.

ພວກເຮົາຕ້ອງເຂົ້າໃຈຂໍ້ນີ້ໃຫ້ທ່ອງແທ້, ບໍ່ແມ່ນວັນຊະບາໂຕແລ້ວຈະເຮັດອັນໃດບໍ່ໄດ້. ຕົວຢ່າງ: ຖ້ານ້ຳຮົ່ວໃສ່ເຮືອນເຮົາຈະເຮັດຢ່າງໃດ?......... ເຮົາໄປປິກນິກຈຳເປັນຕ້ອງໄດ້ປີ້ງຊີ້ນ, ປີ້ງໄກ່ ເຮົາຈະເຮັດຢ່າງໃດ?.....ເມື່ອມີງົວຫລືຄວາຍຕົກສ້າງເຮົາຈະທຳຢ່າງໃດ?......... ໃນທີ່ນີ້ກໍໝາຍຄວາມວ່າໃຫ້ເຮົາເຂົ້າໃນການຮັກສາວັນຊະບາໂຕ.

ພຣະເຢຊູຊົງກ່າວກັບພວກຢິວທັງຫລາຍວ່າ ພຣະອົງຈະກະທຳທຸກຢ່າງທີ່ພຣະບິດາຊົງກະທຳ. ແລະພວກເຂົາກໍຈະປລາດໃຈໃນການກະທຳຂອງພຣະອົງ. ພຣະບິດາທຳງານທຸກວັນຕລອດປີ ແລະອົງພຣະເຢຊູກໍຈະກະທຳເຊັ່ນນັ້ນ. ພຣະອົງຍັງໄດ້ກ່າວເຖິງພຣະອົງເອງໃນຄຳວ່າ "ພຣະບຸດ." (5:19-24)

ໃນຄວາມຮັບຜິດຊອບຂອງພວກເຮົາຕໍ່ພຣະເຢຊູ, ພວກເຮົາຈະເລືອກເອົາຊີວິດຫລືຄວາມຕາຍ. ອັນໃດທີ່ພວກເຮົາຈະຕັດສິນໃຈເລືອກເອົາ?

**<u>ຄຳຖາມ</u>**

1. ເປັນຫຍັງພຣະເຢຊູຈຶ່ງຖາມຊາຍຄົນນັ້ນວ່າເຈົ້າຢາກດີພຍາດບໍ່? (5:6)

2. ມີທາງໃດແດ່ທີ່ມະນຸດຜິດພາດໃນການຮັບຜິດຊອບຕໍ່ຊີວິດຂອງຕົວເອງ? (5:7; 5:11) ທ່ານຈະເປັນຜູ້ນຶ່ງບໍ່ທີ່ຈະເປັນຜູ້ທີ່ບໍ່ຮັບຜິດຊອບໃນຊີວິດຂອງຕົນເອງ? ທ່ານຈະປ່ຽນແປງບໍ່? ເມື່ອໃດທ່ານຄິດວ່າຈະປ່ຽນໄດ້?

3. ໃນປວັດສາດຜ່ານມາ, ຄຣິສຕຽນເຄີຍມີແນວຄິດອະຄະຕິຕໍ່ພວກຢິວບໍ່? ທ່ານເຄີຍຄິດອະຄະຕິຕໍ່ພວກເຂົາບໍ່? ທ່ານຈະເຮັດຢ່າງໃດໃນຊີວິດຂອງທ່ານເອງ?

4. ຄຣິສຕຽນຍອມຮັບພວກຟາຣີຊາຍບໍ່ໃນທຸກວັນນີ້?

5. ຕາມທັມດາແລ້ວທ່ານເຄີຍໃຊ້ເວລາພັກຜ່ອນ, ສຳຣວດຕົວເອງ, ແລະກໍທຳງານອະດິເຣກແດ່ບໍ່?

*ດຣ. ບຸນໂຮມ ພົມມະຈັນ*

## ບົດຮຽນທີ 5
## ໝັ້ນໃຈໃນພຣະເຢຊູ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 6:1-15, 25-35, 66-69
**ຂໍ້ພຣະຄັມພີທັງໝົດສຳລັບບົດຮຽນນີ້:** ໂຢຮັນ 6
**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າຄົນສ່ວນຫລາຍແມ່ນຢາກໄດ້ດຽວນີ້ ແທນທີ່ຈະມີຊີວິດຜູກພັນກັບພຣະອົງເສັຽກ່ອນ.
**ຄຳຖາມເພື່ອການສຳຣວດ:** ນອກຈາກພຣະເຢຊູແລ້ວເຮົາຫວັງເພິ່ງໃຜອີກ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສອນໃຫ້ຮູ້ວ່າເຮົາຕ້ອງການພຣະອົງຫລາຍກວ່າສິ່ງຂອງ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ປະກາດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

**ບົດນຳ**

ພຣະທັມມັດທາຍໄດ້ບັນທຶກການອັສຈັນສອງຢ່າງທີ່ພຣະເຢຊູໄດ້ສຳແດງຄື; 1. ຊົງລ້ຽງຫ້າພັນຄົນດ້ວຍເຂົ້າຈີ່ຫ້າກ້ອນກັບປາພຽງສອງໂຕ. 2. ຊົງຍ່າງເທິງໜ້ານ້ຳ. ສຳລັບບົດຮຽນວັນນີ້ເຮົາຈະເວົ້າເຣື່ອງພຣະເຢຊູປຽບເໝືອນອາຫານທິບແຫ່ງຊີວິດທີ່ຄົນທັງຫລາຍບໍ່ສາມາດເບິ່ງເຫັນແລະເຂົ້າໃຈໄດ້ ເພາະສ່ວນຫລາຍຄົນເຮົາຈະເຫັນແຕ່ອາຫານຂອງຮ່າງກາຍ.

**ຊົງມີອາຫານແກ່ທຸກຄົນ** (6:1-15 )

ພຣະເຢຊູຊົງສຳແດງການອັສຈັນທີ່ເປັນໄປບໍ່ໄດ້ສຳລັບມະນຸດ ດ້ວຍວ່າບໍ່ມີໃຜດອກຈະລ້ຽງຄົນຕັ້ງຫ້າພັນຄົນດ້ວຍເຂົ້າຈີ່ຫ້າກ້ອນແລະປາພຽງສອງໂຕ ພຣະອົງເຮັດໄດ້ເພາະພຣະອົງຊົງເປັນພຣະເຈົ້າ ແລະເປັນພຣະເຈົ້າທີ່ໃຫ້ອາຫານການກິນແກ່ທຸກຄົນນັບຕັ້ງແຕ່ສ້າງໂລກມາ, ເຣື່ອງຂອງເຂົ້າຈີ່ຫ້າກ້ອນແລະປາສອງໂຕບໍ່ໄດ້ສິ້ນສຸດລົງໃນບ່ອນນີ້ ແລະຍັງສຳແດງການອັສຈັນທີ່ມີຄວາມໝາຍຢ່າງເລິກເຊິ່ງວ່າ ພຣະອົງຊົງເປັນບໍ່ເກີດແຫ່ງສັພສິ່ງຕລອດເຖິງເຂົ້າປາອາຫານຝ່າຍຮ່າງກາຍ ແລະຝ່າຍຈິດວິນຍານອີກ. *"ຫລັງຈາກນັ້ນພຣະເຢຊູໄດ້ສະເດັດຂ້າມທະເລສາບຄາລີເລ ຄືທະເລຕີເບີເຣັຽ ປະຊາຊົນຈຳນວນຫລວງຫລາຍໄດ້ຕິດຕາມພຣະອົງໄປ ເພາະເຂົາເຫັນໝາຍສຳຄັນທີ່ພຣະອົງຊົງເຮັດໃຫ້ແກ່ຄົນເຈັບປ່ວຍ"* (ຂໍ້ 1-2). ທະເລຕີເບີເຣັຽແມ່ນຝັ່ງຕາເວັນຕົກຂອງທະເລສາບຄາລີເລ, ຄົນຈຳນວນຫລວງຫລາຍຕິດຕາມພຣະອົງໄປບໍ່ແມ່ນຕາມເພາະວ່າພຣະອົງຊົງເປັນພຣະຜູ້ຊ່ອຍໃຫ້ລອດພົ້ນຈາກຄວາມບາບໃດໆ ເຂົາຕິດຕາມພຣະອົງເພາະເຂົາໄດ້ເຫັນພຣະອົງເຮັດການອັສຈັນມາກ່ອນ, ເຣື່ອງນີ້ບໍ່ແມ່ນເປັນແຕ່ພຽງສມັຍພຣະເຢຊູເທົ່ານັ້ນ ໃນສມັຍປັດຈຸ

ບັນນີ້ກໍຍັງມີຢ່າງຫລວງຫລາຍ ຄືຄົນທັງຫລາຍມັກຈະຕິດຕາມຜູ້ທີ່ເຮັດການອິດທິຣິດໂດຍໃຊ້ເວດມົນຄາຖາໃຫ້ຄົນອື່ນງືດ ພວກຄົນທີ່ງືດນັ້ນແຫລະມັກຈະຕິດຕາມຜູ້ໃຊ້ເວດມົນຄາຖາ. ພຣະຄັມພີບອກແຈ້ງແລ້ວວ່າຄົນທີ່ຕິດຕາມພຣະເຢຊູໃນເຂດທະເລຕີເບີເຣັຽ ລ້ວນແລ້ວແຕ່ພວກທີ່ເຫັນການອັສຈັນກັນທັງນັ້ນ.

ໃນເວລາທີ່ພຣະອົງກຳລັງກົ້ມໜ້າສັ່ງສອນສາວົກຢູ່ນັ້ນມີຄົນຈຳນວນຫລວງຫລາຍມາຫາພຣະອົງເພື່ອຢາກກິນເຂົ້າປາອາຫານ *"ຝ່າຍພຣະເຢຊູຊົງເງີຍພຣະພັກເຫັນຄົນເປັນຈຳນວນຫລາຍມາຫາພຣະອົງຊົງກ່າວກັບຟີລິບວ່າ ພວກເຮົາຈະຊື້ອາຫານທີ່ໃດໃຫ້ຄົນເຫລົ່ານີ້ກິນ"* (ຂໍ້ 5). ເຮົາເຫັນຄວາມຫ່ວງໃຍທີ່ພຣະເຢຊູມີຕໍ່ປວງຊົນຢ່າງແທ້ຈິງ, ພຣະອົງຊົງຮູ້ວ່າເຂົາມາເພື່ອຢາກກິນເທົ່ານັ້ນ ແຕ່ພຣະອົງກໍຊົງຫາງຫາຈັດຕຽມໃຫ້ທຸກຄົນທີ່ເຂົ້າມາຫາພຣະອົງ ດ້ວຍເຫດນີ້ພຣະອົງຈຶ່ງຖາມຟີລິບສາວົກຂອງພຣະອົງວ່າ *ຈະຊື້ອາຫານທີ່ໃດໃຫ້ຄົນເຫລົ່ານີ້ກິນ* ມີຄວາມໝາຍວ່າທຸກຄົນທີ່ເຂົ້າມາຫາພຣະອົງຈະບໍ່ພົບຄວາມອຶດຫິວ ອີກປະການນຶ່ງພຣະອົງຢາກຮູ້ວ່າຟີລິບຈະຄິດແນວໃດ? *"ທີ່ພຣະອົງຊົງກ່າວຢ່າງນັ້ນກໍເພື່ອຢາກລອງໃຈຟີລິບ ເພາະພຣະອົງຊົງຊາບແລ້ວວ່າຈະຕ້ອງເຮັດປະການໃດ"* (ຂໍ້ 6). ອີກປະການນຶ່ງພຣະເຢຊູຢາກສອນໃຫ້ສາວົກຂອງພຣະອົງໃຫ້ຮັກມະນຸດບໍ່ແມ່ນຈະຮັກແຕ່ພຣະເຈົ້າເທົ່ານັ້ນ, ພຣະເຈົ້າຊົງຮັກມະນຸດສັນໃດພຣະອົງກໍມີພຣະປະສົງໃຫ້ມະນຸດຮັກຊຶ່ງກັນແລະກັນສັນນັ້ນ.

*"ສາວົກຜູ້ນຶ່ງຄືອັນເດອານ້ອງຊາຍຂອງຊີໂມນເປໂຕ ໄດ້ທູນພຣະອົງວ່າ ຢູ່ທີ່ນີ້ມີເດັກນ້ອຍຄົນນຶ່ງມີເຂົ້າຈີ່ເຮັດດ້ວຍເຂົ້າຝ້າງຫ້າກ້ອນກັບປາສອງໂຕ ແຕ່ສິ່ງນີ້ຈະພໍໄດ້ຢ່າງໃດກັບຄົນຫລວງຫລາຍປານນີ້ ພຣະເຢຊູຊົງສັ່ງວ່າ ຈົ່ງໃຫ້ຄົນທັງຫລາຍນັ່ງລົງເສັຽ ທີ່ນັ້ນມີຫຍ້າຫລາຍ ຄົນເຫລົ່ານັ້ນຈຶ່ງນັ່ງລົງ ນັບແຕ່ຜູ້ຊາຍມີປະມານຫ້າພັນຄົນ"* (8-10). ເມື່ອພວກສາວົກກຳລັງຄິດວາງແຜນຢູ່ນັ້ນອັນເດອາໄດ້ບອກພຣະເຢຊູວ່າອາຫານທັງໝົດທີ່ມີຢູ່ໃນເວລານີ້ເຫັນແຕ່ເດັກນ້ອຍຜູ້ນຶ່ງມີແຕ່ເຂົ້າຈີ່ຫ້າກ້ອນກັບປາພຽງສອງໂຕເທົ່ານັ້ນ, ເບິ່ງຄ້າຍກັບວ່າສາວົກຟີລິບ ແລະສາວົກອັນເດອາບໍ່ຮູ້ຈັກພຣະເຢຊູເທົ່າໃດ ຫລືອາດເວົ້າໄດ້ວ່າຂາດຄວາມເຊື່ອໃນຍາມຍາກລຳບາກທັງສອງສະແດງຄວາມໝົດຫວັງວ່າຈະລ້ຽງຄົນເຫລົ້ານີ້ໄດ້ ແຕ່ພຣະເຢຊູບອກໃຫ້ຄົນທັງຫລາຍນັ່ງລົງ ອາດຈະມີຄວາມໝາຍວ່າຖ່ອມຕົວລົງຍອມຮັບພຣະອົງ *"ແລ້ວພຣະເຢຊູຊົງຈັບເຂົ້າຈີ່ນັ້ນ ເມື່ອໂມທະນາພຣະຄຸນແລ້ວກໍຊົງແຈກແກ່ບັນດາຄົນທີ່ນັ່ງຢູ່ນັ້ນ ສ່ວນປາກໍຊົງໃຫ້ເໝືອນກັນຕາມທີ່ເຂົາຕ້ອງການ ເມື່ອເຂົາກິນອີ່ມແລ້ວພຣະເຢຊູຊົງບອກພວກສາວົກວ່າ ຈົ່ງເກັບເອົາຕ່ອນຫັກທີ່ເຫລືອຈາກເຂົ້າຈີ່ທີ່ເຮັດດ້ວຍແປ້ງເຂົ້າຝ້າງຫ້າກ້ອນ ຊຶ່ງຄົນທັງຫລາຍໄດ້ກິນນັ້ນ ໄດ້ເຕັມສິບສອງບຸງ"* (ຂໍ້ 11-13). ເຣື່ອງນີ້ສອນໃຫ້ເຮົາຮູ້ວ່າ ຈົ່ງໄວ້ວາງໃນໃຈພຣະເຈົ້າໃນທຸກກໍຣະນີ, ໃຫ້ຮູ້ຄຸນຄ່າຂອງອາຫານບໍ່ໃຫ້ຕົກເຮັ່ຽເສັຽຫາຍ.

<u>ມີອາຫານດີກວ່ານັ້ນ</u> ( 6:25-36, 48-51 )

ຫລັງຈາກນັ້ນພຣະອົງຂ້າມຟາກທະເລເບື້ອງນັ້ນແລ້ວ ພວກປະຊາຊົນກໍມາຫາເພື່ອຕ້ອງການເຂົ້າປາອາຫານອີກຄັ້ງນີ້ພຣະອົງສເນີເອົາອາຫານທີ່ດີກວ່ານັ້ນໃຫ້ປະຊາຊົນ *"ເຂົາໄດ້ທູນພຣະອົງວ່າ ພຣະອາຈານເອີຍ, ທ່ານມາທີ່ນີ້ເມື່ອໃດ? ພຣະເຢຊູຊົງຕອບເຂົາວ່າ ເຮົາບອກພວກທ່ານຕາມຄວາມຈິງວ່າພວກທ່ານຊອກຫາເຮົາ ບໍ່ແມ່ນຍ້ອນໄດ້ເຫັນໝາຍສຳຄັນນັ້ນ ແຕ່ເພາະໄດ້ກິນເຂົ້າຈີ່ອີ່ມ"* (ຂໍ້ 25-26). ພຣະເຢຊູບໍ່ໄດ້ຕອບຄຳຖາມພວກເຂົາ ເພາະພຣະອົງຊົງຮູ້ວ່າເຂົາບໍ່ໄດ້ເຊື່ອພຣະອົງ ການທີ່ເຂົາຊອກຫາກໍເພາະເພື່ອປາກທ້ອງເຂົາເທົ່ານັ້ນ. ດັ່ງນັ້ນພຣະເຢຊູຈຶ່ງກ່າວວ່າ *"ຢ່າພະຍາຍາມຊອກຫາອາຫານທີ່ສູນສິ້ນໄປ ແຕ່ຈົ່ງຫາອາຫານທີ່ຕັ້ງໝັ້ນຢູ່ ຄືອາຫານສຳລັບຊີວິດອັນຕລອດໄປເປັນນິດ"* (ຂໍ້ 27). ເປັນຂອງທັມະດາທີ່ຄົນທັງຫລາຍຈຳຕ້ອງຊອກຫາອາຫານການກິນເພື່ອລ້ຽງປາກທ້ອງຂອງຕົນເອງ ແຕ່ວ່າທ້ອງນ້ອຍໆທີ່ມີນັ້ນບໍ່ຮູ້ຈັກອີ່ມຈັກເທື່ອກິນລົງໄປແລ້ວມື້ວານນີ້ມື້ນີ້ກໍຈະກິນອີກ ກິນແລ້ວມື້ນີ້ມື້ອື່ນກໍຈະກິນອີກ ຈະກິນຢ່າງນີ້ໄປຈົນເຖິງວັນສຸດທ້າຍແຫ່ງຊີວິດ ພຣະເຢຊູຮ້ອງອາຫານເຫລົ່ານີ້ວ່າ ອາຫານທີ່ສູນເສັຍໄປ ແປວ່າກິນບໍ່ຮູ້ອີ່ມ.

ດັ່ງນັ້ນພຣະອົງຈຶ່ງແນະນຳປະຊາຊົນໃຫ້ກິນອາຫານທີ່ຕັ້ງໝັ້ນຄົງ ແປວ່າເຊື່ອໃນພຣະອົງແລ້ວຈະມີອາຫານອັນຕລອດໄປເປັນນິດໃນຟ້າສວັນ.

ປະຊາຊົນບໍ່ເຂົ້າໃຈຄຳວ່າ *ອາຫານສຳລັບຊີວິດອັນຕລອດໄປເປັນນິດ* ເມື່ອເປັນເຊັ່ນນັ້ນເຂົາຈຶ່ງຖາມວ່າພຣະອົງວ່າ "*ພວກຂ້ານ້ອຍຈະຕ້ອງເຮັດປະການໃດ ຈຶ່ງຈະເຮັດກິຈການຂອງພຣະອົງໄດ້* "(ຂໍ້ 28). ພວກປະຊາຊົນເຂົ້າໃຈວ່າຈະຕ້ອງເຮັດກິຈການພຣະເຈົ້າເພື່ອໃຫ້ພຣະເຈົ້າພໍພຣະທັຍ "*ຝ່າຍພຣະເຢຊູຊົງຕອບເຂົາວ່ານີ້ແຫຼະແມ່ນກິຈການຂອງພຣະເຈົ້າຄືກິຈການທີ່ທ່ານທັງຫລາຍວາງໃຈ ໃນທ່ານທີ່ພຣະອົງຊົງໃຊ້ເຮົາມາ* "(ຂໍ້ 29). ແຕ່ພຣະເຢຊູຊົງບອກເຂົາວ່າກິຈການຂອງພຣະເຈົ້າຄືກ່ອນອື່ນແມ່ນໄວ້ວາງໃຈເຊື່ອໃນພຣະເຈົ້າ. ເຂົາຖາມພຣະເຢຊູອີກວ່າ "*ດັ່ງນັ້ນທ່ານຈະເຮັດໝາຍສຳຄັນອັນໃດ ເພື່ອພວກຂ້ານ້ອຍຈະໄດ້ເຫັນແລະວາງໃຈໃນທ່ານ ມີການອັນໃດທີ່ທ່ານຈະເຮັດແດ່ ບັນພະບຸຣຸດຂອງພວກຂ້ານ້ອຍໄດ້ກິນມານາໃນປ່າ ດັ່ງຄຳທີ່ຂຽນໄວ້ວ່າ ພຣະອົງຊົງປະທານອາຫານຈາກສວັນໃຫ້ເຂົາກິນ* "(ຂໍ້ 30-31). ເມື່ອຟັງຄຳຖາມຂອງປະຊາຊົນແລ້ວຂ້ອນຂ້າງໄປທາງຢາກພິສູດພຣະເຢຊູດ້ວຍ ເຂົາຂໍໃຫ້ພຣະເຢຊູສະແດງໝາຍສຳຄັນແລ້ວຈຶ່ງຈະເຊື່ອ ພ້ອມກັນນັ້ນເຂົາຍັງອ້າງເຖິງບັນພະບຸຣຸດເຂົາໄດ້ກິນມານາໃນປ່າ.

"*ພຣະເຢຊູຊົງຕອບເຂົາວ່າ ເຮົາບອກທ່ານຕາມຄວາມຈິງວ່າ ອາຫານທີ່ມາຈາກສວັນບໍ່ແມ່ນໂມເຊເອົາມາໃຫ້ພວກທ່ານ ແຕ່ພຣະບິດາຂອງເຮົາຊົງເປັນຜູ້ປະທານອາຫານອັນແທ້ ຊຶ່ງມາຈາກສວັນໃຫ້ແກ່ທ່ານທັງຫລາຍ ເພາະອາຫານທີ່ພຣະເຈົ້າຊົງປະທານນັ້ນ ຄືທ່ານທີ່ລົງມາຈາກສວັນແລະປະທານຊີວິດແກ່ໂລກ* "(ຂໍ້ 32-33). ພຣະອົງຊົງບອກເຂົາວ່າ ມານາທີ່ພວກບັນພະບຸຣຸດກິນນັ້ນບໍ່ແມ່ນມາຈາກໂມເຊ ແຕ່ແມ່ນມາຈາກພຣະເຈົ້າ, ອາຫານທີ່ມາຈາກພຣະເຈົ້າແມ່ນຕົວພຣະເຢຊູເອງລົງມາເປັນອາຫານສຳລັບໂລກ ມານາລົງມາຈາກສວັນເພື່ອມະນຸດຈະໄດ້ກິນອີ່ມທ້ອງສັນໃດ ພຣະເຢຊູກໍລົງມາຈາກສວັນເພື່ອມະນຸດຈະກິນອາຫານຝ່າຍຈິດວິນຍານສັນນັ້ນ. "*ເຂົາຈຶ່ງທູນພຣະອົງວ່າ ນາຍເຈົ້າເອີຍ, ຈົ່ງປະທານອາຫານໃຫ້ພວກຂ້ານ້ອຍສເມີ ພຣະເຢຊູຊົງຕອບເຂົາວ່າ ເຮົາເປັນອາຫານທິບແຫ່ງຊີວິດ ຜູ້ທີ່ມາຫາເຮົາ ຈະບໍ່ຢາກເຂົ້າ ແລະຜູ້ທີ່ວາງໃຈໃນເຮົາຈະບໍ່ຫິວນ້ຳຈັກເທື່ອ* "(ຂໍ້ 35-36). ເພື່ອການເພີ້ມເຕີມກະຣຸນາອ່ານຂໍ້ 48-51.

<u>ຊົງປະກາດພຣະທັມ</u> ( 6:66-69 )

ພຣະເຢຊູໄດ້ປະກາດເຣື່ອງຂອງພຣະເຈົ້າຢ່າງໜັກ ແລະເປັນການຍາກທີ່ຈະປະຕິບັດພວກສາວົກອີກກຸ່ມໜຶ່ງກໍພາກັນເວົ້າກັນວ່າ ຖ້ອຍຄຳຂອງພຣະອົງແຂງແຮງຈຶ່ງທົນຟັງບໍ່ໄດ້ແລະທໍ້ຖອຍ "*ດ້ວຍເຫດນັ້ນພວກລູກສິດຂອງພຣະອົງຫລາຍຄົນຈຶ່ງທໍ້ຖອຍ ບໍ່ຕິດຕາມພຣະອົງຕໍ່ໄປອີກ* "(ຂໍ້ 66). ພວກເຂົາເຊົາຕິດຕາມພຣະອົງເພາະເຂົາບໍ່ສາມາດເຮັດຕາມຄຳສອນຂອງພຣະອົງໄດ້. ບັນຫານີ້ຍັງລາມມາເຖິງເວລານີ້ເຊັ່ນດຽວກັນ ຫລາຍຄົນໜີໂບດເພາະທົນຟັງຄຳເທສນາອັນໜັກບໍ່ໄດ້ ແລະຍັງເປັນການຍາກທີ່ຈະປະຕິບັດຕາມຄຳເທສນາຂອງບັນດາອາຈານໃນໂບດ ດັ່ງນັ້ນພຣະເຢຊູຈຶ່ງຖາມພວກສາວົກທີ່ໃກ້ຊິດກັບເພິ່ນວ່າ "*ພວກທ່ານເດຢາກຖອຍໜີເໝືອນກັນຫລື* "(ຂໍ້ 67ຂ). ຄຳຖາມທີ່ພຣະເຢຊູຊົງຖາມສາວົກເປັນຄຳຖາມທີ່ຫວັງວ່າພວກສາວົກຈະເວົ້າວ່າ ພວກຂ້ານ້ອຍຈະບໍ່ຖອຍ, ໃນຄຳຖາມດຽວກັນແມ່ນຄຳຖາມທີ່ໃຫ້ໂອກາດແກ່ສາວົກວ່າ ຫາກພວກທ່ານຫລືໃຜຜູ້ນຶ່ງຢາກຖອຍໜີກໍເປັນໂອກາດຂອງທ່ານແລ້ວ. ໃນຂະນະທີ່ທຸກຄົນກຳລັງມີດງຽບຢູ່ນັ້ນ ສາວົກຜູ້ນຶ່ງຂອງພຣະອົງໄດ້ສະແດງເຖິງຄວາມຈົງຮັກພັກດີຕາງໜ້າສາວົກອື່ນໆໂດຍກ່າວວ່າ "*ນາຍເຈົ້າເອີຍ, ພວກຂ້ານ້ອຍຈະໜີໄປຫາຜູ້ໃດ ທ່ານມີຖ້ອຍຄຳຊຶ່ງໃຫ້ມີຊີວິດອັນຕລອດໄປເປັນນິດ ພວກຂ້ານ້ອຍເຊື່ອແລ້ວແລະຊາບວ່າທ່ານເປັນຜູ້ບໍຣິສຸດມາຈາກພຣະເຈົ້າ* "(ຂໍ້ 68-69). ຄຳຕອບຂອງເປໂຕນັ້ນເປັນຄວາມຈິງແທ້ ແລະເປັນຄວາມຈິງໃຈຂອງພວກສາວົກ ຈຶ່ງເວົ້າວ່າ *ພວກຂ້ານ້ອຍຈະໜີໄປຫາຜູ້ໃດ ທ່ານມີຖ້ອຍຄຳຊຶ່ງໃຫ້ມີ*

*ຊີວິດອັນຕລອດໄປເປັນນິດ* ແປວ່າ ພວກຂ້ານ້ອຍບໍ່ມີພຣະອື່ນຫລືທາງອື່ນອີກທີ່ຈະໃຫ້ຖ້ອຍຄຳອັນຕລອດໄປເປັນນິດຄື ພຣະອົງ, ດັ່ງນັ້ນພວກຂ້ານ້ອຍຈະບໍ່ຖອຍໄປຈາກພຣະອົງເລີຽ.

ເປໂຕໄດ້ສະແດງຄວາມຈິງຮັກພັກດີຈາກໃຈຂອງເພິ່ນ ທີ່ເຮັດໃຫ້ພຣະເຢຊູພໍພຣະທັຍໃນຄຳຕອບອັນໜັກແໜ້ນຂອງເປໂຕ, ດ້ວຍວ່າພວກສາວົກເຫລົ່ານີ້ຕິດຕາມພຣະເຢຊູບໍ່ຢາກກິນເຂົ້າຈີ່ອີ່ມຄືຄົນທີ່ຖອຍໜີໄປ. ຂ້າພະເຈົ້າຫວັງໃຈວ່າເຮົາທັງຫລາຍທີ່ຕິດຕາມພຣະເຢຊູເວລານີ້ຄົງຈະຕົກລົງກັບຄຳຕອບຂອງເປໂຕ, ການປະກາດພຣະທັມຂອງພຣະເຈົ້າຈຳເປັນ ຕ້ອງເວົ້າຄວາມເປັນຈິງທຸກຢ່າງ ແຕ່ຄົນທັງຫລາຍບໍ່ສາມາດຮັບຄວາມຈິງໄດ້ຈຶ່ງລ່າຖອຍໄປ ເຮົາກໍບໍ່ສົມຄວນຈະໄປວ່າໃຫ້ເພິ່ນດ້ວຍວ່າພຣະເຢຊູຊົງກ່າວຕໍ່ໄປວ່າ *"ເຮົານີ້ແຫລະ, ໄດ້ເລືອກພວກທ່ານສິບສອງຄົນໄວ້ບໍ່ແມ່ນບໍ່ ແລະຄົນນຶ່ງໃນພວກທ່ານຈະເປັນມານຮ້າຍ"* (ຂໍ້ 70). ມີຄວາມໝາຍວ່າພຣະອົງເປັນຜູ້ຊົງເລືອກໃຫ້ຕິດຕາມພຣະອົງຫາກພຣະ ອົງບໍ່ເລືອກຄົນນັ້ນກໍບໍ່ສາມາດຕິດຕາມພຣະອົງໄດ້, *ຄົນນຶ່ງ ໃນພວກທ່ານຈະເປັນມານຮ້າຍ* ໝາຍຄວາມວ່າສາວົກຕັ້ງສິບສອງຄົນ ມີແຕ່ຜູ້ດຽວເປັນມານຮ້າຍ ກໍບໍ່ຊື່ລ້າຍປານໃດ ແລະກໍຫວັງໃຈວ່າເຮົາທັງຫລາຍຈະບໍ່ແມ່ນຄົນນັ້ນ.

<u>ຄຳຖາມ:</u>

1. ທ່ານຄິດແນວໃດກັບເຂົ້າຈີ່ຫ້າກ້ອນແລະປາສອງໂຕສາມາດລ້ຽງໄດ້ຫ້າພັນຄົນ ແລະຍັງເຫລືອອີກສິບສອງກະບຸງ?

2. ເປັນຫຍັງພຣະເຢຊູຈຶ່ງລ້ຽງຄົນຫລາຍປານນັ້ນ?

3. ພຣະເຢຊູແນະນຳໃຫ້ເຂົາກິນອາຫານທີ່ດີກວ່ານັ້ນທ່ານເຂົ້າໃຈຢ່າງໃດ?

4. ເຮັດພາຣະກິດຂອງພຣະເຈົ້າກັບເຊື່ອພຣະເຈົ້າຕ່າງກັນຢ່າງໃດ?

5. ພຣະເຢຊູຊົງເປັນອາຫານລົງມາຈາກສວັນໝາຍຄວາມວ່າຢ່າງໃດ?

6. ເປັນຫຍັງຄົນທັງຫລາຍຈຶ່ງຖອຍໜີຈາກພຣະເຢຊູ?

7. ພວກສາວົກເວົ້າກັບພຣະເຢຊູແນວໃດ ເມື່ອຄົນອື່ນຖອຍໜີ?

*ດຣ. ທຸນພັນ ວົງສຸຣິດທ໌*

## ບົດຮຽນທີ 6
## ຕາຍແລ້ວຄືນມາອີກ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຢຮັນ 11:1-13, 17-27, 38-44
**ຂໍ້ພຣະຄັມພີທັງຫມົດສໍາລັບບົດຮຽນນີ້:** ໂຢຮັນ 11
**ຈຸດສໍາຄັນຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າພຣະເຢຊູຜູ້ໃຫ້ຊີວິດນິຣັນ ແກ່ທຸກຄົນທີ່ເຊື່ອ.
**ຄໍາຖາມເພື່ອການສໍາຣວດ:** ທ່ານເຊື່ອບໍ່ວ່າທຸກຄົນທີ່ເຊື່ອໃນພຣະເຢຊູຈະບໍ່ຕາຍຈັກເທື່ອ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສອນໃຫ້ຮູ້ວ່າອໍານາດການເອີ້ນຄົນຕາຍແລ້ວໃຫ້ຄືນມາເຮັດໃຫ້ເຮົາເພີ່ມຄວາມເຊື່ອໃນພຣະອົງ.

**ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ປະກາດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

### ບົດນໍາ

ສຸພາສິດລາວກ່າວວ່າເບິ່ງຊ້າງໃຫ້ເບິ່ງຫາງ ເບິ່ງນາງໃຫ້ເບິ່ງແມ່ ແມ່ນຄວາມຈິງແທ້ໆ ແມ່ເປັນແນວໃດລູກກໍມີຄວາມຄ້າຍຄືແມ່ແນວນັ້ນ, ພຣະເຢຊູຄຣິດພຣະເຈົ້າຂອງພວກເຮົາຄືນຊີບຢ່າງໃດຄົນທີ່ເຊື່ອພຣະອົງຈະຄືນຊີບສັນນັ້ນ. ການຄືນຊີບຂອງພຣະອົງນອກຈາກກ່ວາສະແດງຕົນເປັນພຣະເຈົ້າແລ້ວ ພຣະອົງຍັງເອີ້ນລາງຄົນໃຫ້ຄືນຊີບເພື່ອຈະເປັນບົດຮຽນສອນໃຈວ່າ ພຣະອົງນັ້ນແຫລະເປັນຕົ້ນກໍາເນີດຂອງຊີວິດ.

**ເວລາຂອງພະຣເຈົ້າ** (11:1-13)

ລາຊະໂລ, ນາງມາຣີອາ ແລະ ນາງມາທາ ສາມເອື້ອຍນ້ອງນີ້ນັບວ່າເປັນຜູ້ໃກ້ຊິດພຣະເຢຊູ ພວກສາສນາສາດສັນນະສູດວ່າຄອບຄົວນີ້ອາດເປັນຄອບຄົວມີແດ່ ແລະອາດເປັນຄອບຄົວນຶ່ງທີ່ສົ່ງເສີມພຣະເຢຊູໃນດ້ານເງິນຄໍາເພື່ອວຽກງານການປະກາດແຜ່ນດິນສວັນຂອງພຣະເຢຊູ ສັງເກດເຫັນນາງເອົານໍ້າມັນຫອມທົດສົງພຣະເຢຊູ ແລະເອົາຜົມຂອງນາງເຊັດຕາງຜ້າ. ນໍ້າມັນຫອມໄດ້ບົ່ງບອກວ່າເປັນຄອບຄົວມີເງິນ *"ແມ່ນນາງມາຣີອາຜູ້ນີ້ທີ່ເອົານໍ້າມັນຫອມສົງອົງພຣະຜູ້ເປັນເຈົ້າ ແລະໃຊ້ຜົມຂອງຕົນເຊັດພຣະບາດຂອງພຣະເຢຊູ"* (ຂໍ້ 2). ການທີ່ນາງຮັກແລະເທີດທູນຖວາຍກຽດແກ່ອົງພຣະຜູ້ເປັນເຈົ້າຢ່າງນີ້ເຮັດໃຫ້ຊື່ສຽງຂອງນາງເລື່ອງລືກັນໄປທຸກບ່ອນ ແລະຊື່ສຽງນາງຍາວນານມາເຖິງປັດຈຸບັນນີ້. ມື້ນີ້ສອງນ້ອງເອື້ອຍໄດ້ມາພຣະເຢຊູເພື່ອບອກເລົ່າເຖິງຄວາມເຈັບປ່ວຍຂອງລາຊະໂຣຜູ້ເປັນນ້ອງຊາຍທູນວ່າ *"ນາຍເຈົ້າເອີຍ, ເບິ່ງແມ ຜູ້ທີ່ທ່ານຮັກແພງນັ້ນ ກໍກໍາລັງປ່ວຍຢູ່"* (ຂໍ້ 3ຂ). ພາຍໃນຈິດໃຈແລ້ວທັງສອງເອື້ອຍນ້ອງນາເຊີນພຣະເຢຊູໄປຢ້ຽມຢາມແລະປິ່ນປົວລາຊະໂຣທີ່ບ້ານເບດທານີບ້ານຂອງພວກນາງທີ່ບໍ່ໄກຈາກເຢຣູຊາເລັມ ແຕ່ພຣະເຢຊູບໍ່ໄດ້ໄປທັນທີ, *"ເມື່ອພຣະເຢຊູໄດ້ຍິນດັ່ງນັ້ນແລ້ວກໍກ່າວວ່າການປ່ວຍນີ້ບໍ່ໄດ້ເຖິງແກ່ຄວາມຕາຍດອກ"* (ຂໍ້ 4ກ).

ສຳລັບມາຣີອາແລະມາທາເຫັນວ່ານ້ອງຊາຍປ່ວຍຢ່າງໜັກແລ້ວຈຶ່ງພາກັນມາຫາພຣະເຢຊູ ແຕ່ພຣະ ອົງກັບບອກ ພວກນາງວ່າລາວຈະບໍ່ເຖິງຄວາມຕາຍ ແຕ່ພາຍລຸນມາລາວກໍຕາຍ ເພື່ອໃຫ້ພຣະເຢຊູເອີ້ນລາວໃຫ້ຄືນມາຈາກຕາຍ.

ເຮົາຈະສັງເກດເຫັນວ່າພຣະເຢຊູຊົງຮັກຄອບຄົວນີ້ເປັນພິເສດ ໂດຍສເພາະແມ່ນຮັກລາຊະໂຣເໝືອນດັ່ງພຣະຄັມພີກ່າວ ມານັ້ນ ແຕ່ເຖິງພຣະອົງຈະຮັກລາຊະໂຣເປັນພິເສດຫລາຍປານໃດກໍຕາມ ພຣະອົງຍັງປ່ອຍໃຫ້ຄວາມເຈັບປວດມາທໍ ຣະມານລາຊະໂຣ, ໃນທຳນອງດຽວກັນພຣະອົງກໍຊົງຮັກພວກເຮົາທຸກຄົນບໍ່ນ້ອຍໄປກວ່າລາຊະໂຣ ພຣະອົງກໍຍັງ ປ່ອຍຄວາມເຈັບປວດມາຍັງເຮົາຄືກັນ ແນ່ນອນແທ້ລະພຣະອົງຈະຕ້ອງວ່າການເຈັບປ່ວຍຂອງເຮົາບໍ່ເຖິງແກ່ຄວາມ ຕາຍດອກ ເພາະວ່າເຖິງແມ່ນຕາຍໄປພຣະອົງກໍຈະເອີ້ນໃຫ້ເຮົາຟື້ນຄືລາຊະໂຣໄດ້. ດ້ວຍເຫດນີ້ພຣະອົງຈຶ່ງກ່າວຕອບ ມາຣີອາແລະມາທາວ່າ *"ການປ່ວຍນີ້ຈະບໍ່ເຖິງແກ່ຄວາມຕາຍດອກ ແຕ່ເກີດຂຶ້ນເພື່ອກຽດຕິຍົດຂອງພຣະເຈົ້າເພື່ອໃຫ້ ພຣະບຸດຂອງພຣະເຈົ້າຊົງໄດ້ຮັບກຽດຕິຍົດເພາະການປ່ວຍນີ້"* (ຂໍ້ 4). ມີຄວາມໝາຍວ່າພຣະເຢຊູຊົງຮັກລາຊະໂຣ ແບບພຣະເຈົ້າຮັກມະນຸດທົ່ວໄປ ການລໍຄອຍຂອງພຣະອົງມີຄວາມໝາຍເລິກເພາະສິ່ງທີ່ເກີດຂຶ້ນນີ້ຈະໄດ້ຖວາຍກຽດ ແດ່ພຣະເຈົ້າ.

ພຣະອົງບໍ່ໄດ້ສະເດັດໄປທັນທີແຕ່ຕ້ອງຖ້າອີກສອງວັນຈົນລາຊະໂຣຕາຍເສັຽກ່ອນພຣະອົງຈຶ່ງຈະໄປຫາລາຊະໂຣ, ນັກ ສາສນາສາດຜູ້ນຶ່ງກ່າວວ່າ ເຣື່ອງການເອີ້ນລາຊະໂຣຄືນມາຈາກຕາຍນີ້ເປັນຮູບພາບຂອງພຣະເຢຊູສະເດັດມາໃນໂລກ ນີ້ເພື່ອປຸກຈິດວິນຍານທີ່ຕາຍແລ້ວໃຫ້ເປັນຄືນມາອີກ. ສອງວັນຕໍ່ມາພຣະອົງຊົງກ່າວກັບສາວົກວ່າ *"ລາຊະໂຣເພື່ອນ ຂອງເຮົາກໍຫລັບໄປແລ້ວ ແຕ່ເຮົາຈະໄປເພື່ອຈະປຸກລາວໃຫ້ຕື່ນ"* (ຂໍ້ 11). ຄຳວ່າຫລັບໄປແລ້ວແປວ່າຕາຍແລ້ວ ແຕ່ ພວກສາວົກບໍ່ເຂົ້າໃຈຈຶ່ງກ່າວວ່າ *"ນາຍເຈົ້າເອີຍ, ຖ້າຜູ້ປ່ວຍນອນຫລັບ ລາວກໍຄົງຈະດີປ່ວຍ ສ່ວນພຣະເຢຊູກໍໄດ້ຊົງ ກ່າວເຖິງຄວາມຕາຍຂອງລາຊະໂຣ ແຕ່ພວກສາວົກຄຶດວ່າພຣະອົງຊົງກ່າວເຖິງການນອນຫລັບໃຫ້ຫາຍເມື່ອຍ ເຫດ ສັນນີ້ພຣະເຢຊູຈຶ່ງບອກເຂົາໂດຍແຈ່ມແຈ້ງວ່າ ລາຊະໂຣຕາຍແລ້ວ"* (ຂໍ້ 12ຂ- 14). ວັນເວລາແຫ່ງການສະແດງຣິດ ອຳນາດການເປັນພຣະເຈົ້າຂອງພຣະເຢຊູມາເຖິງແລ້ວພຣະອົງຈະພາພວກສາວົກໄປປຸກລາຊະໂຣໃຫ້ຄືນມາຈາກຕາຍ.

<u>ສະເດັດມາເພື່ອໃຫ້ຊີວິດ</u> (11:17-27 )

*"ເມື່ອພຣະເຢຊູສະເດັດມາເຖິງກໍຊົງເຫັນວ່າ ລາຊະໂຣຢູ່ໃນອຸບໂມງຝັງສົບໄດ້ສີ່ວັນແລ້ວ ອັນນຶ່ງ, ບ້ານເບດທາເນັຽ ນັ້ນຢູ່ ໃກ້ຈາກກຸງເຢຣູຊາເລັມປະມານພັນຫ້າຮ້ອຍວາ ພວກຢິວຫລາຍຄົນໄດ້ມາຫານາງມາທາແລະມາຣີອາເພື່ອເລົ້າ ໂລມ ໃຈເຂົາ ເນື່ອງດ້ວຍນ້ອງຊາຍຂອງເຂົາ"* (ຂໍ້ 17-19). ພຣະເຢຊູແລະພວກສາວົກເດີນທາງຈາກກຸງເຢຣູຊາເລັມ ມາຍັງ ບ້ານເບດທານີ ເພື່ອມາຢ້ຽມຢາມລາຊະໂຣຕາມຄຳຮ້ອງຂໍຂອງນາງມາທາແລະມາຣີອາໃນສີ່ວັນຕໍ່ມາ, ໃນເວ ລານັ້ນ ພວກຄົນຢິວທີ່ຮັກແພງກັບຄອບຄົວມາທາແລະມາຣີອາກໍໄດ້ມາເລົ້າໂລມໃຈພວກນາງທີ່ສູນເສັຽນ້ອງຊາຍໄປ. ໃນຂະນະມີຫລາຍຄົນກຳລັງເລົ້າໂລມໃຈຢູ່ນັ້ນ ມາທາກໍຫລຽວເຫັນພຣະເຢຊູສະເດັດມາຈຶ່ງຮ້ອງໄຫ້ຕໍ່ພຣະອົງວ່າ *"ນາຍ ເຈົ້າເອີຍ, ຖ້າທ່ານຢູ່ທີ່ນີ້ນ້ອງຊາຍຂອງຂ້ານ້ອຍຄົງບໍ່ຕາຍ"* (ຂໍ້ 21). ອາດມີຄວາມໝາຍວ່າຫາກພຣະອົງມາ ໄວກວ່ານີ້ນ້ອງຂອງຂ້ານ້ອຍຄົງບໍ່ຕາຽ ເພາະນາງແນ່ໃຈວ່າພຣະເຢຊູຈະບໍ່ປ່ອຍໃຫ້ລາຊະໂຣຜູ້ເປັນນ້ອງຊາຍຂອງ ນາງຕາຍ. ຄຳເວົ້າຂອງນາງມາທາເປັນຄວາມຈິງແທ້ເມື່ອພຣະເຢຊູຊົງຢູ່ກັບຜູ້ໃດຜູ້ນັ້ນຈະບໍ່ຕາຍ ແຕ່ເຖິງຈະຕາຍໄປ ກໍຕາມພຣະເຢຊູຜູ້ຊົງເປັນພຣະເຈົ້າເໜືອຄວາມຕາຍສາມາດເອົາຄົນໄປສີ່ວັນຄືລາຊະໂຣ ຄືນມາໄດ້.

ມາທາເວົ້າດ້ວຍຄວາມໝັ້ນໃຈວ່າພຣະເຢຊູເປັນພຣະບຸດທີ່ຮັກຂອງພຣະເຈົ້າ ນາງໄດ້ທູນຂໍພຣະເຢຊູໃຫ້ທູນຂໍຕໍ່ພຣະບິ ດາ ດັ່ງນັ້ນນາງຈຶ່ງເວົ້າວ່າ *"ແຕ່ບັດນີ້ກໍດີ, ຂ້ານ້ອຍຊາບວ່າສິ່ງໃດໆ ທີ່ທ່ານທູນຂໍຈາກພຣະເຈົ້າ ພຣະເຈົ້າກໍຈະຊົງ ໂຜດປະທານແກ່ທ່ານ ພຣະເຢຊູຊົງກ່າວຕໍ່ນາງວ່າ ນ້ອງຊາຍຂອງເຈົ້າຈະຄືນມາອີກ"* (ຂໍ້ 22-23). ເມື່ອພຣະເຢ

ຊູເວົ້າວ່າ *ນ້ອງຊາຍຂອງເຈົ້າຈະຄືນມາອີກ* ນາງເຂົ້າໃຈວ່າພຣະເຢຊູເວົ້າເຖິງການຄືນມາຈາກຕາຍ ໃນວັນສຸດທ້າຍ ແຕ່ພຣະເຢຊູບໍ່ໄດ້ເວົ້າເຖິງວັນສຸດທ້າຍ ພຣະອົງເວົ້າເຖິງວັນນີ້ ແລະດຽວນີ້ ແຕ່ນາງບໍ່ເຂົ້າໃນຈຶ່ງເວົ້າວ່າ *"ຂ້ານ້ອຍຊາບແລ້ວວ່າລາວຈະເປັນຄືນມາອີກໃນເວລາຄືນມາເມື່ອວັນສຸດທ້າຍນັ້ນ "* (ຂໍ້ 24). ເພາະວ່າເຣື່ອງການເປັນຄືນມາໃນວັນສຸດທ້າຍເປັນຄວາມເຊື່ອຂອງຄຣິສຕຽນເຊື່ອວ່າຈະຕ້ອງເປັນແນວນັ້ນ (1ເທຊະໂລນີກ 4:17ຂ).

ຫລັງຈາກມາທາບໍ່ເຂົ້າໃຈສິ່ງທີ່ພຣະເຢຊູເວົ້າແລ້ວພຣະອົງກໍເວົ້າວ່າ *"ເຮົານີ້ແຫລະ, ເປັນເຫດໃຫ້ຄົນທັງປວງເປັນຄືນມາທັງເປັນຊີວິດ ຜູ້ທີ່ວາງໃຈເຊື່ອຢູ່ໃນເຮົາ ເຖິງແມ່ນວ່າຕາຍໄປແລ້ວກໍຍັງມີຊີວິດຢູ່ ແລະທຸກຄົນທີ່ຍັງມີຊີວິດຢູ່ ແລະວາງໃຈເຊື່ອຢູ່ໃນເຮົາກໍຈະບໍ່ຕາຍຈັກເທື່ອ ເຈົ້າເຊື່ອຂໍ້ນີ້ຫລື "* (ຂໍ້ 25-26). ຄຳເວົ້າຂອງພຣະເຢຊູຕອນນີ້ເປັນການເຂົ້າໃຈຍາກ ແຕ່ເພື່ອການເຂົ້າໃຈຂ້າພະເຈົ້າຂໍນຳທ່ານໄປສຶກສາສອງປະການຄື; 1. *ເຮົານີ້ແຫລະ, ເປັນເຫດໃຫ້ຄົນທັງປວງເປັນຄືນມາ* ແປວ່າພຣະອົງຊົງຟື້ນຄືນມາຈາກຕາຍແລະພຣະອົງກໍເປັນແຫລ່ງການຄືນມາຈາກຕາຍ. 2. *ທຸກຄົນທີ່ຍັງມີຊີວິດຢູ່ ແລະ ວາງໃຈເຊື່ອຢູ່ໃນເຮົາກໍຈະບໍ່ຕາຍຈັກເທື່ອ* ແປວ່າພຣະອົງຊົງເປັນຊີວິດດັ່ງໂຢຮັນ 14, ຄຳວ່າບໍ່ຕາຍຈັກເທື່ອ ແປວ່າຄົນທີ່ເຊື່ອໃນພຣະອົງນັ້ນຈິດວິນຍານຈະບໍ່ຕາຍ ຫລືບໍ່ຕາຍຈາກພຣະເຈົ້າ ດ້ວຍວ່າວິນຍານຈະຄືນໄປຫາພຣະເຈົ້າ ສ່ວນຮ່າງກາຍນັ້ນຈະກາຍເປັນດິນອີກຄັ້ງນຶ່ງ (ປຖກ 2:7). ພຣະເຢຊູຊົງຖາມມາທາວ່າ *"ເຈົ້າເຊື່ອຂໍ້ນີ້ຫລື "* ແປວ່າ ເຈົ້າເຊື່ອບໍ່ວ່າພຣະອົງຊົງເປັນຊີວິດ ຜູ້ທີ່ເຊື່ອໃນພຣະອົງຈະບໍ່ຕາຍຈັກເທື່ອ ນາງຕອບພຣະເຢຊູວ່າ *"ເຊື່ອຢູ່ແລ້ວນາຍເຈົ້າເອີຍ, ຂ້ານ້ອຍເຊື່ອແລ້ວວ່າທ່ານເປັນພຣະຄຣິດ ຄືພຣະບຸດຂອງພຣະເຈົ້າທີ່ຕ້ອງສະເດັດມາໃນໂລກ "* (ຂໍ້ 27).

<u>ຄວາມຫວັງເປັນຈິງ</u> (11:38-44)

ຫລັງຈາກຊົງສົນທະນາກັບນາງມາທາແລະນາງມາຣີອາຜູ້ເປັນເອື້ອຍຂອງລາຊະໂຣແລ້ວພຣະອົງກໍສະເດັດໄປຍັງອຸບໂມງຝັງສົບ ເພາະຮີດຄອງຂອງຊາວຢິວແລ້ວແມ່ນເອົາສົບຄົນຕາຍໄປໄວ້ໃນຖ້ຳ *"ພຣະເຢຊູຊົງສະເທືອນພຣະທັຍອີກຈຶ່ງສະເດັດມາເຖິງອຸບໂມງຝັງສົບ ອຸບໂມງນັ້ນເປັນຖ້ຳມີຫີນກ້ອນນຶ່ງວາງອັດປາກຖ້ຳ ພຣະເຢຊູຊົງກ່າວວ່າຈົ່ງຍົກຫີນອອກເສັຽ ມາທາເອື້ອຍຂອງຜູ້ຕາຍນັ້ນເວົ້າວ່າ ນາຍເຈົ້າເອີຍ, ປານນີ້ສົບມີກິ່ນເໝັນແລ້ວ ເພາະລາວຕາຍໄດ້ສີ່ວັນແລ້ວ "* (ຂໍ້ 38-39). ພຣະເຢຊູຊົງສະເທືອນພຣະທັຍ ແປວ່າພຣະເຢຊູຮ້ອງໄຫ້ເມື່ອເຫັນຄົນອື່ນຮ້ອງໄຫ້ ຊຶ່ງເປັນການບົ່ງບອກວ່າ ພຣະອົງຊົງມີພຣະໄທຖ່ອມລົງເປັນໃຈເໝືອນມະນຸດທັມມະດາ, ຄັນແລ້ວພຣະອົງກໍສະເດັດໄປຍັງອຸບໂມງຝັງສົບລາຊະໂຣ ໃນອຸບໂມງນັ້ນມີສົບຂອງລາຊະໂຣແລະຫລາຍຮ້ອຍສົບບັນຈຸຢູ່ໃນນັ້ນຄືກັນ ມັນຄ້າຍຄືຄົນລາວເຮົາເອົາກະດູກ ຫລືຂີ້ເຖົ່າຄົນຕາຍໄປໄວ້ທີ່ອຸບໂມງວັດ. ເວລາທີ່ພຣະເຢຊູບອກໃຫ້ຍົກກ້ອນຫີນອອກຈາກປາກຖ້ຳ ນາງມາທາກໍຫ້າມບໍ່ຢາກໃຫ້ເປີດປາກຖ້ຳເພາະວ່າລາຊະໂລຕາຍໄປສີ່ມື້ແລ້ວຈະຕ້ອງເໝັນຢ່າງແນ່ນອນ. ຖ້າເຮົາອ່ານຄືນຫລັງເຮົາຈະເຫັນວ່າພຣະເຢຊູໄດ້ເວົ້າກັບນາງມາທາສອງຄັ້ງມາແລ້ວຄື;

1. ຄັ້ງທີນຶ່ງພຣະເຢຊູ ບອກມາທາວ່າ *"ນ້ອງຊາຍຂອງເຈົ້າຈະຄືນມາອີກ "* (ຂໍ້ 23ຂ).
2. ຄັ້ງທີສອງພຣະອົງບອກອີກວ່າ "ເຮົານີ້ ແຫລະເປັນເຫດໃຫ້ຄົນທັງປວງຄືນມາມີຊີວິດ" (ຂໍ້ 25ກ). ພຣະອົງກໍຖາມນາງວ່າເຈົ້າເຊື່ອຂໍ້ນີ້ຫລື ນາງກໍຕອບວ່າເຊື່ອແລ້ວ (ຂໍ້ 27).
3. ຕໍ່ມາມາເຖິງຄັ້ງທີສາມພຣະອົງບອກໃຫ້ຍົກຫີນອອກຈາກປາກອຸບໂມງເພື່ອຈະໃຫ້ລາຊະໂຣອອກມາ ນາງມາທາກໍຫ້າມບໍ່ໃຫ້ເປີດເພາະຢ້ານວ່າຈະເໝັນຄົນຕາຍ. ດ້ວຍເຫດນີ້ພຣະເຢຊູເວົ້າກັບນາງວ່າ *"ເຮົາໄດ້ບອກເຈົ້າແລ້ວບໍ່ແມ່ນຫລືວ່າ ຖ້າເຈົ້າເຊື່ອຄືງຈະໄດ້ເຫັນສະງ່າຣາສີຂອງພຣະ ເຈົ້າ "* (ຂໍ້ 40).

ຄຳເວົ້າຄຳດຽວກັນນີ້ສະທ້ອນມາເຖິງພວກເຮົາດ້ວຍຖ້າເຮົາເຊື່ອເຮົາກໍຈະເຫັນສະງ່າຣາສີຂອງພຣະເຈົ້າຄືກັນ. *ດັ່ງນັ້ນເຂົາຈຶ່ງຍົກຫີນອອກ ຝ່າຍພຣະເຢຊູເງີຍພຣະພັກຂຶ້ນໂດຍຊົງກ່າວວ່າ, ໂອ ພຣະບິດາເອີຍ, ຂ້ານ້ອຍຂອບພຣະຄຸນພຣະ*

*ອົງ ເພາະພຣະອົງຊົງໂຜດຟັງຂ້ານ້ອຍ ຂ້ານ້ອຍຊາບວ່າ ພຣະອົງຊົງຟັງຂ້ານ້ອຍສເມີ ແຕ່ຂ້ານ້ອຍເວົ້າຢ່າງນີ້ກໍເພາະເຫັນແກ່ຄົນທັງຫລາຍທີ່ຢືນຢູ່ອ້ອມຂ້າງນີ້ ເພື່ອເຂົາຈະເຊື່ອວ່າແມ່ນ ພຣະອົງນັ້ນແຫລະ, ທີ່ຊົງໃຊ້ຂ້ານ້ອຍມາ* "(ຂໍ້ 41-42). ໃນຂະນະທີ່ພຣະອົງຊົງອ້ອນວອນຢູ່ນັ້ນຄົນທັງຫລາຍທີ່ຕິດຕາມພຣະອົງໄປກໍພາກັນມິດງຽບຢູ່ທາງຫລັງ.

ຫລັງຈາກອ້ອນວອນແລ້ວພຣະອົງກໍຊົງເປັ່ງສຽງຮ້ອງລາຊະໂຣວ່າ "*ລາຊະໂຣເອີຍ, ຈົ່ງອອກມາເສັຽ. ຜູ້ຕາຍນັ້ນກໍໄດ້ອອກມາ ມີຜ້າພັນຕີນແລະມື, ແລະມີຜ້າປົກໜ້າໄວ້ ແລ້ວພຣະເຢຊູຊົງບອກເຂົາວ່າ ຈົ່ງແກ້ປ່ອຍໃຫ້ລາວໄປເສັຽ* "(ຂໍ້ 44). ສຽງຮ້ອງທີ່ມີຊີວິດໄດ້ນຳເອົາຊີວິດມາສູ່ລາຊະໂຣອີກຄັ້ງນຶ່ງ, ເມື່ອເມື່ອລາຊະໂຣຍ່າງອອກມາຈາກອຸບໂມງນັ້ນຍັງມີຜ້າຫຸ້ມຫັດກໍເພາະວ່າສັງຄົມຂອງຄົວຢິວເມື່ອຕາຍໄປເຂົາຈະເອົາຜ້າຂາວມາພັນຮ່າງຂອງຄົນຕາຍໃຫ້ແໜ້ນ ດັ່ງນັ້ນລາຊະໂລຈຶ່ງຍ່າງອອກມາໂດຍຍັງມີຜ້າພັນໂຕຢູ່ ເມື່ອເປັນດັ່ງນັ້ນພຣະເຢຊູຈຶ່ງບອກໃຫ້ຄົນທີ່ໄປນຳໃຫ້ແກ້ຜ້າພັນໂຕຂອງລາຊະໂລອອກເພື່ອລາວຈະບໍ່ໄດ້ຢູ່ຢ່າງຄົນຕາຍອີກ. ຄຳເວົ້າຂອງພຣະເຢຊູເຣື່ອງພຣະອົງຊົງເປັນຊີວິດກໍພິສູດໃຫ້ຄົນທັງຫລາຍເຫັນໃນວັນນີ້ ແລະຄວາມໄຝ່ຝັນຂອງນາງມາທາ ແລະນາງມາຣີອາເອື້ອຍຂອງຜູ້ຕາຍກໍກາຍມາເປັນຈິງ.

<u>ຄຳຖາມ:</u>

1. ທ່ານເຄີຍອ້ອນວອນເປັນເວລາດົນນານເບິ່ງຄ້າຍຄືພຣະເຈົ້າບໍ່ຕອບບໍ່?

2. ນາງມາທາແລະນາງມາຣີອາໄປຂໍໃຫ້ພຣະເຢູໄປປົວນ້ອງຊາຍລາຊະໂລສອນຫຍັງທ່ານແດ່?

3. ຫາກມີຄອບຄົວເສັຍຊີວິດທ່ານຈະເລົ້າໂລມເພິ່ນຢ່າງໃດ?

4. ເປັນຫຍັງພຣະເຢຊູບໍ່ເອີ້ນທຸກຄົນທີ່ຕາຍໄປແລ້ວໃຫ້ຄືນມາຄືລາຊະໂຣ?

5. ຫາກທ່ານໄດ້ຢູ່ກັບພຣະເຢຊູໃນເວລາທີ່ຮ້ອງລາຊະໂຣອອກມາທ່ານຈະຄິດແນວໃດ?

6. ການຄືນມາຈາກຕາຍຂອງລາຊະໂຣມີຄວາມໝາຍອັນໃດສຳລັບທ່ານ?

*ດຣ. ທຸນພັນ ວົງສຸຣິດທ໌*

# ບົດຮຽນທີ 7
# ຮັກບໍ່ມີພົມແດນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 13: 1-17, 34-35
**ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:** ໂຢຮັນ 13
**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອຮຽນເຮັດຕາມແບບຢ່າງພຣະອາຈານ
**ຄຳຖາມເພື່ອການສຳຣວດ:** ພຣະເຢຊູຕ້ອງການໃຫ້ເຮົາເຮັດແບບຢ່າງອັນໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອໃຫ້ເຮົາຕັດສິນໃຈໃຫ້ພຣະເຢຊູເປັນຜູ້ນຳໃນຊີວິດ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ປະກາດແກ່ທຸກຄົນໂດຍບໍ່ເລືອກຫນ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ກຳໜົດວັນເວລາແຫ່ງການຈາກໄປຂອງພຣະເຢຊູໃກ້ຈະມາເຖິງ, ພວກສາວົກຮ້ອງວ່າພຣະອາຈານ ຫລືນາຍເຈົ້າເອີຍໄດ້ທຳພິທີລ້າງຕີນສາວົກຂອງພຣະອົງຣະຫວ່າງອາຫານແລງວັນນຶ່ງ ຊຶ່ງເປັນການສະແດງອອກເຖິງຄວາມຮັກແບບບໍ່ຖືຕົວ ແລະພຣະອົງຕ້ອງການໃຫ້ສາວົກຂອງພຣະອົງທຸກໆຄົນຮັກຊຶ່ງກັນແລະກັນໂດຍຖ່ອມໃຈລົງ ຍອມຮັບຊຶ່ງກັນແລະກັນໂດຍສະແດງຄວາມຮັກອັນແທ້ຈິງຄືພຣະເຢຊູຊົງເຮັດເປັນຕົວຢ່າງແລ້ວ.

**ຄວາມຮັກທີ່ສແດງອອກ** ( 13:1-5 )

ພຣະເຢຊູຊົງກະທຳການອັນບໍ່ຄາດຝັນກ່ອນກັບຄືນໄປສວັນບ່ອນທີ່ພຣະອົງຈາກມາ ໃນເວລານີ້ພຣະເຢຊູມີຄວາມເປັນຫວ່ງທີ່ຈະຕ້ອງປະປ່ອຍສາວົກໄວ້ໃນໂລກນີ້ພຣະອົງຈຶ່ງທຳພິທີລ້າງຕີນສາວົກເປັນແບບການສອນພິເສດ *"ກ່ອນເຖິງເວລາເທສການປັສຄາ ພຣະເຢຊູຊົງຊາບວ່າຍາມຂອງຕົນທີ່ຈະສະເດັດຈາກໂລກນີ້ເມືອຫາພຣະບິດາ ແລ້ວພຣະອົງຊົງຮັກພວກຂອງພຣະອົງທີ່ຢູ່ໃນໂລກນີ້ ພຣະອົງຮັກຈົນເຖິງທີ່ສຸດ"* (ຂໍ້ 1) ສອງວັນກ່ອນໜ້າປັສຄາພິທີຈາລຶກເຖິງພຣະຄຸນພຣະເຈົ້າທີ່ນຳຊາດອິສາເອນອອກຈາກການເປັນຂ້ອຍຂ້າທີ່ປະເທດເອຢິບ. ໃນຄາບອາຫານແລງວັນນັ້ນເປັນວັນໃກ້ເວລາພຣະເຢຊູຈະຕ້ອງກັບຄືນໄປສູ່ສວັນ ພຣະເຢຊູບໍ່ຢາກຈາກພວກສາວົກໄປຍ້ອນວ່າພຣະອົງຊົງຮັກພວກສາວົກຫລາຍ ແຕ່ພຣະອົງຈະຕ້ອງໄປເພາະກຳໜົດເວລາຂອງພຣະອົງມາຮອດແລ້ວ, *"ຂະນະເມື່ອ ຮັບປະທານອາຫານຢູ່ນັ້ນ (ມານໄດ້ເຂົ້າດົນຢູ່ໃນໃຈຢູດາອິສະກາຣີອົດລູກຊາຍຊີໂມນ ໃຫ້ທໍຣະຍົດຕໍ່ພຣະອົງ)"* (ຂໍ້ 2). ໃນຂໍ້ທີສອງນີ້ຍັງເປັນປິສນາຢູ່ໂດຍວ່າບໍ່ມີສາສນາສາດຜູ້ໃດເວົ້າໄດ້ແຈ່ມແຈ້ງ, ລາງຄົນເວົ້າວ່າ ໃນຂະນະກິນເຂົ້າແລງຢູ່ນັ້ນມານໄດ້ເຂົ້າໃນໃຈຂອງຢູດາ, ອີກຜູ້ນຶ່ງເວົ້າວ່າມານໄດ້ເຂົ້າຢູ່ໃນໃຈຂອງຢູດາກ່ອນໜ້າກິນເຂົ້າພຸ້ນ ແລະກໍບໍ່ມີໃຜສາມາດບອກວ່າ ມານມັນເຂົ້າໄປໃນໃຈຂອງຢູດາໄດ້ແນວໃດ? ເຂົ້າວິທີໃດ? ອີກປະການນຶ່ງພຣະຄັມ ພີພາສາລາວກໍເຮັດວົງເລັບເປີດແລະປິດດັ່ງນີ້;*(ມານໄດ້ເຂົ້າດົນຢູ່ໃນໃຈຢູດາອິສະກາຣີອົດລູກຊາຍຊີໂມນໃຫ້ທໍຣະຍົດ ຕໍ່ພຣະອົງ)* ມານມັນໄດ້ເຂົ້າ

ຢູ່ໃນໃຈຂອງຢູດາກໍເພື່ອບັງຄັບຈິດໃຈຂອງລາວໃຫ້ທໍຣະຍົດ ຫັກຫລັງພຣະເຢຊູ ແຕ່ພຣະອົງຊົງຮູ້ແລ້ວວ່າມານໄດ້ຢູ່ໃນໃຈຢູດາ ດັ່ງນັ້ນໂຢຮັນຈຶ່ງບັນທຶກວ່າ "*ພຣະເຢຊູຊົງຊາບວ່າພຣະບິດາໄດ້ຊົງປະທານສິ່ງ ທັງປວງໃຫ້ຢູ່ໃຕ້ພຣະຫັດຂອງພຣະອົງ ແລະຊົງຊາບວ່າພຣະອົງສະເດັດມາຈາກພຣະເຈົ້າ ແລະຈະສະເດັດເມືອຫາພຣະເຈົ້າ* "(ຂໍ້ 3). ເຖິງແມ່ນມານຈະມາສິງຢູ່ໃນໃຈຢູດາເພື່ອທໍຍະຍົດກໍຕາມ ມັນກໍບໍ່ສາມາດກີດກັ້ນບໍ່ໃຫ້ພຣະອົງເຮັດ ຕາມແຜນການທີ່ພຣະເຈົ້າວາງໄວ້ຢ່າງເດັດຂາດ.

ດັ່ງນັ້ນພຣະເຢຊູກໍດໍາເນີນຕາມແຜນການຄືເຮັດພິທີລ້າງຕີນສາວົກຂອງພຣະອົງ "*ພຣະອົງຊົງລຸກຂຶ້ນຈາກຮັບປະທານອາຫານ ຊົງຖອດເຄື່ອງທົງຊັ້ນນອກອອກໄວ້, ແລະຊົງເອົາຜ້າເຊັດໂຕມາຮັດແອວຂອງພຣະອົງ ພຣະອົງຊົງຖອກນໍ້າໃສ່ອ່າງແລ້ວຊົງຕັ້ງຕົ້ນລ້າງຕີນຂອງພວກສາວົກ ແລະເຊັດດ້ວຍຜ້າຮັດແອວ* "(ຂໍ້ 4-5). ງານລ້າງຕີນເປັນງານຕໍ່າທີ່ສຸດໃນທຸກຊາດທຸກສັງຄົມ ແຕ່ບໍ່ແມ່ນລ້າງຕີນແບບຄົນລາວແຕ່ງງານ. ໃນສັງຄົມຂອງຢິວກ່ອນແຂກຈະຂຶ້ນເຮືອນພວກຄົນໃຊ້ຈະມາລ້າງຕີນໃຫ້ແຂກເສັຽກ່ອນ ດັ່ງທີ່ເຫັນໃນງານແຕ່ງງານທີ່ບ້ານການາ. ໃນແລງວັນນັ້ນພຣະເຢຊູໄດ້ສອນພວກສາວົກດ້ວຍພິທີລ້າງຕີນຂອງສາວົກທຸກຄົນ ແມ່ນແຕ່ຕົວຢູດາເອງທີ່ມີມານຊາຕານສິງຢູ່ໃນໃຈ ພຣະເຢຊູກໍລ້າງຕີນລາວຄືກັນ ສາສນາຈານຜູ້ນຶ່ງໃຫ້ເຫດຜົນທີ່ພຣະອົງຊົງລ້າງຕີນວ່າ ນີ້ແຫລະຄວາມຮັກຂອງພຣະເຈົ້າບໍ່ມີພົມແດນ, ພຣະເຢຊູໄດ້ຫ້າງຫາແລະເຮັດພິທີນີ້ໂດຍພຣະອົງເອງ, ພຣະອົງຊົງເປັນພຣະອາຈານ ຫລາຍເທື່ອພວກສາວົກກໍຮ້ອງພຣະອົງວ່າ ນາຍເຈົ້າເອີຍ ແປວ່າຜູ້ເປັນນາຍ ແຕ່ພຣະອົງບໍ່ໄດ້ຖືຕົວເປັນເຈົ້ານາຍ ແຕ່ກັບມາລ້າງຕີນສາວົກເພື່ອສອນເຂົາໃຫ້ຮັກຊຶ່ງກັນແລະກັນ, ຍອມຮັບຊຶ່ງກັນແລະກັນ ເໝືອນພຣະອົງຊົງຍອມຮັບທຸກຄົນ.

**<u>ບໍ່ສົມຄວນຈະລ້າງຕີນ</u>** (13:6-11 )

"*ພຣະອົງໄດ້ສະເດັດມາເຖິງຊີໂມນເປໂຕ ແລະລາວໄດ້ທູນພຣະອົງວ່າ ນາຍເຈົ້າເອີຍ, ທ່ານຈະລ້າງຕີນຂອງຂ້ານ້ອຍຫລື ພຣະເຢຊູຊົງຕອບລາວວ່າ ສິ່ງທີ່ເຮົາເຮັດໃນເວລານີ້ທ່ານຍັງບໍ່ຮູ້ເຣື່ອງ ແຕ່ພາຍຫລັງທ່ານຈະເຂົ້າໃຈ* "(ຂໍ້ 6-7). ສາວົກແຕ່ລະຄົນກໍຍອມໃຫ້ພຣະເຢຊູລ້າງຕີນເຂົາ ແຕ່ພໍມາເຖິງເປໂຕ ໆບໍ່ຍອມໃຫ້ພຣະເຢຊູລ້າງຕີນຂອງລາວ ເພາະລາວຄິດໃນໃຈຂອງລາວວ່າບໍ່ສົມຄວນທີ່ຈະໃຫ້ພຣະອາຈານຜູ້ເປັນເຈົ້ານາຍມາລ້າງຕີນຜູ້ເປັນສິດ, ລາວຄິດວ່າສິດສົມຄວນຈະລ້າງຕີນພຣະອາຈານ ດັ່ງນັ້ນເປໂຕຈຶ່ງຖາມວ່າ *ທ່ານຈະລ້າງຕີນຂອງຂ້ານ້ອຍຫລື* ແປວ່າເປັນຫຍັງພຣະອົງຈຶ່ງລ້າງຕີນຂ້ານ້ອຍ? ແຕ່ພຣະເຢຊູບໍ່ໄດ້ອາທິບາຍແຕ່ຢ່າງໃດ ກັບເວົ້າວ່າ *ສິ່ງທີ່ເຮົາເຮັດໃນເວລານີ້ທ່ານຍັງບໍ່ຮູ້ເຣື່ອງ ແຕ່ພາຍຫລັງທ່ານຈະເຂົ້າໃຈ*. ແມ່ນແທ້ແລ້ວ ມີຫລາຍຢ່າງເຮົາທັງຫລາຍບໍ່ເຂົ້າໃຈເຣື່ອງຂອງພຣະອົງ ແລະຍັງມີອີກຫລາຍຢ່າງທີ່ເຮົາບໍ່ເຂົ້າໃຈໃນສິ່ງເກີດຂຶ້ນກັບເຮົາ ພາຍຫລັງເຮົາຈະເຂົ້າໃຈຄືກັນ.

"*ເປໂຕຈຶ່ງທູນວາ ທ່ານຈະລ້າງຕີນຂອງຂ້ານ້ອຍບໍ່ໄດ້ຈັກເທື່ອ ພຣະເຢຊູຊົງຕອບວ່າ ຖ້າເຮົາບໍ່ລ້າງທ່ານ ທ່ານຈະມີສ່ວນໃນເຮົາບໍ່ໄດ້ ຊີໂມນເປໂຕທູນພຣະອົງວ່າ ນາຍເຈົ້າເອີຍ, ບໍ່ແມ່ນແຕ່ຕີນເທົ່ານັ້ນ ແຕ່ຂໍລ້າງມືແລະຫົວຂອງຂ້ານ້ອຍເໝືອນກັນ ພຣະເຢຊູຊົງຕອບວ່າ ຜູ້ທີ່ອາບນໍ້າແລ້ວບໍ່ຈໍາເປັນຕ້ອງລ້າງຕົວອີກ ລ້າງແຕ່ຕີນເທົ່ານັ້ນເພາະສະອາດທັງຕົວແລ້ວ ພວກທ່ານກໍສະອາດແລ້ວ ແຕ່ບໍ່ແມ່ນທຸກຄົນ* "(ຂໍ້ 8-10). ຕອນແຣກເປໂຕບໍ່ຍອມໃຫ້ພຣະເຢຊູລ້າງຕີນຂອງລາວ ຫລັງຈາກພຣະເຢຊູບອກວ່າຖ້າບໍ່ລ້າງຈະບໍ່ໄດ້ມີສ່ວນ ມາເຖິງບັດນີ້ເປໂຕແຮງຢາກມີສ່ວນຫລາຍຈຶ່ງຂໍໃຫ້ພຣະເຢຊູລ້າງມື ແລະລ້າງຫົວອີກ ແຕ່ພຣະເຢຊູຊົງບອກເປໂຕວ່າຄົນໃດທີ່ອາບນໍ້າແລ້ວບໍ່ຈໍາເປັນຕ້ອງລ້າງອີກເພາະສະອາດແລ້ວ ດັ່ງນັ້ນເປໂຕຈຶ່ງຍອມໃຫ້ພຣະອົງລ້າງຕີນລາວ. ຄໍາວ່າລ້າງມີສອງປະເດັນທີ່ສໍາຄັນດັ່ງນີ້;

1. ຄໍາວ່າລ້າງຕີນ, ລ້າງມື ແມ່ນສໍາລັບລ້າງກ່ອນກິນເຂົ້າແລະຈະຕ້ອງລ້າງທຸກເທື່ອກ່ອນກິນເຂົ້າ ສ່ວນລ້າງຕີນນັ້ນມີຄວາມໝາຍອີກປະການນຶ່ງດ້ວຍວ່າຕີນຢ່າງສໍາຜັດໂລກແຕ່ລະມື້ ຈໍາເປັນຕ້ອງລ້າງກ່ອນເຂົ້າແຜ່ນສວັນ ທີ່ພຣະເຢຊູເວົ້າວ່າ ມີສ່ວນໃນພຣະອົງ. ຄໍາເວົ້ານີ້ມາຈາກພາກຣີກ Nipto.

2. ເປໂຕຂໍໃຫ້ລ້າງຫົວ ແປວ່າອາບນໍ້າ ແຕ່ພຣະເຢຊູບອກເປໂຕວ່າ *ຜູ້ທີ່ອາບນໍ້າແລ້ວບໍ່ຈໍາເປັນຕ້ອງລ້າງຕົວອີກ* ແປວ່າຜູ້ທີ່ຖືກຊໍາຮະລ້າງໂດຍພຣະທັມ, ໂດຍພຣະວິນຍານ, ໂດຍນໍ້າບັບຕິສະມາ ຖືວ່າສະອາດແລ້ວ ຄໍາເວົ້ານີ້ມາຈາກພາສາກຣີກ Lelouomenos.

ໃນຕອນທ້າຍຂອງຂໍ້ 10 ພຣະເຢຊູເວົ້າວ່າ *ແຕ່ບໍ່ແມ່ນທຸກຄົນ* ແປວ່າບໍ່ແມ່ນໝົດທຸກຄົນໃນພວກສາວົກສະອາດແທ້, ທີ່ພຣະອົງກ່າວເຊັ່ນນັ້ນກໍເພາະພຣະອົງຊົງຮູ້ແລ້ວວ່າມານໄດ້ເຂົ້າສິງຢູ່ໃນໃຈຢູດາແລ້ວ.

<u>ຄວາມໝາຍຂອງການລ້າງຕີນ</u> (13:12-17)

*"ເຫດສັນນີ້ເມື່ອພຣະອົງຊົງລ້າງຕີນຂອງເຂົາແລ້ວ ພຣະອົງກໍຊົງໃສ່ເຄື່ອງທົງຊັ້ນນອກຂອງຕົນອີກ ແລ້ວປະທັບລົງຈຶ່ງ ຊົງຖາມເຂົາວ່າ ທ່ານທັງຫລາຍເຂົ້າໃຈໃນສິ່ງທີ່ເຮົາເຮັດຕໍ່ພວກທ່ານແລ້ວຫລື ທ່ານທັງຫລາຍເອີ້ນເຮົາວ່າອາຈານ ແລະນາຍເຈົ້າ ພວກທ່ານເອີ້ນຖືກຕ້ອງແລ້ວ ເພາະເຮົາເປັນຢ່າງນັ້ນ"* (ຂໍ້ 12-13). ເມື່ອລ້າງຕີນສາວົກໝົດທຸກຄົນແລ້ວ ພຣະອົງມານັ່ງສັ່ງສອນສາວົກອີກແລະຖາມວ່າ *ທ່ານທັງຫລາຍເຂົ້າໃຈໃນສິ່ງທີ່ເຮົາເຮັດຕໍ່ພວກທ່ານແລ້ວຫລື?* ຄວາມໝາຍໃນການລ້າງຕີນມີດັ່ງຕໍ່ໄປນີ້;

1. ຮັກດ້ວຍການກະທໍາ. (ພຣະເຢຊູຊົງຮັກສາວົກທີ່ສະແດງອອກເຮັດວຽກຕໍ່າ).
2. ຮັກຜູ້ຮັບໃຊ້ພຣະອົງທຸກຄົນ, (ແມ່ນແຕ່ຢູດາກໍຊົງຮັກ ເປັນຄວາມຮັກບໍ່ມີພົມແດນ).
3. ສອນໃຫ້ຮັກຊຶ່ງກັນແລະກັນ, (ພຣະອົງຊົງຮັກຫລາຍປານນີ້ ພຣະອົງສອນໃຫ້ເຮົາຮັກຊຶ່ງກັນແລະກັນ).
4. ຮັກດ້ວຍຄວາມຖ່ອມຕົວ, (ຊົງເປັນຕົວຢ່າງຂອງຄວາມຖ່ອມຕົວ).

*ພວກທ່ານເອີ້ນຖືກຕ້ອງແລ້ວ ເພາະເຮົາເປັນຢ່າງນັ້ນ* ເພາະວ່າພຣະອົງຊົງເປັນອາຈານແລະຊົງເປັນພຣະເຈົ້າ, ພຣະອົງຊົງສອນຕໍ່ໄປວ່າ *"ເຫດສັນນັ້ນເຮົາເປັນຜູ້ເປັນນາຍແລະອາຈານຂອງພວກທ່ານໄດ້ລ້າງຕີນຂອງທ່ານ ພວກທ່ານກໍຄວນລ້າງຕີນຊຶ່ງກັນແລະກັນ ດ້ວຍວ່າເຮົາໄດ້ວາງແບບຢ່າງໃຫ້ພວກທ່ານແລ້ວ ເພື່ອທ່ານຈະໄດ້ເຮັດເໝືອນດັ່ງເຮົາໄດ້ເຮັດຕໍ່ພວກທ່ານແລ້ວ ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຂ້ອຍໃຊ້ບໍ່ທ່ອນໃຫຍ່ກວ່າຜູ້ໃຊ້ຕົນ ດັ່ງນັ້ນຖ້າທ່ານທັງຫລາຍຮູ້ສິ່ງເຫລົ່ານີ້ແລະເຮັດຕາມ ທ່ານກໍເປັນສຸກ"* (ຂໍ້ 14-17).

<u>ຄໍາສັ່ງໃໝ່</u> (ຂໍ້ 34-35)

*"ເຮົາໃຫ້ບັນຍັດໃໝ່ໄວ້ແກ່ເຈົ້າທັງຫລາຍ ຄືໃຫ້ພວກເຈົ້າຮັກຊຶ່ງກັນແລະກັນ ເຮົາຮັກເຈົ້າທັງຫລາຍມາແລ້ວຢ່າງໃດພວກເຈົ້າຈົ່ງຮັກຊຶ່ງກັນແລະກັນດ້ວຍຢ່າງນັ້ນ ຖ້າເຈົ້າທັງຫລາຍມີຄວາມຮັກຊຶ່ງກັນແລະກັນດັ່ງນີ້ແຫລະ, ຄົນທັງປວງກໍຈະໄດ້ຮູ້ວ່າເຈົ້າທັງຫລາຍເປັນສາວົກຂອງເຮົາ"* (ຂໍ້ 34-35). ໃນສອງຂໍ້ນີ້ແມ່ນໄດ້ສລູບແລ້ວໃນສີ່ຫົວຂໍ້ເຣື່ອງຄວາມໝາຍຂອງພິທີລ້າງຕີນຂ້າງເທິງແລ້ວ. ຄໍາວ່າຄໍາສັ່ງໃໝ່ທີ່ພຣະເຢຊູຊົງມອບໃຫ້ຄັ້ງນີ້ ກໍແມ່ນຄໍາສັ່ງດຽວກັນທີ່ພຣະອົງສັ່ງກ່ອນແລ້ວ ແຕ່ເວົ້າຄັ້ງນີ້ເພື່ອສັ່ງຢໍ້າເຕີມ ດ້ວຍຢ້ານວ່າເຂົາຈະບໍ່ຮັກກັນດັ່ງທີ່ພຣະອົງຫວັງໄວ້ ແລະຄວາມຮັກນີ້ເອງຄົນທັງຫລາຍຈະຮູ້ວ່າເປັນສາວົກແທ້ຂອງພຣະອົງ. *ຄົນທັງປວງກໍຈະໄດ້ຮູ້ວ່າເຈົ້າທັງຫລາຍເປັນສາວົກຂອງເຮົາ* ດ້ວຍເຫດນີ້ເຮົາບໍ່ຈໍາເປັນຕ້ອງບອກຄົນອື່ນວ່າເຮົາເປັນສາວົກຂອງພຣະເຢຊູ ເຂົາຈະຮູ້ວ່າເຮົາເປັນສາວົກຂອງພຣະເຢຊູຖ້າເຮົາຮັກຊຶ່ງກັນແລະກັນເໝືອນດັ່ງພຣະເຢຊູຮັກ.

ວັນນີ້ເປັນເວລາສຸດທ້າຍທີ່ພຣະເຢຊູມີໂອກາດຢູ່ເພື່ອສັ່ງສອນສາວົກ, ດ້ວຍຄວາມເປັນຫ່ວງຢ້ານສາວົກບໍ່ຮັກຊຶ່ງກັນແລະກັນພຣະອົງຈຶ່ງບອກວ່າ *ເຮົາໃຫ້ບັນຍັດໃໝ່ໄວ້ແກ່ເຈົ້າທັງຫລາຍ ຄືໃຫ້ພວກເຈົ້າຮັກຊຶ່ງກັນແລະກັນ* ຄຳວ່າຮັກທີ່ພຣະເຢຊູຊົງກ່າວນີ້ບໍ່ແມ່ນຮັກແຕ່ປາກ ຫລືຮັກຍາມໄດ້ຢູ່ໄດ້ກິນນຳກັນ ແຕ່ພຣະອົງບອກໃຫ້ຮັກໂດຍບໍ່ມີເງື່ອນໄຂແລະຮັກຄືພຣະອົງຮັກ, ແມ່ນແຕ່ຢູດາຜູ້ທໍຣະຍົດພຣະອົງກໍຍັງຊົງຮັກແລະລ້າງຕີນຂອງລາວ.

<u>**ຄຳຖາມ:**</u>

1. ຄວາມຮັກທີ່ມີການກະທຳເປັນແນວໃດ?

2. ພຣະເຢຊູເຮັດຫຍັງໃນຂະນະທີ່ກິນເຂົ້າແລງມື້ນັ້ນ?

3. ມານໄດ້ເຂົ້າໃນໃຈໃຜ? ເຂົ້າໄປເພື່ອເຮັດຫຍັງ?

4. ພິທີລ້າງຕີນມີຄວາມໝາຍຢ່າງໃດ?

5. ຄຳສັ່ງໃໝ່ໃຫ້ຮັກຊຶ່ງກັນແລະກັນ ເພິ່ນຄືເວົ້າມາກ່ອນແລ້ວ ເປັນຫຍັງຈຶ່ງວ່າຄຳສັ່ງໃໝ່?

6. ຄຳສັ່ງໃຫ້ເຮົາເຮັດຫຍັງ?

7. ເຮັດແນວໃດຄົນອື່ນຈະຮູ້ວ່າເຮົາເປັນສາວົກຂອງພຣະອົງ.

*ດຣ. ທຸນພັນ ວົງສຸຣິດທ໌*

# ບົດຮຽນທີ 8
# ຈົ່ງໝັ້ນໃຈ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 14: 1-11, 15-18, 25-27

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ໂຢຮັນ 14: 1-31

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຊົງປະກັນວ່າພວກເຮົາຈະບໍ່ຢູ່ໂດດດ່ຽວ ແຕ່ພຣະອົງຈະຊົງ ຢູ່ກັບເຮົາຕລອດໄປ.

**ຄຳຖາມເພື່ອການສຳຣວດ:** ພວກເຮົາຈະຢູ່ກັບໂລກທີ່ກຳລັງປ່ຽນແປງແລະສູນຫາຍນີ້ແນວໃດ?

**ຈຸດປະສົງຂອງບົດຮຽນນີ້:** ພື່ອຈະຮູ້ວ່າພວກເຮົາສາມາດມີຄວາມໝັ້ນໃຈໃນພຣະຄຣິດສຳລັບການຕໍ່ສູ້ກັບຄວາມລຳບາກຂອງຊີວິດ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ປະກາດຂ່າວປະເສີດກັບທຸກໆຄົນ.

## ຄຳນຳ

ພຣະເຢຊູຊົງປະທານພຣະວິນຍານບໍຣິສຸດເພື່ອໃຫ້ເຮົາໝັ້ນໃຈແລະເພື່ອເລົ້າໂລມຈິດໃຈພວກເຮົາ ໃນເວລາທີ່ພວກເຮົາຄິດວ່າຖືກປະຖິ້ມ. ໃນຕອນທີ່ພຣະເຢຊູຊົງສັນຍາເຣື່ອງພຣະວິນຍານບໍຣິສຸດ, ພວກອັຄສາວົກບໍ່ແນ່ໃຈວ່າພຣະອົງຊົງໝາຍເຖິງຫຍັງ. ໂລກຂອງພວກເຂົາກຳລັງຈະປ່ຽນແປງ. ມາເຖິງຕອນນີ້ ພວກສາວົກສິບສອງຄົນໄດ້ຢູ່ໃກ້ຊິດກັບຄຣູຜູ້ປະເສີດທີ່ສຸດໃນໂລກ. ພຣະອົງຊົງໄດ້ສອນ, ໄດ້ໃຫ້ການປຶກສາ, ແລະໄດ້ປົກປ້ອງພວກເຂົາ. ສິ່ງນີ້ໄດ້ເຮັດໃຫ້ພວກສາວົກ ມີຄວາມສບາຍໃຈ. ແຕ່ນີ້ຕໍ່ໄປພວກເຂົາເຈົ້າບໍ່ຮູ້ວ່າອະນາຄົດຈະເປັນແນວໃດ.

ພຣະເຢຊູຊົງຢືນຢູ່ຖ້າມກາງພວກເຂົາແລະຊົງເວົ້າເຖິງເຣື່ອງທີ່ພຣະອົງຈະຕ້ອງຈາກໄປ. ພຣະອົງຈະຖືກສາວົກຄົນນຶ່ງຫັກຫລັງ. ສິ່ງເຫລົ່ານີ້ຈະເກີດຂຶ້ນໄດ້ຢ່າງໃດ? ອະນາຄົດຂອງພວກເຂົາຈະເປັນຢ່າງໃນຫລັງຈາກພຣະເຢຊູຊົງໜີໄປແລ້ວ? ຄວາມຫວັງແລະຄວາມໄຝ່ຝັນຂອງພວກເຂົາຈະຖືກທຳລາຍໂດຍຈັກພັດຂອງກຸງໂຣມຫລືບໍ່?

**ເຮົາໄປຈັດແຈງບ່ອນໄວ້ສຳລັບທ່ານ** (14:1-7)

ພຣະເຢຊູຄຣິດຊົງກ່າວເຖິງສວັນອັນເປັນສະຖານທີ່ອັນແທ້ຈິງ , ບໍ່ແມ່ນພຽງສິ່ງທີ່ມະນຸດໄດ້ຄິດໄວ້. ພຣະອົງຊົງວາດພາບຂອງສວັນວ່າເປັນບ້ານທີ່ຮັກແລະເປັນທີ່ພັກຂອງພຣະເຈົ້າ. "ຜາສາດ" ໃນພາສາກຣີກແມ່ນ "ບ່ອນຢູ່" ຊຶ່ງເວົ້າເຖິງຄວາມຖາວອນຂອງບ້ານສວັນຂອງພວກເຮົາ. ສວັນເປັນບ່ອນທີ່ໄດ້ຈັດຕຽມໄວ້ສຳລັບຄົນທີ່ຕຽມຕົວເອງ. ພຣະຄຣິດ "ຊ່າງໄມ້" (ມາຣະໂກ 6:3) ກຳລັງສ້າງສວັນໄວ້ເພື່ອຜູ້ທີ່ໄດ້ເຊື່ອແລະວາງໃຈໃນພຣະອົງ. ແລະພຣະອົງຈະຊົງມາຮັບພວກເຂົາໄປຢູ່ນຳພຣະອົງ. ອັຄສາວົກໂປໂລໄດ້ພັລນາເຖິງພຣະສັນຍານີ້ໃນ 1 ເທຊະໂລນີກ 4:13-18. "ອອກ

ຈາກຮ່າງກາຍ, ຢູ່ກັບພຣະເຈົ້າ." ຖ້າພຣະເຢຊູຄຣິດຍັງຊົງຢູ່ໃນໂລກນີ້, ພຣະອົງກໍຄົງບໍ່ໄດ້ສ້າງບ້ານສວັນໄວ້ເພື່ອໄພ່ພົນຂອງພຣະອົງ.

ຄົນຜິດບາບຈະມີຄວາມຫວັງເຣື່ອງສວັນໄດ້ຢ່າງໃດ? ຜ່ານພຣະຄຣິດ. ຈົ່ງອ່ານລູກາ 15:11-24, ຄໍາອຸປມາເຣື່ອງລູກທີ່ເສັຽແລ້ວເບິ່ງ ໂຢຮັນ 14:6. ເໝືອນຄົນຜິດບາບ, ລູກຜູ້ນັ້ນໄດ້ຫລົງທາງ (ລູກາ 15: 24), ໄດ້ເປັນຄົນໂງ່ (ລູກາ 15:17), ແລະໄດ້ຕາຍໄປ (ລູກາ 15:24). ແຕ່ລາວໄດ້ກັບມາຫາພໍ່ (15:20). ລາວໄດ້ຫລົງທາງໄປ, ແຕ່ພຣະຄຣິດຊົງເປັນທາງນັ້ນ; ລາວໄດ້ເປັນຄົນໂງ່, ແຕ່ພຣະຄຣິດຊົງເປັນຄວາມຈິງ. ລາວໄດ້ຕາຍໄປ (ຝ່າຍຈິດວິນຍານ), ແຕ່ພຣະຄຣິດຊົງເປັນຊີວິດ. ແລະລາວໄດ້ກັບມາເຖິງບ້ານຂອງພໍ່ຂອງຕົນຫລັງຈາກທີ່ລາວໄດ້ຖິ້ມໃຈເກົ່າເອົາໃຈໃໝ່.

## <u>ຂໍຊົງຊີ້ທາງໃຫ້ພວກເຮົາດ້ວຍ</u> (14:8-11)

ຟີລິບອາດຈະມີບັນຫາເຣື່ອງຕາຂອງເຂົາ: ລາວມີແຕ່ເຫັນ. ຄໍາເວົ້າຄວາມທໍາອິດຂອງເຂົາ "ມາເບິ່ງເອງ" (ໂຢຮັນ 1:46). ຟີລິບໄດ້ເຫັນຄົນຢ່າງຫລວງຫລາຍ ແລະບອກວ່າພຣະຄຣິດຈະຕ້ອງລ້ຽງອາຫານພວກເຂົາ (ໂຢຮັນ 6:7). ຊາວກຣີກໄປຫາຟີລິບແລ້ວບອກວ່າ "ພວກຂ້ານ້ອຍຢາກເຫັນທ່ານເຢຊູແທ້" (ໂຢຮັນ 12: 21). ພຣະເຢຊູຊົງບອກພວກເຂົາຢ່າງແຈ່ມແຈ້ງວ່າຜູ້ທີ່ໄດ້ເຫັນພຣະອົງກໍໄດ້ເຫັນພຣະບິດາ. "ຕັ້ງແຕ່ນີ້ໄປທ່ານທັງຫລາຍກໍຮູ້ຈັກພຣະອົງ," ພຣະເຢຊູໄດ້ສັນຍາໃນໂຢຮັນ 12: 7. ຄວາມເຊື່ອຊ່ວຍພວກເຮົາໃຫ້ເຫັນພຣະບິດາ ເມື່ອພວກເຮົາມາຮູ້ພຣະເຢຊູຄຣິດ.

## <u>ພຣະວິນຍານແຫ່ງຄວາມຈິງ</u> (14:15-18)

ພຣະຄຣິດມີຫລາຍໆຢ່າງເຣື່ອງພຣະວິນຍານບໍຣິສຸດ ທີ່ຈະບອກພວກສາວົກໃນບົດຮຽນຕໍ່ໄປ. ໃນຕອນນີ້ພຣະອົງຊົງເອີ້ນພຣະວິນຍານວ່າ "ຜູ້ຊ່ອຍ" ຊຶ່ງໝາຍເຖິງຜູ້ຢູ່ຄຽງຂ້າງພວກເຮົາເພື່ອຊ່ວຍເຫລືອ. ຄໍາວ່າ "ອີກຜູ້ນຶ່ງ" ໝາຍເຖິງ "ຜູ້ນຶ່ງທີ່ຄ້າຍຄືກັນ," ເພາະພຣະວິນຍານກໍແມ່ນພຣະເຈົ້າເໝືອນກັບພຣະຄຣິດຜູ້ຊົງເປັນພຣະເຈົ້າ. ພຣະວິນຍານຊົງສະຖິດໃນຜູ້ເຊື່ອທຸກໆຄົນ ເໝືອນພຣະເຢຊູຊົງຢູ່ກັບພວກສາວົກ. ພຣະວິນຍານຖືກເອີ້ນວ່າ "ພຣະວິນຍານແຫ່ງຄວາມຈິງ." ພຣະວິນຍານຊົງໃຊ້ພຣະທັມເພື່ອໃຫ້ໂລກຮູ້ຄວາມຜິດບາບ ແລະເພື່ອນໍາພາຜູ້ທີ່ເຊື່ອ. ພຣະທັມຂອງພຣະເຈົ້າຄືຄວາມຈິງ (ໂຢຮັນ 17:7). ໂລກນີ້ບໍ່ສາມາດຈະຮູ້ພຣະວິນຍານເພາະພວກເຂົາບໍ່ຮູ້ພຣະເຈົ້າ.

## <u>ເຮົາມອບຄວາມສງົບສຸກຂອງເຮົາໃຫ້ແກ່ທານ</u> (14:25-27)

ພຣະເຢຊູຊົງຮູ້ວ່າພວກສາວົກບໍ່ອາດສາມາດທີ່ຈະຈົດຈໍາທຸກຢ່າງທີ່ພຣະອົງໄດ້ຊົງສັ່ງສອນພວກເຂົາ. ພຣະອົງໄດ້ຊົງໃຫ້ຄວາມໝັ້ນໃຈແກ່ພວກເຂົາວ່າພຣະວິນຍານບໍຣິສຸດຈະຊົງສອນພວກເຂົາ ແລະຈະຊົງຊ່ວຍພວກເຂົາໃຫ້ລະນຶກເຖິງທຸກໆສິ່ງທີ່ພຣະຄຣິດໄດ້ກ່າວແກ່ພວກເຂົາ.

ພຣະເຢຊູຊົງຮູ້ວ່າພວກສາວົກຍັງຫວັ່ນວາຍແລະຢ້ານກົວໃນສິ່ງທີ່ຈະເກີດຂຶ້ນ. ຂໍ້ 27 ເປັນພຣະທັມທີ່ເໝາະສົມໃນການເລົ້າໂລມຜູ້ທີ່ຢູ່ໃນສະພາບເຊັ່ນນີ້. ພຣະສັນຍາເຫລົ່ານີ້ເປັນຂອງຜູ້ທີ່ເຊື່ອທຸກໆຄົນ, ໂດຍສະເພາະໃນເວລາທີ່ມີຄວາມລໍາບາກ. ຄວາມສງົບທີ່ໂລກນີ້ໃຫ້ເປັນຄວາມສງົບທີ່ບໍ່ຄົງນານ ແຕ່ຄວາມສງົບຂອງພຣະຄຣິດຄົງຢູ່ຕລອດໄປ.

## <u>ພຣະວິນຍານບໍຣິສຸດ</u> (15: 26; 16:7-11, 13-15 )

ພຣະວິນຍານບໍຣິສຸດໄດ້ຖືກສົ່ງລົງມາໂດຍພຣະບິດາເພາະພຣະນາມຂອງພຣະຄຣິດ ແລະຕາມຄໍາຮ້ອງຂໍຂອງພຣະບຸດ (ໂຢຮັນ 14:16, 26; 15:26; 16:7-8). ພຣະວິນຍານເປັນຜູ້ແທນພຣະຄຣິດຢູ່ໃນໂລກ. ພວກສາວົກບໍ່ສາມາດເຂົ້າໃຈໄດ້ທຸກຢ່າງ, ພຣະເຢຊູຄຣິດຈຶ່ງຊົງໃຫ້ຄວາມໝັ້ນໃຈແກ່ພວກເຂົາວ່າການຈາກໄປຂອງພຣະອົງເປັນປໂຍດສໍາລັບພວກ

ເຂົາທັງຫລາຍ.  ພວກເຮົາຮູ້ວ່າການຕາຍຂອງພຣະເຢຊູຄຣິດເປັນເຣື່ອງຈຳເປັນສຳລັບການໄຖ່ຄວາມຜິດບາບຂອງພວກເຮົາ; ແຕ່ສຳລັບສາວົກໃນຕອນນີ້ມັນເປັນເຣື່ອງທີ່ຮັບຍາກເພາະພຣະອົງຊົງຢູ່ກັບພວກເຂົາ ແລ້ວຈະຕ້ອງຈາກໄປ (16:7). ຫລັງຈາກພຣະເຢຊູໄດ້ຈາກໄປ, ພຣະວິນຍານກໍຊົງຢູ່ກັບສາວົກແລະເລົ້າໂລມພວກເຂົາ.

ພຣະວິນຍານບໍຣິສຸດຊົງສືບຕໍ່ວຽກງານການສັ່ງສອນຂອງພຣະຄຣິດຖ້າມກາງພວກສາວົກ (14:26),  ແລະຊົງບັນດົນໃຫ້ໂລກຮູ້ແຈ້ງເຣື່ອງຄວາມຜິດບາບ (16:8-11).  ພຣະວິນຍານຊົງຊ່ວຍພວກສາວົກໃຫ້ລະນຶກເຖິງບົດຮຽນທີ່ພຣະເຢຊູໄດ້ສອນພວກເຂົາ. ຊາຕານຖືກພິພາກສາເວລາພຣະເຢຊູຕາຍທີ່ໄມ້ກາງແຂນ(16:11) ແລະໂລກກໍຖືກພິພາກສາເຊັ່ນກັນເພາະຊາຕານເປັນຜູ້ຄອບຄອງໂລກນີ້.

<u>ຄຳຖາມ:</u>

1. ພຣະສັນຍາເຣື່ອງຄວາມສງົບສຸກມີຄວາມໝາຍແນວໃດສຳລັບຜູ້ທີ່ໄດ້ເສັຽຄູ່ຄອງໄປ? ຜູ້ທີ່ເສັຽລູກ?

2. ພວກເຮົາຈະສາມາດຮັກສາຄຳສັ່ງຂອງພຣະຄຣິດໄດ້ບໍ່ ຖ້າບໍ່ມີພຣະວິນຍານບໍຣິສຸດ? ເປັນຫຍັງ?

3. ທ່ານຄິດວ່າພຣະເຢຊູຄຣິດໝາຍຄວາມວ່າແນວໃດໃນໂຢຮັນ 14:20 ເວລາພຣະອົງຊົງກ່າວວ່າ, "ເຮົາຢູ່ໃນພຣະບິດາຂອງເຮົາ ແລະພວກທ່ານຢູ່ໃນເຮົາ ແລະເຮົາຢູ່ໃນພວກທ່ານ"?

4. ອີງຕາມ ໂຢຮັນ 14:13, ແມ່ນຫຍັງຄືຈຸດປະສົງຂອງການຕອບຄຳອ້ອນວອນ?  ໂລກນີ້ຈະເປັນຢ່າງໃດຖ້າພວກເຮົາເຊື່ອແລະປະພຶດຕາມຄຳເວົ້າຂອງພຣະເຢຊູໃນຂໍ້ 13-14?

*ດຣ. ສິດນີ ຄານ*

# ບົດຮຽນທີ 9
# ຈົ່ງສະຖິດຢູ່ໃນພຣະເຢຊູ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 15: 1-17
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ໂຢຮັນ 15--16
**ຈຸດສຳຄັນຂອງບົດຮຽນນີ້:** ການສະຖິດຢູ່ໃນພຣະເຢຊູນຳໄປສູ່ການເກີດຜົນໃນການຮັບໃຊ້, ແລະເປັນເຄື່ອງໝາຍຂອງຜູ້ຕິດຕາມພຣະເຢຊູທີ່ແທ້ຈິງ.
**ຄຳຖາມເພື່ອການສຳຣວດ:** ການເວົ້າວ່າ "ຄຣິສຕຽນບໍ່ເກີດຜົນ" ເປັນຄຳເວົ້າທີ່ກົງກັນຂ້າມບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອພິສູດເບິ່ງຊີວິດວ່າ ຂ້າພະເຈົ້າໄດ້ສັດຊື່ຮັບໃຊ້ພຣະຄຣິດບໍ່?

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ປະກາດຂ່າວປະເສີດກັບທຸກຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍຮັບໃຊ້ຄວາມຂາດເຂີນດ້ານຮ່າງກາຍ, ວິນຍານ, ແລະຈິດໃຈ.
- ຈັດຕຽມຄົນເພື່ອເປັນຜູ້ນຳຮັບໃຊ້.

## ຄຳນຳ

ເວລາພວກເຮົາສະຖິດຢູ່ໃນພຣະຄຣິດຢ່າງແທ້ຈິງ, ພວກເຮົາເພິ່ງພຣະອົງເຣື່ອງຄວາມຂາດເຂີນຂອງພວກເຮົາ. ພວກເຮົາເຊື່ອຟັງພຣະບັນຍັດເພາະພວກເຮົາຮັກພຣະອົງ.

ສມັຍທີ່ຢູ່ປະເທດລາວ ພໍ່ແມ່ຂອງຂ້າພະເຈົ້າມີສວນກ້ວຍຢູ່ຫລາຍຮ້ອຍຕົ້ນ. ພໍ່ເຄີຍເວົ້າສເມີວ່າໝາກກ້ວຍທີ່ສຸກຈາກຕົ້ນກ້ວຍຈະມີຣົດແຊບກວ່າໝາກກ້ວຍທີ່ຕັດຈາກຕົ້ນແລ້ວນຳມາບົ່ມໃຫ້ສຸກ. ໝາກກ້ວຍທີ່ສຸກຢູ່ກັບຕົ້ນໄດ້ຮັບອາຫານຄົບຈົນເຖິງເວລາສຸກ ແລະກ້ວຍນີ້ຈະຫວານດີກວ່າໝາກກ້ວຍທີ່ສຸກຈາກການບົ່ມ. ໝາກກ້ວຍອາສັຍຕົ້ນກ້ວຍເພື່ອຈະໄດ້ໃຫຍ່ແລະສຸກຢ່າງເຕັມສ່ວນ. ພວກເຮົາຄຣິສຕຽນກໍເຊັ່ນດຽວກັນ ພວກເຮົາຈະຕ້ອງອາສັຍພຣະເຢຊູຄຣິດເພື່ອພວກເຮົາຈະໄດ້ເຕີບໂຕໄປເຖິງຄວາມບໍຣິບູນໃນຄວາມເຊື່ອ.

ໂຢຮັນ 15 ເປັນຄຳອຸປມາຂອງຄວາມສັມພັນຣະຫວ່າງພຣະເຢຊູ ແລະພວກສາວົກທີ່ຕ້ອງດຳເນີນໄປໃນຕອນພຣະອົງຍັງຢູ່ກັບພວກເຂົາ ແລະຫລັງຈາກທີ່ພຣະອົງໄດ້ສິ້ນພຣະຊົນແລ້ວ.

**ຈົ່ງເຂົ້າສະຖິດຢູ່ໃນເຮົາ** (15:1-9)
ສິ່ງນຶ່ງທີ່ພວກເຮົາຄວນຈົດຈຳໄວ້ກໍຄືວ່າ ບໍ່ແມ່ນແຕ່ລະຄວາມໃນຄຳອຸປມາຈະມີຄວາມໝາຍແນວໃດແນວນຶ່ງສເມີ. ຄຳອຸປມາແຕ່ລະເຣື່ອງຈະສອນຄວາມຈິງເຣື່ອງນຶ່ງ ຄວາມຜິດພາດເກີດຂຶ້ນເວລາພວກເຮົາພຍາຍາມແປຄຳອຸປມາ

ເຣື່ອງນີ່ງໃຫ້ໝາຍເຖີງສາມສີ່ຢ່າງ. ຄວາມຈີງໃນຕອນນີ້ແມ່ນພຣະຄຣິດກໍາລັງສອນເຣື່ອງຄວາມສໍາຄັນຂອງການເຂົ້າສນິດຢູ່ໃນພຣະອົງເພື່ອຊີວິດຈະໄດ້ເກີດຜົນ.

ຄໍາວ່າ "ຜົນ" ໄດ້ຖືກໃຊ້ເຖີງຫົກເທື່ອ, ແລະຄໍາວ່າ "ສນິດ" ໄດ້ຖືກໃຊ້ເຖີງສິບຫ້າເທື່ອໃນຄໍາອຸປມານີ້. ຈຸດສໍາຄັນທີ່ສອນໃນຕອນນີ້ແມ່ນເຣື່ອງຄວາມສັມພັນ, ບໍ່ແມ່ນເຣື່ອງການເປັນລູກພຣະເຈົ້າ. ບາງຄົນຕີຄວາມໝາຍຂໍ້ 6 ວ່າ ຄຣິສຕຽນທີ່ບໍ່ມີຜົນໃນຊີວິດຈະຖືກຕັດຖີ້ມ ເຂົາເສັຽຄວາມລອດພົ້ນຂອງຕົນ ແລະຈະຕົກນະຣົກ; ນີ້ແມ່ນການຕີຄວາມໝາຍຜິດແລະບໍ່ຕົງກັບຄວາມຈີງຂອງຄໍາອຸປມາເຣື່ອງນີ້ (ເບິ່ງ ໂຢຮັນ 6:27; 10:27-27) . ນອກຈາກນັ້ນ ເຮົາເຫັນວ່າກີ່ງໃນຂໍ້ 6 ທີ່ພຣະຄຣິດເວົ້າເຖີງນັ້ນໄດ້ຫ່ຽວແຫ້ງຫລັງຈາກທີ່ຖືກຕັດຖີ້ມ; ຖ້າກີ່ງນີ້ໝາຍເຖີງຄຣິສຕຽນທີ່ສູນຫາຍຈະເສັຽຄວາມລອດພົ້ນ, ເຂົາຄົງຈະຫ່ຽວແຫ້ງກ່ອນແລ້ວຈື່ງບໍ່ມີຜົນ ແລະໃນທີ່ສຸດກໍຈະຖືກຕັດຖີ້ມເສັຽ.

ການເຂົ້າສນິດບໍ່ໝາຍເຖີງສີ່ງທີ່ພວກເຮົາຕ້ອງເຮັດເພື່ອຮັກສາຄວາມລອດພົ້ນ, ແຕ່ໝາຍເຖີງການດໍາເນີນຊີວິດໃນພຣະທັມແລະການອ້ອນວອນອະທິຖານ (ຂໍ້ 7), ການຖືຮັກສາຂໍ້ບັນຍັດ(ຂໍ້ 10), ແລະການຮັກສາຊີວິດໃຫ້ບໍຣິສຸດດ້ວຍພຣະທັມຂອງພຣະອົງ (ຂໍ້ 3-4). ຄຣິສຕຽນທີ່ບໍ່ເຂົ້າສນິດຢູ່ໃນພຣະຄຣິດຈະກາຍເປັນເໝືອນກີ່ງທີ່ບໍ່ມີປໂຍດ, ເໝືອນເກືອທີ່ບໍ່ມີຣົດແລະຈະບໍ່ເປັນປໂຍດຫຍັງເລີຍ. ພຣະທັມໃນ 1 ໂກຣິນໂທ 3: 15 ສອນວ່າການງານຂອງພວກເຮົາຈະຖືກທົດສອບດ້ວຍໄຟ. ຄິສຕຽນທີ່ບໍ່ໃຊ້ຂອງພຣະຣາຊທານແລະໂອກາດທີ່ພຣະເຈົ້າຊົງປະທານໃຫ້ຈະສູນເສັຽສີ່ງເຫລົ່ານັ້ນໄປ (ລູກາ 8:18 ແລະ 2 ໂຢຮັນ 8).

ການເປັນກີ່ງທີ່ສນິດຢູ່ໃນເຄືອໝາຍເຖີງການມີຄວາມສັມພັນກັບພຣະຄຣິດ ແລະການມີສ່ວນໃນຊີວິດຂອງພຣະອົງ. ເມື່ອພວກເຮົາເຂົ້າສນິດຢູ່ໃນພຣະອົງ, ຊີວິດຂອງພຣະອົງຈະໄຫລຜ່ານຊີວິດເຮົາ ແລະຈະເຮັດໃຫ້ເກີດຜົນ. ຄຣິສຕຽນເນື້ອໜັງອາດຈະສາມາດເຮັດວຽກໄດ້, ແຕ່ຄຣິສຕຽນທີ່ເຕັມດ້ວຍພຣະວິນຍານຈະສາມາດເກີດຜົນທີ່ຄົງຢູ່. ພວກເຮົາສັງເກດໄດ້ວ່າ ກີ່ງໃນຂໍ້ 2 ຖືກຕອນເພື່ອກີ່ງນັ້ນຈະເກີດຜົນຫລາຍຂື້ນ. ພຣະເຈົ້າຊົງສໍາຣະລ້າງພວກເຮົາດ້ວຍພຣະທັມ, ຕີສອນພວກເຮົາເພື່ອພວກເຮົາຈະເກີດຜົນຫລາຍຂື້ນ; ສະນັ້ນບາງຄັ້ງ ພວກເຮົາໄດ້ເຫັນຄຣິສຕຽນຜູ້ຊື່ສັດເຄີຍຖືກຄວາມທຸກລໍາບາກ. ເວລາຄຣິສຕຽນເຄື່ອນຈາກການມີ "ຜົນ" ໄປສູ່ການມີ "ຜົນຫລາຍຂື້ນ" (ຂໍ້ 2, 8), ພວກເຂົາກໍໄດ້ນໍາກຽດຕິຍົດມາໃຫ້ພຣະຜູ້ເປັນເຈົ້າ. ຫລັກຖານຂອງຊີວິດທີ່ "ສນິດຢູ່ໃນພຣະຄຣິດ" ກໍຄື: ການຮູ້ສຶກເຖີງຄວາມຮັກຂອງພຣະຜູ້ໂຜດ (ຂໍ້ 9), ການເຊື່ອຟັງພຣະທັມ (ຂໍ້ 10), ການຊົງຕອບຄໍາອ້ອນວອນອະທິຖານ (ຂໍ້ 7), ແລະຄວາມຍິນດີໃນພຣະອົງ (ຂໍ້ 11).

<u>**ບັນຍັດເຣື່ອງຄວາມຮັກ**</u> (15:10-17)

ອັນນີ້ແມ່ນພຣະບັນຍັດຂໍ້ທີ 11 ຊື່ງສັ່ງພວກເຮົາທັງຫລາຍໃຫ້ຮັກກັນແລະກັນ. ແນ່ນອນທີ່ສຸດ ຄຣິສຕຽນຜູ້ທີ່ເຂົ້າສນິດຢູ່ໃນພຣະຄຣິດຈະສາມາດຮັກແລະຮ່ວມມືກັບຄຣິສຕຽນຄົນອື່ນໆໄດ້. ການຮັກພີ່ນ້ອງຄຣິສຕຽນດ້ວຍກັນເປັນສັນຍາລັກຂອງສາວົກ. ມາເຖີງຕອນນີ້ ພຣະເຢຊູຊົງເອີ້ນພວກສາວົກຂອງພຣະອົງວ່າ "ມິດສະຫາຍ." ການຊົງສລະພຣະຊົນທີ່ໄມ້ກາງແຂນຊີ້ໃຫ້ເຫັນວ່າພຣະອົງຊົງຮັກພວກເຂົາ, ແຕ່ນີ້ໄປພວກເຂົາຈະຕ້ອງສະແດງອອກວ່າພວກເຂົາໄດ້ຮັກພຣະອົງໂດຍການຮັກໄພ່ພົນຂອງພຣະອົງ. ມິດສະຫາຍຮັກກັນແລະຊ່ວຍເຫລືອຊື່ງກັນແລະກັນ. ພຣະເຢຊູຊົງເອີ້ນໃຫ້ພວກເຮົາເຊື່ອຟັງພຣະອົງໃນຖານະມິດສະຫາຍ, ບໍ່ແມ່ນໃນຖານະຂອງຜູ້ເປັນຂ້ອຍໃຊ້. ເພາະພວກເຮົາເປັນມິດສະຫາຍຂອງພຣະອົງ ແລະພວກເຮົາເຂົ້າສນິດຢູ່ໃນພຣະອົງ, ພວກເຮົາກໍສາມາດຮູ້ພຣະປະສົງ ແລະຮູ້ຄວາມເລິກລັບຂອງພຣະອົງ. ພວກເຮົາຍັງຈົດຈໍາໄດ້ວ່າ ອັບຣາຮາມເປັນມິດສະຫາຍຂອງພຣະເຈົ້າ ແລະພຣະເຈົ້າໄດ້ຊົງບອກແຜນເຣື່ອງເມືອງໂຊໂດມໃຫ້ລາວຮູ້ລ່ວງໜ້າ.

**ຄຳຖາມ:**

1. ການເຂົ້າສນິດຢູ່ໃນພຣະຄຣິດມີຜົນກັບການອ້ອນວອນອະທິຖານແນວໃດແດ່?

2. ມີໃຜແດ່ທີ່ເປັນຕົວຢ່າງຂອງບຸກຄົນທີ່ເຂົ້າສນິດຢູ່ໃນພຣະຄຣິດ ແລະໄດ້ມອບທຸກຢ່າງໄວ້ກັບພຣະອົງ?

3. ທ່ານມີຕົວຢ່າງໃນຊີວິດບໍ່ ທີ່ພຣະເຈົ້າໄດ້ "ຕອນ" ທ່ານເພື່ອໃຫ້ເກີດຜົນຫລາຍຂຶ້ນ?

4. ທ່ານຈະຊ່ວຍຄຣິສຕຽນໃໝ່ວິທີໃດເພື່ອພວກເຂົາເຈົ້າຈະເຂົ້າໃຈຄວາມສຳຄັນຂອງການ "ເຂົ້າສນິດຢູ່ໃນພຣະຄຣິດ"? ພວກເຮົາຈະຊ່ວຍລູກໆຂອງເຮົາວິທີໃດ?

**ການເກີດຜົນ**

ຜົນຂອງສາວົກທຸກຄົນຄືຫຍັງ? ສິດຍາພິບານຫລາຍໆຄົນບອກວ່າ "ໝາກຜົນຂອງຄຣິສຕຽນຄືການໄດ້ນຳຄົນມາເປັນຄຣິສຕຽນ ຫລືການໄດ້ຊ່ວຍຄຣິສຕຽນຄົນອື່ນໆ." ເບິ່ງແລ້ວກໍເປັນຄຳເວົ້າທີ່ໜ້າຟັງ, ແຕ່ບໍ່ມີພຣະຄັມພີທີ່ຈະເປັນພື້ນຖານຂອງຄຳເວົ້ານີ້. ຈາກຄຳເວົ້າຂອງພຣະເຢຊູໃນຕອນນີ້ ພວກເຮົາສັງເກດໄດ້ວ່າພຣະອົງຊົງເນັ້ນເຣື່ອງຄວາມຮັກຊຶ່ງກັນແລະກັນ (ໂຢຮັນ 13:34;15:10,12,17). ໝາກຜົນຂອງຜູ້ເຊື່ອພຣະເຢຊູທີ່ແທ້ຈິງຄືການສະແດງອອກເຖິງຄວາມຮັກ.

ຄວາມຮັກຂອງພຣະຄຣິດບໍ່ເໝືອນກັບຄວາມຮັກທີ່ໂລກໃຫ້. ພວກເຮົາຈະຕ້ອງຮັກເໝືອນຢ່າງພຣະອົງໄດ້ຊົງຮັກ. ພຣະເຢຊູຊົງຮັກສາວົກເຖິງຍອມລ້າງຕີນໃຫ້ພວກເຂົາ (ຊຶ່ງຖືເປັນວຽກທີ່ຕໍ່າຕ້ອຍ, ເບິ່ງ ໂຢຮັນ 13:1-7) ແລະຍອມສລະພຣະຊົນເພື່ອພວກເຂົາ. ພວກເຮົາຈະບໍ່ສາມາດຮັກແບບນີ້ໄດ້ ຈົນກວ່າພວກເຮົາເຂົ້າສນິດຢູ່ໃນພຣະເຢຊູ ແລ້ວໃຫ້ຊີວິດຂອງພຣະອົງໄຫລຜ່ານຊີວິດຂອງພວກເຮົາ.

*ດຣ. ສິດນີ ຄານ*

# <u>ບົດຮຽນທີ 10</u>
# <u>ພຣະເຢຊູຊົງຕ້ອງການຫຍັງຈາກພວກສາວົກ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ໂຢຮັນ 17

**<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u>** ໂຢຮັນ 17

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຢຊູຊົງອ້ອນວອນເພື່ອພວກສາວົກ, ເພື່ອການປົກປັກຮັກສາຈາກມານຮ້າຍ, ເພື່ອການຮັບໃຊ້ໃນໂລກ, ແລະເພື່ອຄວາມເປັນອັນນຶ່ງອັນດຽວກັນຂອງພວກສາວົກ, ອັນນຶ່ງອັນດຽວກັບພຣະເຈົ້າ, ແລະອັນນຶ່ງອັນດຽວກັບພຣະອົງ.

**<u>ຄຳຖາມເພື່ອການສຳຣວດ:</u>** ພຣະເຢຊູຊົງຕ້ອງການສິ່ງໃດຈາກພວກເຮົາ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອການຕັດສິນໃຈວ່າຈະໃຫ້ຄຳອ້ອນວອນຂອງພຣະຄຣິດແນວໃດເກີດຂຶ້ນກັບຊີວິດຂອງຂ້ອຍ?

**<u>ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:</u>**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ປະກາດຂ່າວປະເສີດກັບທຸກຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍຮັບໃຊ້ຄວາມຂາດເຂີນດ້ານຮ່າງກາຍ, ວິນຍານ, ແລະຈິດໃຈ.
- ຈັດຕຽມຄົນເພື່ອເປັນຜູ້ນຳຮັບໃຊ້.

## <u>ຄຳນຳ</u>

ພຣະເຢຊູອ້ອນວອນເພື່ອຄວາມເປັນອັນນຶ່ງອັນດຽວກັນ, ເພື່ອການປົກປັກຮັກສາ, ແລະເພື່ອການຮັບໃຊ້ຂອງພວກສາວົກ, ຊຶ່ງຮ່ວມທັງຜູ້ທີ່ຈະເຊື່ອແລະຕິດຕາມພຣະອົງໃນອະນາຄົດ (ທ່ານແລະຂ້າພະເຈົ້າ).

ໂຢຮັນ 17 ເປັນຄຳອ້ອນວອນທີ່ຍາວທີ່ສຸດຂອງພຣະເຢຊູທີ່ຖືກບັນທຶກໄວ້. ກ່ອນທີ່ແກະຈະຖືກນຳໄປຖວາຍບູຊາເພື່ອຄວາມຜິດບາບ, ປະໂຣຫິດຈະອ້ອນວອນເພື່ອຄົນທັງຫລາຍ. ດ້ວຍເຫດນີ້ ຫລາຍໆຄົນຈະເອີ້ນຄຳອ້ອນວອນຕອນນີ້ວ່າ "ຄຳອ້ອນວອນຂອງປະໂຣຫິດໃຫຍ່." ຈຸດສຳຄັນຂອງຄຳອ້ອນວອນມີຄື: ຖວາຍພຣະກຽດແດ່ພຣະເຈົ້າ, ການປົກປັກຮັກສາພວກສາວົກ, ແລະຄວາມບໍຣິສຸດ.

ຄຳອ້ອນວອນຕອນນີ້ໄດ້ສອນພວກເຮົາຫລາຍໆຢ່າງກ່ຽວກັບ ເຣື່ອງໃນໃຈຂອງພຣະເຢຊູໃນວາຣະສຸດທ້າຍຂອງພຣະອົງໃນໂລກມະນຸດ.

**<u>ພຣະບິດາ, ຂໍຊົງຖວາຍກຽດຕິຍົດແກ່ພຣະບຸດ</u>** (17:1-5)

ຄຳຂວັນສຳຄັນຂອງພຣະທັມໃນຕອນນີ້ຄືພຣະເຢຊູໄດ້ທຳງານເຣື່ອງຄວາມລອດພົ້ນສຳເຣັດແລ້ວ. ເລີ່ມແຕ່ໂຢຮັນ 2:4 ເປັນຕົ້ນມາອັຄສາວົກໂຢຮັນໄດ້ເວົ້າເຖິງ "ເວລາ" ນັ້ນຢູ່ສເມີ. "ຂ້ານ້ອຍໄດ້ເຮັດກິຈການ," ຊຶ່ງໝາຍເຖິງວຽກງານ

ກ່ຽວ ກັບຄວາມພົ້ນຂອງມະນຸດ, ແລະເພາະສິ່ງເຫລົ່ານີ້, "ຂ້ານ້ອຍໄດ້ຖວາຍພຣະກຽດຕິຍົດໃນໂລກນີ້" (ຂໍ້ 4). ພຣະຄຣິດຊົງເບິ່ງໄມ້ກາງແຂນວ່າເປັນວິທີທີ່ພຣະອົງຈະຖວາຍກຽດຕິຍົດແດ່ພຣະບິດາຢູ່ສເມີ (ໂຢຮັນ 12:20). ໂປໂລກໍເໜືອນ ກັນ, ທ່ານໄດ້ແນມເບິ່ງໄມ້ກາງແຂນເພື່ອເປັນທາງທີ່ຈະຖວາຍພຣະກຽດ, (ຄາລາເຕັຽ 6:14)

ພຣະເຢຊູໄດ້ອ້ອນວອນພຣະບິດາໃຫ້ຊົງປະທານກຽດຕິຍົດອີກຄັ້ງນຶ່ງ ເພາະພຣະເຢຊູໄດ້ຊົງປົງໄວ້ເພື່ອຈະລົງມາໃນໂລກມະນຸດ ເພື່ອສລະພຣະຊົນ (ຟີລິບປອຍ 2:1-12). ເວລາດຽວທີ່ພຣະເຢຊູໄດ້ເປີດເຜີຍກຽດຕິຍົດຂອງພຣະອົງໃນໂລກນີ້ ຄືທີ່ພູສູງຕໍ່ໜ້າອັຄສາວົກເປໂຕ, ຢາໂກໂບ, ແລະໂຢຮັນນ້ອງຊາຍຂອງຢາໂກໂບ(ມັດທາຍ 17:1; ໂຢຮັນ 1:14; 2 ເປໂຕ 1:16-18). ສັງເກດຄໍາວ່າ "ຊົງໂຜດ" ໃນຂໍ້ 2: (1) ພຣະບິດາຊົງໂຜດປະທານສິດອໍານາດໃນໂລກນີ້ໃຫ້ພຣະບຸດ, (2) ພຣະບຸດຊົງໂຜດປະທານຊີວິດນິຣັນ, (3) ແດ່ທຸກຄົນທີ່ພຣະບິດາຊົງໂຜດປະທານໃຫ້ພຣະບຸດ. ຄວາມຈິງໃນໂຢຮັນ 17 ອີກປະການນຶ່ງກໍຄື ຜູ້ເຊື່ອທຸກຄົນແມ່ນຂອງປະທານຈາກພຣະບິດາສໍາລັບພຣະບຸດ (ໂຢຮັນ 6:37). ພວກເຮົາບໍ່ສາມາດທີ່ຈະອະທິບາຍຄວາມເລິກລັບນີ້ໄດ້ ແຕ່ພວກເຮົາຂອບພຣະຄຸນພຣະເຈົ້າສໍາລັບເຣື່ອງນີ້. ພຣະເຈົ້າຈະບໍ່ "ຊົງຫລັບພຣະທັຍ (ປ່ຽນໃຈ) ໃນການທີ່ໄດ້ຊົງໃຫ້ຂອງພຣະຣາຊທານແລະຊົງເລືອກໄວ້" (ໂຣມ 11:29). ສິ່ງນີ້ໄດ້ບອກພວກເຮົາໃຫ້ຮູ້ວ່າຄວາມພົ້ນຂອງພວກເຮົານັ້ນໝັ້ນຄົງ ແລະພຣະບິດາຈະບໍ່ເອົາພວກເຮົາອອກໄປຈາກພຣະບຸດ. "ຂ້ານ້ອຍໄດ້ສະແດງພຣະນາມຂອງພຣະອົງ" (ຂໍ້ 6) ຂໍ້ຄວາມນີ້ມີສ່ວນພົວພັນກັບຄໍາເວົ້າຂອງພຣະຄຣິດວ່າ "ເຮົາເປັນ" ໃນພຣະທັມໂຢຮັນ. ພຣະນາມຂອງພຣະເຈົ້າແມ່ນ "ເຮົາເປັນ" (ອົພຍົບ 3:13-14), ແລະພຣະຄຣິດຊົງສະແດງໃຫ້ ພວກເຮົາຮູ້ວ່າພຣະເຈົ້າ "ເຮົາເປັນ" ຊົງເປັນທຸກສິ່ງສໍາລັບພວກເຮົາ ແລະຈະຢູ່ກັບເຮົາບໍ່ວ່າພວກເຮົາຈະຢູ່ທີ່ໃດ. ສໍາລັບຜູ້ທີ່ອຶດຫິວພຣະຄຣິດຊົງກ່າວວ່າ "ເຮົາເປັນເຂົ້າໜົມປັງສໍາລັບຊີວິດ." ສໍາລັບຜູ້ທີ່ຫລົງທາງພຣະອົງຊົງກ່າວວ່າ "ເຮົາເປັນທາງນັ້ນ." ສໍາລັບຜູ້ທີ່ຕາບອດພຣະອົງຊົງກ່າວວ່າ "ເຮົາເປັນແສງສະຫວ່າງສໍາລັບໂລກ."

**<u>ຂ້ານ້ອຍໄດ້ເປີດເຜີຍພຣະອົງກັບສາວົກ</u>** (17: 6-10)

ຈຸດເນັ້ນຕອນນີ້ແມ່ນພຣະເຢຊູໄດ້ອ້ອນວອນເພື່ອພວກສາວົກ. ພຣະເຢຊູໄດ້ຊົງສະແດງພຣະລັກສະນະຂອງພຣະເຈົ້າໃຫ້ສາວົກໄດ້ເຫັນຜ່ານການກະທໍາຂອງພຣະອົງ. ພວກເຂົາຈະເປັນຜູ້ດໍາເນີນງານຕໍ່ໄປໃນໂລກນີ້. ພຣະເຢຊູຊົງຮູ້ຄວາມບົກພ່ອງຕ່າງໆຂອງສາວົກ ແລະພຣະອົງຮູ້ວ່າພວກເຂົາຈະໄດ້ຮັບການປ່ຽນແປງດ້ວຍຂອງພຣະຣາຊທານຈາກພຣະວິນຍານ. ພວກສາວົກຮູ້ວ່າການສັ່ງສອນຂອງພຣະເຢຊູບໍ່ໄດ້ແມ່ນຂອງພຣະອົງເອງ ແຕ່ເປັນສິ່ງທີ່ມາຈາກພຣະບິດາ (17:8).

ໃນຄໍາອ້ອນວອນຂອງພຣະຄຣິດໃນຊ່ວງສຸດທ້າຍນີ້, ພຣະອົງໄດ້ກ່າວເຖິງການເຊື່ອຟັງພຣະເຈົ້າ ເພາະພຣະອົງຊົງປະສົງໃຫ້ພວກສາວົກກະທໍາເຊັ່ນນັ້ນເໜືອນກັນ (15:7-10). ພຣະອົງເນັ້ນວ່າ "ຂ້ານ້ອຍບໍ່ໄດ້ອ້ອນວອນເພື່ອໂລກ... ຂ້ານ້ອຍອ້ອນວອນເພື່ອເຂົາ" (17:9). ພວກສາວົກຈະເປັນພຍານເຣື່ອງພຣະເຢຊູ; ເພາະຄວາມສັດຊື່ຂອງຄົນກຸ່ມນີ້, ຄົນທັງໂລກຈະໄດ້ຮັບຄວາມລອດພົ້ນ. ໃນຂໍ້ 17:10, ພຣະເຢຊູໄດ້ກ່າວເຖິງຄວາມເປັນອັນນຶ່ງອັນດຽວກັນຣະຫວ່າງພຣະບຸດແລະພຣະບິດາ.

**<u>ຂໍຊົງເຕົ້າໂຮມແລະປ້ອງກັນພວກສາວົກ</u>** (17:11-19)

ພຣະເຢຊູຄຣິດຊົງຂໍໃຫ້ພຣະບິດາຈົ່ງພິທັກຮັກສາພວກສາວົກ (ຂໍ້ 11). ຄໍາຂໍນີ້ບໍ່ໄດ້ໝາຍເຖິງວ່າພວກສາວົກຈະເສັຽຄວາມລອດພົ້ນຂອງພວກເຂົາ. ໃຫ້ສັງເກດຄໍາຂໍຮ້ອງທັງໝົດ: "ຂໍພຣະອົງຊົງໂຜດພິທັກຮັກສາເຂົາໄວ້ໂດຍພຣະນາມຂອງພຣະອົງ... ເພື່ອເຂົາຈະເປັນອັນນຶ່ງອັນດຽວກັນ..." ນອກນັ້ນພຣະອົງຊົງຂໍພຣະບິດາໃຫ້ "ຮັກສາເຂົາໄວ້ໃຫ້ພົ້ນຈາກມານຮ້າຍ" (ຂໍ້ 15). ພຣະເຢຊູຊົງຮັກສາແລະປົກປ້ອງພວກສາວົກໃນເວລາທີ່ພຣະອົງຊົງຢູ່ກັບພວກເຂົາ; ແຕ່ໃນຕອນນີ້ ພຣະອົງຈະຕ້ອງຈາກໄປສວັນ, ສະນັ້ນ ພຣະອົງຈຶ່ງອ້ອນວອນພຣະບິດາໃຫ້ຮັກສາພວກເຂົາ.

ຫລາຍຄົນໄດ້ຕີຄວາມໝາຍຜິດໄປວ່າ ຂໍ້ 12 ເວົ້າເຖິງຜູ້ທີ່ເຊື່ອສາມາດເສັຽຄວາມລອດພົ້ນໄດ້. ແຕ່ກົງກັນຂ້າມກັບຄວາມຄິດນີ້, ພຣະເຢຊູຊົງກ່າວວ່າ "ຂ້ານ້ອຍໄດ້ປົກປັກຮັກສາເຂົາໄວ້ ແລະບໍ່ມີຜູ້ໃດໄດ້ເສັຽໄປ ເວັ້ນໄວ້ແຕ່ຜູ້ຖືກຊົງໝາຍໄວ້ສຳລັບຄວາມຈິບຫາຍ." ພຣະທັມຂໍ້ນີ້ຊີ້ໃຫ້ພວກເຮົາເຫັນວ່າ ຢູດາຜູ້ທໍຣະຍົດພຣະເຢຊູບໍ່ໄດ້ເປັນສາວົກທີ່ແທ້ຈິງມາແຕ່ຕອນເລີ່ມຕົ້ນ.

ຄຣິສຕຽນບໍ່ແມ່ນຄົນຂອງໂລກນີ້ ແຕ່ພວກເຂົາເຈົ້າຢູ່ໃນໂລກນີ້ເພື່ອເປັນພຍານໃຫ້ອົງພຣະຄຣິດ. ພວກເຮົາຮັກສາຊີວິດໃຫ້ບໍຣິສຸດດ້ວຍພຣະທັມຂອງພຣະອົງ. ພຣະຄຣິດຊົງສົ່ງພວກເຮົາໄປແທນພຣະອົງຢູ່ໃນໂລກນີ້(ຂໍ້ 18). ນັບວ່າສິ່ງນີ້ເປັນຄວາມຮັບຜິດຊອບອັນຍິ່ງໃຫຍ່ຂອງພວກເຮົາ.

## <u>ຂໍຊົງຊ່ວຍໃຫ້ໂລກໄດ້ຮູ້</u> (17:20-26)

ຄຳອ້ອນວອນຂອງພຣະເຢຊູໃນຕອນນີ້ແມ່ນເພື່ອທ່ານແລະຂ້າພະເຈົ້າ. ນອກຈາກພວກເຮົາສ່ວນບຸກຄົນແລ້ວພຣະເຢຊູໄດ້ຊົງອ້ອນວອນເພື່ອຄຣິສຕະຈັກ ແລະຄົນທີ່ຈະເຊື່ອໃນອະນາຄົດດ້ວຍ. ພຣະອົງຊົງອ້ອນວອນເພື່ອຄວາມເປັນອັນນຶ່ງອັນດຽວກັນ. ການມີຫລາຍກຸ່ມຫລາຍຄະນະສະແດງເຖິງຄວາມບໍ່ເປັນອັນນຶ່ງອັນດຽວກັນຂອງຄຣິສຕຽນບໍ່? ຈາກການສັງເກດເບິ່ງຄຳອ້ອນວອນໃນຕອນນີ້ ພວກເຮົາຈະເຫັນວ່າເປັນຫຍັງພຣະເຢຊູຈຶ່ງອ້ອນວອນເພື່ອການເປັນອັນນຶ່ງອັນດຽນກັນຂອງພວກເຮົາ: 1. "ເພື່ອໂລກຈະໄດ້ເຊື່ອວ່າແມ່ນພຣະອົງແຫລະຊົງໃຊ້ຂ້ານ້ອຍມາ" (17: 21), 2. "ເພື່ອໂລກຈະໄດ້ຮູ້ວ່າ... ພຣະອົງຊົງຮັກເຂົາເໝືອນດັ່ງທີ່ພຣະອົງຊົງຮັກຂ້ານ້ອຍ" (17:23). ຄຣິສຕຽນອາດຈະແຕກຕ່າງກັນເຣື່ອງຄວາມຄິດ ແຕ່ສິ່ງນີ້ບໍ່ສາມາດຈະເປັນອຸປສັກສຳລັບຄວາມຮັກຊຶ່ງກັນແລະກັນ.

ຄຣິສຕຽນທຸກຄົນຈະໄດ້ໄປສວັນຫລັງຈາກຕາຍ ເພາະພຣະຄຣິດໄດ້ຊົງອ້ອນວອນເພື່ອພວກເຂົາ(17:24); ພຣະບິດາໄດ້ຊົງຕອບຄຳອ້ອນວອນຂອງພຣະຄຣິດຕລອດມາ(ໂຢຮັນ 11:41-42). ໃນ 17:26, ພຣະຄຣິດຊົງສັນຍາວ່າຈະເປີດເຜີຍເຣື່ອງພຣະບິດາສືບໆໄປ; ຜ່ານທາງພຣະວິນຍານບໍຣິສຸດ, ພວກສາວົກ ແລະພວກເຮົາໃນສມັຍນີ້ສາມາດຮູ້ຈັກແລະ ເຂົ້າໃຈພຣະຜູ້ເປັນເຈົ້າຫລາຍຂຶ້ນ.

**<u>ຄຳຖາມ:</u>**

1. ມີຫລັກການແນວໃດແດ່ທີ່ຄຣິສຕະຈັກສາມາດໃຊ້ໃນການແກ້ບັນຫາທີ່ມີການຄັດແຍ້ງກັນ?
2. ຄຣິສຕະຈັກຈະຮ່ວມມືກັນວິທີໃດ ໂດຍບໍ່ຕ້ອງປະຖິ້ມຄວາມແຕກຕ່າງດ້ານສາສນາສາດຂອງແຕ່ລະຄົນ?
3. ມີຫຍັງແດ່ທີ່ພວກເຮົາສາມາດໃຊ້ສອນລູກພວກເຮົາໃຫ້ເຂົ້າໃຈວ່າພວກເຂົານັ້ນຢູ່ໃນໂລກ, ແຕ່ບໍ່ແມ່ນຄົນຂອງໂລກນີ້. ທ່ານຄິດວ່າພວກເຮົາໄດ້ເປັນຕົວຢ່າງໃນເຣື່ອງນີ້ດີຫລາຍປານໃດ?
4. ມີບັນຫາແນວໃດແດ່ທີ່ຄຣິສຕະຈັກກຳລັງພົບຢູ່ໃນປັດຈຸບັນ? ພວກເຮົາຈະຮັບໃຊ້ຮ່ວມກັນຢ່າງໄດ້ຜົນ ແມ່ນວ່າພວກເຮົາຈະແຕກຕ່າງກັນໄດ້ວິທີໃດແດ່?

## <u>ສິ່ງທີ່ຄວນຄິດ, ຄວນອ້ອນວອນ, ແລະຄວນປະຕິບັດ</u>

ຄຣິສຕະຈັກບັບຕິດຫລາຍໆບ່ອນເກີດມີຄວາມແຕກແຍກເພາະບັນຫານ້ອຍແລະໃຫຍ່. ເຣື່ອງໃດແດ່ທີ່ກຳລັງເປັນພັຍຕໍ່ການເປັນອັນນຶ່ງອັນດຽວກັນໃນຄຣິສຕະຈັກສມັຍນີ້? ແມ່ນຫຍັງທີ່ເປັນເຣື່ອງໃຫຍ່ ຊຶ່ງພວກເຮົາບໍ່ສາມາດຜ່ອນສັ້ນຜ່ອນຍາວກັນໄດ້? ທ່ານຈະເຮັດຫຍັງແດ່ເພື່ອຈະຮັກສາຄວາມເປັນອັນນຶ່ງອັນດຽວກັນໃນຄຣິສຕະຈັກຂອງທ່ານ?

*ດຣ. ສິດນີ ຄານ*

# ບົດຮຽນທີ 11
# "ສຳເຣັດແລ້ວ"

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 19:13-30
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ໂຢຮັນ 18--19
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຊົງສຳເຣັດວຽກງານທີ່ພຣະເຈົ້າໄດ້ມອບໃຫ້ພຣະອົງໂດຍການສະລະພຣະຊົນເທິງໄມ້ກາງແຂນ.
**ຄຳຖາມເພື່ອການສຳຣວດ:** ແມ່ນຫຍັງທີ່ "ສຳເຣັດ" ທີ່ໂຄລະໂຄທາ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອອະທິບາຍຄວາມໝາຍຂອງໄມ້ກາງແຂນພຣະເຢຊູ ແລະຕັດສິນໃຈວ່າຂ້ອຍຈະຕອບຮັບພຣະອົງວິທີໃດ?

## ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ປະກາດຂ່າວປະເສີດກັບທຸກຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

## ຄຳນຳ

ພຣະເຢຊູສຳເຣັດວຽກງານຂອງພຣະອົງໂດຍການມອບຊີວິດທີ່ໄມ້ກາງແຂນ ເພື່ອເອົາຊະນະອຳນາດຂອງຊາຕານໃນຊີວິດຂອງພວກເຮົາ ແລະເພື່ອເປີດຫົນທາງສຳລັບການໄຖ່ໃຫ້ກັບທຸກຄົນທີ່ເຊື່ອໃນພຣະອົງ.

ມີຫລາຍຢ່າງໃນຊີວິດທີ່ສ້າງຄວາມຊື່ນຊົມຍິນດີໃຫ້ກັບພວກເຮົາ ເມື່ອພວກເຮົາໄດ້ເຮັດສິ່ງເຫລົ່ານັ້ນໃຫ້ສຳເຣັດ . ແຕ່ຄົງບໍ່ມີສິ່ງໃດທີ່ຈະປຽບທຽບກັບຄວາມສຳເຣັດຂອງພຣະເຢຊູ ໃນການຊົງໄຖ່ຊີວິດຂອງພວກເຮົາຜ່ານການຖືກຄຶງທີ່ໄມ້ກາງແຂນ.

**ການຈັບກຸມ ແລະການພິພາກສາພຣະເຢຊູ** (18:1--19:12)
ເຣື່ອງການຖວາຍບູຊາຂອງພຣະເຢຊູໄດ້ມາເຖິງຈຸດເດັ່ນ ຕອນພຣະອົງຖືກຈັບທີ່ສວນໝາກກອກເທດ (18:1-3) . ຖ້າເບິ່ງແຕ່ໜ້າສາກ ກໍຈະເຫັນວ່າຣິດອຳນາດຂອງພຣະເຢຊູໄດ້ສິ້ນສຸດລົງ. ເຖິງວ່າພຣະເຢຊູຈະຍອມມອບຕົວໃຫ້ກັບເຈົ້າໜ້າທີ່ກໍຕາມ, ແຕ່ພຣະອົງຍັງຊົງເປັນຜູ້ຄວບຄຸມສະຖານະການຢູ່ ແລະທຸກຢ່າງກໍຍັງຢູ່ໃນເປົ້າໝາຍຂອງວຽກງານ ທີ່ພຣະເຈົ້າໄດ້ຊົງມອບໃຫ້ພຣະອົງທຳ. ການຍອມຈຳນົນຂອງພຣະເຢຊູນັ້ນຢູ່ກັບຂໍ້ແມ້ທີ່ວ່າພວກສາວົກຈະຕ້ອງຖືກປ່ອຍຕົວ (18:8).

ພຣະທັມໂຢຮັນບັນທຶກການສອບສວນພຣະເຢຊູເປັນສອງພາກ. ພາກທຳອິດ ພຣະອົງຖືກສອບສວນໂດຍອັນນາຜູ້ເປັນພໍ່ເມັຽຂອງກາຢະຟາຊຶ່ງເປັນປະໂຣຫິດປະຈຳການໃນປີນັ້ນ (18:12-24). ອັນນາສົ່ງພຣະອົງໄປໃຫ້ກາຢະຟາແລະກາ

ຢະຟາໄດ້ສົ່ງພຣະເຢຊູໄປຫາປີລາດ. ການສອບສວນພາກທີສອງແມ່ນຢູ່ຕໍ່ໜ້າປີລາດຜູ້ເປັນເຈົ້າແຂວງຂອງກຸງໂຣມທີ່ຢູດາຍ. ພຣະເຢຊູຊົງບອກປີລາດວ່າຄຳສອນຂອງພຣະອົງລ້ວນແຕ່ເປັນຄວາມຈິງ (18:29-37). ປີລາດສລູບການສອບສວນດ້ວຍຄຳວ່າ "ຄວາມຈິງນັ້ນຄືອັນໃດ"? ຫລາຍຄົນໃນສມັຍນີ້ຍັງສົນໃຈໃນຄຳຖາມນີ້ຢູ່.

ເມື່ອບໍ່ເຫັນຄວາມຜິດຫຍັງໃນຕົວພຣະເຢຊູ, ຄົນທັງຫລາຍກໍຮ້ອງໂຮໃຫ້ປີລາດປ່ອຍບາຣາບາ ແທນທີ່ຈະປ່ອຍພຣະເຢຊູ. ຈາກການສອບສວນເຖິງສອງຄັ້ງປີລາດບໍ່ມີເຫດຜົນແນວໃດທີ່ຈະກັກຂັງພຣະອົງ. ແຕ່ພວກຜູ້ນຳຂອງຊາວຢິວມີເຈຕນາທີ່ຈະນຳພຣະເຢຊູໄປຄຶງໄວ້ທີ່ໄມ້ກາງແຂນ; ພວກເຂົາຈຶ່ງກົດດັນໃຫ້ປີລາດພິພາກສາພຣະອົງ (19:1-12).

**<u>ການລົງໂທດພຣະເຢຊູ</u>** (19: 13-16)

ການພິພາກສາພຣະເຢຊູໂດຍປີລາດມາເຖິງຈຸດສຸດຍອດ ເມື່ອພວກຢິວພາກັນຮຽກຮ້ອງໃຫ້ປະຫານພຣະອົງຜູ້ຊົງບໍ່ມີຄວາມຜິດ. ປີລາດຮູ້ວ່າພຣະເຢຊູບໍ່ມີຄວາມຜິດແຕ່ເຂົາໄດ້ຖືກກົດດັນຈາກພວກສັດຕຣູຂອງພຣະອົງ. ປີລາດພາພຣະເຢຊູມາທີ່ບັນລັງຂອງເຂົາແລະປະກາດໂທດໃຫ້ທຸກຄົນພໍໃຈ (19:13). ຕອນນັ້ນກໍເປັນເວລາທ່ຽງວັນຂອງວັນຈັດແຈງປັສຄາ. ວັນປັສຄາເປັນວັນສລອງການປົດປ່ອຍຊົນຊາດອິສຣາເອັນຈາກການເປັນຂ້າທາດໃນປະເທດອີຢິບ; ພຣະເຈົ້າໄດ້ສະແດງຄວາມຍິ່ງໃຫຍ່ຂອງພຣະອົງຊຶ່ງເໜືອຄວາມຍິ່ງໃຫຍ່ຂອງກະສັດຜູ້ຄວບຄຸມຊາວອິສຣາເອັນ (ອພຍ 12).

ປີລາດກ່າວກັບພວກຢິວວ່າ "ນີ້ຄືກະສັດຂອງພວກທ່ານ" (19:14) ຊຶ່ງເປັນຄຳເວົ້າສຽດສີສຳລັບພວກເຂົາ. ຄວາມຈິງແລ້ວ ຄຳເວົ້ານີ້ແມ່ນແນໃສ່ພວກຜູ້ນຳຊາວຢິວ ແລະໂດຍສະເພາະແມ່ນພວກຟາຣີຊາຍທີ່ຕໍ່ຕ້ານພຣະເຢຊູ. ທ່າມກາງຄວາມສັບສົນເຫລົ່ານັ້ນ, ພຣະເຢຊູຊົງງຽບຢູ່ ແລະຊົງຕັ້ງພຣະທັຍໃສ່ຊີວິດຂອງຄົນທັງຫລາຍທີ່ພຣະອົງຈະຕ້ອງຍອມໃຫ້ຊີວິດຂອງຕົນເອງເພື່ອເປັນຄ່າໄຖ່ສຳລັບພວກເຂົາ. ໃນທີ່ສຸດ ປີລາດກໍປ່ອຍບາຣາບາໃຫ້ເປັນອິສຣະແລະມອບພຣະເຢຊູໃຫ້ພວກຊາວຢິວ (19:16).

**<u>ການຖວາຍບູຊາພຣະເຢຊູ</u>** (19:17-27)

ທະຫານໄດ້ຄຸມພຣະເຢຊູໄປທີ່ໂຄລະໂຄທາ ແລະເຂົາໄດ້ໃຫ້ພຣະອົງແບກໄມ້ກາງແຂນຂອງພຣະອົງ. ພວກເຂົາໄດ້ຄຶງພຣະອົງທີ່ໄມ້ກາງແຂນຣະຫວ່າງກາງຄົນຮ້າຍສອງຄົນ. ອັຄສາວົກໂຢຮັນເບິ່ງການຄຶງພຣະເຢຊູທີ່ໄມ້ກາງແຂນວ່າເປັນການຍົກພຣະອົງຂຶ້ນເພື່ອທຸກຄົນຈະໄດ້ເຫັນ (ໂຢຮັນ 3:14; 8:28;12:32). ໂຢຮັນບັນທຶກຫລາຍໆຢ່າງສຳຄັນເຣື່ອງການຖວາຍບູຊາພຣະເຢຊູເຊັ່ນ: ພຣະນາມທີ່ປີລາດຕັ້ງໃຫ້ພຣະອົງ, " ເຢຊູໄທນາຊາເຣັດ ກະສັດຂອງຊາດຢິວ" (19:19). ປ້າຍພຣະນາມຖືກຂຽນເປັນສາມພາສາ, ອາຣາແມອິ ຊຶ່ງເປັນພາສາຂອງຊາດຢິວ, ລາຕິນ ຊຶ່ງເປັນພາສາຂອງຊາວໂຣມ, ແລະກຣີກ ຊຶ່ງເປັນພາສາທີ່ຄົນສ່ວນຫລາຍຮູ້ດີໃນສມັຍນັ້ນ. ປີລາດພຍາຍາມສຽດສີຊາດຢິວ ແລະເຂົາບໍ່ຮູ້ຕົວວ່າຕົນເອງກຳລັງປະກາດຄວາມຈິງຂອງຂ່າວປະເສີດ. ຜູ້ທີ່ເຄີຍຖາມວ່າຄວາມຈິງນັ້ນຄືອັນໃດ ໄດ້ກາຍເປັນຜູ້ທີ່ພຣະເຈົ້າຊົງໃຊ້ເພື່ອປະກາດຄວາມຈິງ. ບໍ່ມີສິ່ງໃດຈະກີດກັ້ນແຜນການໄຖ່ຂອງພຣະຜູ້ເປັນເຈົ້າ.

ຈຸດສຳຄັນທີສອງໃນການຄຶງພຣະເຢຊູທີ່ໄມ້ກາງແຂນແມ່ນເຣື່ອງທະຫານເອົາເຄື່ອງທົງຂອງພຣະອົງມາແບ່ງປັນກັນໃຫ້ເປັນສີ່ພູດ (19:23-24). ຕາມທັມນຽມຂອງໂຣມເຣື່ອງການປະຫານນັກໂທດ, ສິ່ງຂອງຕ່າງໆຂອງນັກໂທດຈະເປັນຂອງຜູ້ປະຫານ. ແຕ່ໃນຄັ້ງນີ້ ພວກທະຫານໄດ້ເຮັດຕາມຣະບຽບຂອງພວກໂຣມ ແລະໄດ້ເຮັດໃຫ້ຄຳທຳນວາຍໃນບົດເພງສັຣເສີນ 22:18 ສຳເຣັດລົງໂດຍບໍ່ຮູ້ຕົວ. ມີຍາດຂອງພຣະເຢຊູຫລາຍໆຄົນເຊັ່ນ ມານດາ, ນ້າສາວ, ນາງມາຣີອາເມັຽຂອງກະໂລປາ, ແລະນາງມາຣີອາໄທມັກດາລາໄດ້ເປັນພຍານໃນເຫດການຕອນນີ້. ນອກນັ້ນຍັງມີສາວົກບາງຄົນທີ່ຢືນເບິ່ງຢູ່ຫ່າງໆ.

ເນື່ອງຈາກຄວາມຍຸ້ງຍາກໃນວຽກງານ, ພວກເຮົາໄດ້ເມີນເສີຍຕໍ່ຄອບຄົວທີ່ພຣະເຈົ້າຊົງມອບໃຫ້ພວກເຮົາດູແລ. ແຕ່ພຣະເຢຊູຊົງໃຫ້ເວລາກັບມານດາຂອງພຣະອົງ ໃນຂະນະທີ່ພຣະອົງຈະຕ້ອງໄດ້ເຮັດວຽກສຳຄັນທີ່ໄມ້ກາງແຂນ. ຊັຍຊະນະໃນໂລກນີ້ຈະມີປໂຍດຫຍັງ ຖ້າພວກເຮົາເສັຽຄົນທີ່ພວກເຮົາຮັກທີ່ສຸດໄປ?

**<u>ສະພາບຂອງພຣະເຢຊູ</u>** (19:28-30)
ບໍ່ມີສິ່ງໃດທີ່ຈະສາມາດແຍກພຣະເຢຊູຈາກວຽກທີ່ພຣະເຈົ້າຊົງໄດ້ມອບໃຫ້ພຣະອົງ. ພຣະເຢຊູໄດ້ຊົງຈ້ອງໃສ່ພັນທະກິດນັ້ນຈົນເຖິງລົມຫາຍໃຈສຸດທ້າຍ. ອັຄສາວົກໂຢຮັນໄດ້ບັນທຶກຖ້ອຍຄຳສຸດທ້າຍຂອງພຣະເຢຊູສອງຢ່າງໃນຂະນະທີ່ພຣະອົງຖືກຄຶງຢູ່ທີ່ໄມ້ກາງແຂນ. ຄຳທຳອິດແມ່ນ "ເຮົາຢາກນ້ຳ" (19:28). ພວກທະຫານໄດ້ເອົາປາຍໄມ້ຫູສົບຈຸ່ມເຫລົ້າແວງສົ້ມສົ່ງໃຫ້ພຣະອົງທານ. ຊາດອິສຣາເອັນໄດ້ໃຊ້ງ່າໄມ້ຫູສົບຈຸ່ມເລືອດສຳລັບທາເສົາປະຕູເພື່ອມັດຈຸຣາດແຫ່ງຄວາມຕາຍຈະໄດ້ຂ້າມບ້ານຂອງພວກເຂົາ (ອພຍ12:22). ຄຳສຸດທ້າຍຂອງພຣະເຢຊູແມ່ນ "ສຳເຣັດແລ້ວ" (19:30). ພຣະເຢຊູຄຣິດຊົງມອບຊີວິດຂອງພຣະອົງເອງເພື່ອແຜນການໄຖ່ມະນຸດຂອງພຣະເຈົ້າ. ພຣະເຢຊູໄດ້ຊົງທຳງານນັ້ນສຳເຣັດແລ້ວ.

ໂຢເຊບໄທບ້ານອາຣິມາທາຍຊຶ່ງເປັນຜູ້ນຶ່ງໃນຈຳນວນລູກສິດໄດ້ເຮັດໜ້າທີ່ເປັນຜູ້ຝັງສົບຂອງພຣະເຢຊູ (19:38). ໂຢເຊບເປັນຄົນຮັ່ງມີ (ມທ 27:57), ລາວເປັນສະມາຊິກຄົນສຳຄັນໃນສານສູງ (ມາຣະໂກ 15:43; ລູກາ 23:50), ແລະລາວເປັນຄົນດີແລະມີຄວາມຊອບທັມ (ລູກາ 23:50). ປີລາດໄດ້ມອບສົບພຣະເຢຊູໃຫ້ໂຢເຊບ ອາດຈະເປັນເພາະໂຢເຊບເປັນຄົນມີອຳນາດໃນຊົນຊາດຢິວ.

ນີໂກເດມກໍແມ່ນລູກສິດອີກຄົນນຶ່ງທີ່ໄດ້ຊ່ວຍໃນການຝັງສົບພຣະເຢຊູ. ນີໂກເດມໄດ້ເຄີຍໄປພົບພຣະເຢຊູໃນຕອນກາງຄືນ (ໂຢຮັນ 3). ການກະທຳຂອງໂຢເຊບ ແລະນີໂກເດມໃນຄັ້ງນີ້ຕ້ອງຖືວ່າເປັນຄວາມກ້າຫານທີ່ພວກເຂົາໄດ້ສະແດງອອກ, ແຕ່ກ່ອນນັ້ນພວກເຂົາເປັນຄົນຢ້ານຖືກຕຳນິ ແຕ່ຕອນນີ້ພວກເຂົາກາຍເປັນຄົນກ້າຫານ. ຄວາມຢ້ານກົວບໍ່ມີສຳລັບຄວາມຮັກແທ້.

**<u>ຄຳຖາມ:</u>**
1. ເປັນຫຍັງຈຶ່ງສຳຄັນທີ່ພຣະເຢຊູຈະຕ້ອງເຮັດວຽກຂອງພຣະອົງທີ່ໄມ້ກາງແຂນໃຫ້ສຳເຣັດ?

2. ມີໃຜແດ່ໃນຄອບຄົວທີ່ທ່ານສາມາດເພິ່ງອາສັຍໄດ້ໃນເວລາຂັດສົນທີ່ສຸດ?

3. ທ່ານໃຊ້ວິທີໃດບໍຣິຫານຄອບຄົວ ແລະເຮັດໜ້າທີ່ໄປພ້ອມໆກັນ?

4. ທ່ານມີໂອກາດທີ່ຈະເປີດເຜີຍຕົວເອງໃນສັງຄົມບໍ່? ຄົນທີ່ຮູ້ກັບທ່ານເຂົາຕື່ນບໍ່?

5. ການຖືກຄຶງທີ່ໄມ້ກາງແຂນຂອງພຣະເຢຊູມີຄວາມໝາຍແນວໃດສຳລັບທ່ານ?

*ດຣ. ສິດນີ ຄານ*

# ບົດຮຽນບົດທີ 12
# ເຮົາສົ່ງທ່ານໄປ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 20:1-21
**ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:** ໂຢຮັນ 20
**ຈຸດສຳຄັນຂອງບົດຮຽນນີ້:** ການຟື້ນພຣະຊົນສແດງເຖິງຄວາມເປັນພຣະເຈົ້າ ດັ່ງນັ້ນຈຶ່ງຊົງສັ່ງເຮົາທັງຫລາຍອອກໄປບອກຂ່າວດີນີ້.
**ຄຳຖາມເພື່ອການສຳຣວດ:** ພຣະເຢຊູຜູ້ຊົງຟື້ນພຣະຊົນສັ່ງໃຫ້ທ່ານໄປທາງໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊັກຊວນໃຫ້ພວກເຮົາອອກໄປບ່ອນທີ່ພຣະອົງສົ່ງໃຫ້ໄປ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.
- ປະກາດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ເຫັນທຸກຄົນເປັນສີພຣະທັດຂອງອົງພຣະຜູ້ເປັນເຈົ້າ.

## ບົດນຳ

ຊີວິດເປັນຂອງມີຄ່າຫລາຍກວ່າສິ່ງໃດໆໃນໂລກ ທຸກຄົນທຳມາຫາກິນກໍເພື່ອຊີວິດ, ເຮັດທຸກສິ່ງທຸກຢ່າງກໍເພື່ອຊີວິດ ແຕ່ແລ້ວວັນນຶ່ງຊີວິດນີ້ກໍຕ້ອງໝົດໄປຢ່າງໜ້າເສັຽດາຍ ທຸກສິ່ງທຸກຢ່າງທີ່ຫາມາດ້ວຍຄວາມຍາກລຳບາກກໍກາຍເປັນຂອງຜູ້ອື່ນຢ່າງບໍ່ຕ້ອງສົງສັຍ. ດ້ວຍເຫດນີ້ແຫລະຄົນເຮົາຈຶ່ງພະຍາຍາມສ້າງຄຸນງາມຄວາມດີ ສແວງຫາທາງແຫ່ງຄວາມພົ້ນໂດຍການເຊື່ອຖືສາສນາ, ແມ່ນແລ້ວສາສນາສອນໃຫ້ເປັນຄົນດີທຸກສາສນາ ແຕ່ແລ້ວຜູ້ນຳສາສນາກໍຕາຍໄປຢ່າງໜ້າເສັຍດາຍ ມີແຕ່ພຣະເຢຊູເທົ່ານັ້ນທີ່ຕາຍໄປສາມວັນແລ້ວຄືນມາ ແລະສະເດັດຂຶ້ນສວັນທັງເປັນ ດ້ວຍເຫດນີ້ເພິ່ນຈຶ່ງສັ່ງສາວົກຂອງພຣະອົງອອກໄປບອກຄົນທົ່ວໂລກກ່ຽວກັບເຣື່ອງການຄືນມາຈາກຕາຍຂອງພຣະອົງ.

**ອຸບໂມງຫວ່າງເປົ່າ** ( 20:1-9 )

ມາຣີອາໄທເມືອງມັກດາລາຜູ້ນີ້ໄດ້ຢືນເຝົ້າທີ່ໄມ້ກາງແຂນ ແຕ່ເລີ່ມຕົ້ນແຕ່ອອກໄປຄືງທີ່ໂຄລະໂຄທາບ່ອນເຂົາຄຶງພຣະເຢຊູ, ນາງໄດ້ຢືນເບິ່ງເຂົາທໍຣະມານພຣະເຢຊູຈົນສິ້ນໃຈດ້ວຍນໍ້າຕາຫລັ່ງໄຫລ, ນາງໄດ້ຍ່າງຕາມສົບຂອງພຣະເຢຊູໄປໃນຂະນະທີ່ເຂົາເອົາສົບຂອງພຣະອົງໄປບັນຈຸໃນຖໍ້າ ນາງໄດ້ເຫັນເຂົາເອົາຫີນແຜ່ນໃຫຍ່ອັດປາກຖໍ້າໄວ້ຢ່າງແໜ້ນໜາ ແລະນາງກໍຢູ່ທີ່ນັ້ນຈົນຄໍ່າມືດ. ກ່ອນຮຸ່ງແຈ້ງວັນໃຫມ່ ນາງມາຣີອາໄທເມືອງມັກດາລາຜູ້ນີ້ ແລະມາຣີອາອີກຜູ້ນຶ່ງໄດ້ນຳພວກຜູ້ຍິງກຸ່ມນຶ່ງໄປຍັງຖໍ້າຝັງສົບພຣະເຢຊູກ່ອນແຈ້ງສະວ່າງໂດຍຫວັງໃຈວ່າຈະໄປຂາບໄຫວ້ສົບຂອງພຣະເຢຊູດ້ວຍນໍ້າຫອມຣາຄາແພງ. *"ຜູ້ຍິງເຫລົ່ານັ້ນໄດ້ນຳເອົາ ເຄື່ອງຫອມທີ່ຈັດໄວ້ພາກັນໄປເຖິງອຸບໂມງ "* (ລູກາ

24:1). ນາງມາຣີອາຮູ້ຢູ່ແລ້ວໃນການໄປທົດສົງພຣະສົບຈະຕ້ອງມີບັນຫາເພາະນາງເຫັນຫີນແຜ່ນໃຫຍ່ປິດປາກຖ້ຳ ແຕ່ກໍພາກັນໄປຢ່າງງຽບສງົບ ແຕ່ພໍເມື່ອໄປເຖິງປາກຖ້ຳພວກນາງກໍເຫັນປາກຖ້ຳທີ່ປິດດ້ວຍຫີນນັ້ນເປີດຢູ່ *"ນາງໄດ້ເຫັນກ້ອນຫີນຖືກຍ້າຍອອກຈາກປາກອຸບໂມງແລ້ວ" (ໂຢຮັນ 20:1).* ຂ້າພະເຈົ້າອາດພາບເບິ່ງວ່າເມື່ອພວກນາງມາຣີອາເຫັນປາກຖ້ຳເປີດຢູ່ ແນ່ນອນພວກນາງຕ້ອງແລ່ນເຂົ້າໄປໃນຖ້ຳຢ່າງປລາດໃຈ ແລະເມື່ອເຂົ້າໄປແລ້ວບໍ່ເຫັນສົບພຣະເຢຊູກໍຍິ່ງປລາດໃຈອີກ ແລະຄິດວ່າມີຄົນລັກສົບພຣະເຢຊູໄປແລ້ວ.

*"ເມື່ອເຂົາກຳລັງຄຶດສງົນສົນເທດ້ວຍເຫດການນັ້ນ ເບິ່ງແມ, ມີຊາຍສອງຄົນຍືນຢູ່ໃກ້ເຂົາ ນຸ່ງເຄື່ອງອັນງົດງາມຈົບເຫລື້ອມຕາ ຝ່າຍແມ່ຍິງນັ້ນກໍຢ້ານແລະກົ້ມໜ້າລົງເຖິງດິນ"* (ລູກາ 24:4). ມັນອາດຈະເປັນການຢ້ານຢ່າງບອກບໍ່ຖືກດ້ວຍວ່າເວລາພວກຜູ້ຍິງພາກັນເຂົ້າໄປນັ້ນບໍ່ເຫັນຊາຍທັງສອງເລີຽ ຢູ່ງກໍປາກົດຂື້ນຈຶ່ງເປັນໜ້າຢ້ານສຳລັບພວກນາງນີ້ແມ່ນຄຳຊີ້ແຈງຂອງລູກາ ສ່ວນໂຢຮັນກ່າວວ່າ *"ນາງຈຶ່ງແລ່ນໄປຫາຊີໂມນເປໂຕແລະສາວົກຜູ້ອື່ນໆ ທີ່ພຣະເຢຊູຊົງຮັກແພງນັ້ນ"* (ໂຢຮັນ 20:2ກ). ເປັນການແລ່ນແບບບໍ່ຮູ້ເມື່ອຍດ້ວຍຄວາມຕົກໃຈ ເມື່ອໄປເຖິງແລ້ວກໍເອົ້າຂື້ນດ້ວຍ ຄວາມຕົກໃຈ *"ເຂົາໄດ້ເອົາສົບຂອງພຣະອາຈານອອກຈາກອຸບໂມງໄປແລ້ວ ແລະພວກເຮົາບໍ່ຮູ້ຈັກວ່າເຂົາເອົາໄວ້ທີ່ໃດ".* (ຂໍ້ 2ຂ). ເມື່ອເປໂຕກັບພວກສາວົກໄດ້ຍິນດັ່ງນັ້ນຈຶ່ງພາກັນແລ່ນໄປຍັງອຸບໂມງ ແລະກໍເຫັນແຕ່ຜ້າປົກຫົວພັບໄວ້ ຕ່າງຫາກ *"ແລ້ວເຂົາກໍ ເຂົ້າໄປໃນອຸບໂມງ ແລະເຫັນຜ້າປ່ານກອງຢູ່ ແລະຜ້າປົກພຣະສຽນຂອງພຣະອົງບໍ່ໄດ້ກອງຢູ່ກັບຜ້າອື່ນ ແຕ່ພັບໄວ້ຕ່າງຫາກ"* (ຂໍ້ 7). ນັກສາສນາສັນຣະສູດວ່າພຣະເຢຊູຄືນມາຈາກຕາຍແທ້ຈຶ່ງພັບຜ້າເຫລົ່ານີ້ໄວ້ຢ່າງເປັນຣະບຽບສວຍງາມ ຫາກແມ່ນມີຄົນລັກເອົາສົບໄປເຂົາຄົງບໍ່ມີເວລາຫລືມີໃຈຢາກພັບຜ້າແນວນີ້.

ຈາກນັ້ນພວກສາວົກອື່ນໆຮ່ວມທັງສາວົກໂຢຮັນກໍມາເຖິງອຸບໂມງແລະກໍເຊື່ອ ແຕ່ຍັງບໍ່ທັນເຂົ້າໃຈພຣະຄັມພີທີ່ຂຽນບອກວ່າພຣະອົງຈະຄືນມາຈາກຕາຍໃນວັນຖ້ວນສາມ *"ແລ້ວພວກສາວົກຜູ້ອື່ນທີ່ມາເຖິງກ່ອນນັ້ນກໍໄດ້ເຂົ້າໄປເໝືອນກັນ ກໍໄດ້ເຫັນແລະເຊື່ອ ເພາະໃນຂະນະນັ້ນເຂົາຍັງບໍ່ທັນເຂົ້າໃຈຂໍ້ພຣະຄັມພີທີ່ຂຽນໄວ້ວ່າ ພຣະອົງຈະຕ້ອງຄືນມາຈາກຄວາມຕາຍ"* (ຂໍ້ 8-9). ພຣະຄັມພີຕອນນີ້ບົ່ງບອກເຮົາວ່າ ຄວາມເຊື່ອຕ້ອງມາກ່ອນຄວາມຮູ້ ຄືຄວາມຮູ້ເຣື່ອງພຣະເຈົ້າ. ດັ່ງທີ່ໂຢຮັນໄດ້ເວົ້າວ່າ *ໄດ້ເຫັນແລະເຊື່ອ ເພາະໃນຂະນະນັ້ນເຂົາຍັງບໍ່ທັນເຂົ້າໃຈຂໍ້ພຣະຄັມພີ.*

**<u>ຊົງຟື້ນແລ້ວ</u>** ( 20:10-18 )

ຫລັງຈາກນັ້ນພວກສາວົກກໍກັບໄປຍັງບ້ານເຮືອນຂອງຕົນ ແຕ່ມາຣີອາຍັງບໍ່ຍອມໜີຈາກທີ່ນັ້ນຄ້າຍຄືກັບວ່ານາງກຳລັງຊອກຫາອັນໃດອັນນຶ່ງ *"ຂນະທີ່ຍັງຮ້ອງໄຫ້ຢູ່ນາງໄດ້ກົ້ມຫລຽວໄປທາງອຸບໂມງ ແລະນາງໄດ້ເຫັນເທວະດາສອງຕົນນັ່ງຢູ່ບ່ອນເຂົາວາງພຣະສົບຂອງພຣະເຢຊູ ຕົນນຶ່ງຢູ່ເບື້ອງພຣະສຽນ ຕົນນຶ່ງຢູ່ເບື້ອງພຣະບາດ ເທວະດານັ້ນໄດ້ຖາມນາງວ່າ ນາງເອີຍ, ເຈົ້າຮ້ອງໄຫ້ເຮັດຫຍັງ ນາງຈຶ່ງຕອບວ່າ ເພາະເຂົາເອົາສົບຂອງພຣະອາຈານຂອງຂ້ານ້ອຍໄປແລ້ວ ແລະຂ້ານ້ອຍບໍ່ຮູ້ວ່າເຂົາເອົາໄປວາງໄວ້ບ່ອນໃດ"* (ຂໍ້ 12-13) . ຄວາມອົດທົນດົນນານດ້ວຍຄວາມຮັກເຮັດໃຫ້ນາງຢູ່ຈົນເຫັນການອັສຈັນໂດຍເຫັນເທວະດາທັງສອງ ແຕ່ນາງບໍ່ຮູ້ວ່າແມ່ນເທວະດາດ້ວຍວ່າເທວະດາບໍ່ໄດ້ປາກົດໃນຮູບຮ່າງເທວະດາ ແຕ່ປາກົດໃນຮູບຮ່າງຄົນທັມະດາດ້ວຍເຫດນີ້ນາງຈຶ່ງຕອບເທວະດາວ່າ *ເຂົາເອົາສົບຂອງພຣະອາຈານຂອງຂ້ານ້ອຍໄປແລ້ວ ແລະຂ້ານ້ອຍບໍ່ຮູ້ວ່າເຂົາເອົາໄປວາງໄວ້ບ່ອນໃດ* ນາງອາດຈະຄິດວ່າມີຄົນມາລັກເອົາສົບຫລືພວກທະຫານຍ້າຍສົບໄປໄວ້ບ່ອນອື່ນເພື່ອບໍ່ໃຫ້ພວກສາວົກມາລົບກວນ, ຫລັງຈາກນາງສົນທະນາກັບເທວະດາໃນຄາບຂອງມະນຸດແລ້ວນາງກໍຫລຽວຫລັງມາເຫັນພຣະເຢຊູ *"ເມື່ອເວົ້າດັ່ງນັ້ນແລ້ວນາງໄດ້ຫລຽວຫລັງມາເຫັນພຣະເຢຊູຢືນຢູ່ແຕ່ບໍ່ຮູ້ວ່າແມ່ນອົງພຣະເຢຊູ ພຣະເຢຊູຈຶ່ງຖາມນາງວ່າ ນາງເອີຍ, ເຈົ້າຮ້ອງໄຫ້ເຮັດຫຍັງ ເຈົ້າຊອກຫາຜູ້ໃດ"* (ຂໍ້ 14-15ກ). ມາຣີອາເບິ່ງພຣະເຢຊູແຕ່ບໍ່ຮູ້ວ່າແມ່ນພຣະອົງ, ແຕ່ເຫັນພຣະອົງເປັນຄືຄົນເຝົ້າສວນຜູ້ນຶ່ງຊື່ໆ. ພຣະເຢຊູກ່າວຄຳອຸປະມາອາການບອດຝ່າຍຈິດວິນຍານວ່າ *"ເຂົາເບິ່ງແຕ່ບໍ່ເຫັນ"* (ມັດທາຍ 13:13). ພຣະເຢຊູຈຶ່ງຖາມນາງວ່າ *ນາງເອີຍ, ເຈົ້າຮ້ອງໄຫ້ເຮັດຫຍັງ ເຈົ້າຊອກຫາຜູ້ໃດ?* ຄຳຖາມນີ້ບໍ່ໄດ້ໝາຍຄວາມວ່າພຣະອົງບໍ່ຮູ້ວ່າ

ນາງຮ້ອງໄຫ້ຊອກຫາພຣະອົງ ແຕ່ເປັນຄຳທັກທາຍບອກວ່າ ຜູ້ທີ່ເຈົ້າຊອກຫາກຳລັງເວົ້າກັບເຈົ້າຢູ່. ສ່ວນເຮົາຫລາຍຮູ້ຈັກພຣະອົງຜ່ານທາງຜູ້ປະກາດພຣະທັມແລະທາງອື່ນໆແລ້ວ ແຕ່ເຮົາບໍ່ຍັງຖວາຍກຽດແກ່ພຣະອົງເພາະກັບທີ່ພຣະອົງຊົງເປັນຢູ່.

ໃນຂະນະທີ່ມາຣີອາຄິດວ່າພຣະອົງເປັນຄົນເຝົ້າສວນນັ້ນນາງຖາມພຣະອົງວ່າ *"ນາຍເອີຍ, ຖ້າແມ່ນທ່ານໄດ້ເອົາສົບເພິ່ນໄປຂໍບອກຂ້ານ້ອຍວ່າທ່ານເອົາໄປວາງໄວ້ທີ່ໃດ ແລະຂ້ານ້ອຍຈະໄປຍົກເອົາເສັຽ"* (ຂໍ້ 15ຂ). ເປັນການສະແດງອອກເຖິງຄວາມຮັກດ້ວຍການອາສາສມັກໄປຍົກເອົາສົບດ້ວຍຕົວນາງເອງ. *"ພຣະເຢຊູຊົງກ່າວກັບນາງວ່າ ມາຣີອາເອີຍ"* ພຣະອົງໄດ້ຮ້ອງອອກຊື່ຂອງນາງດັ່ງນັ້ນນາງຈຶ່ງຫລຽວເບິ່ງພຣະອົງແລະໃນເວລານັ້ນນາງກໍເຫັນພຣະອົງຢ່າງຄັກຈຶ່ງຕອບວ່າ *"ພຣະອາຈານເອີຍ"* ເມື່ອພຣະເຢຊູເຫັນມາຣີອາກຳລັງຕັ້ງໃຈຟັງພຣະອົງຈຶ່ງກ່າວກັບນາງວ່າ *"ຢ່າໜ່ວງດຶງເຮົາ ເພາະເຮົາຍັງບໍ່ໄດ້ຂຶ້ນເມືອຫາພຣະບິດາຂອງເຮົາ ແລະພຣະບິດາຂອງພວກທ່ານ ຈະເມືອຫາພຣະເຈົ້າຂອງເຮົາແລະພຣະເຈົ້າຂອງທ່ານ"* (ຂໍ້ 17). ຫລັງຈາກການຟື້ນພຣະຊົນແລ້ວສະພາບຂອງພຣະເຢຊູມີການປ່ຽນແປງຈາກສະພາບເດີມ ຄືພຣະອົງຊະນະຄວາມຕາຍ ແລະບໍ່ຢູ່ໃນສະພາບມະນຸດທັມະດາອີກຕໍ່ໄປ ດັ່ງນັ້ນພຣະອົງຈຶ່ງບອກມາຣີອາວ່າ *"ຢ່າໜ່ວງດຶງເຮົາ"* ຄືແຕ່ກ່ອນ, ພຣະອົງຍັງບອກອີກວ່າພຣະອົງຈະຂຶ້ນໄປຫາພຣະບິດາໃນຮ່າງຂອງການຄືນມາຈາກຕາຍນີ້ ຍິ່ງໄປກວ່ານັ້ນພຣະເຢຊູຍັງກ່າວອີກວ່າ *"ພຣະບິດາຂອງພວກທ່ານ ຈະເມືອຫາພຣະເຈົ້າຂອງເຮົາ ແລະພຣະເຈົ້າຂອງທ່ານ"* ໝາຍຄວາມວ່າທຸກຄົນທີ່ເຊື່ອໃນພຣະອົງຈະເປັນຄືອ້າຍນ້ອງຂອງພຣະອົງແລະມີພຣະເຈົ້າອົງດຽວກັນ. ດ້ວຍເຫດນີ້ມາຣີອາຈຶ່ງໄປບອກຂ່າວນີ້ແກ່ພວກສາວົກວ່າ *"ຂ້ານ້ອຍໄດ້ເຫັນອົງພຣະຜູ້ເປັນເຈົ້າແລ້ວ ແລະໄດ້ບອກເຂົາວ່າພຣະອົງຊົງບອກຄຳເຫລົ່ານີ້ແກ່ຕົນ"* (ຂໍ້ 18).

<u>ຊົງປາກົດແກ່ສາວົກ</u> ( ຂ0:19-ຂ1 )

ໃນຄ່ຳຄືນຂອງວັນອາທິດຊຶ່ງເປັນວັນຕົ້ນສັປດາ ພວກສາວົກຂອງພຣະເຢຊູຢູ່ພ້ອມໜ້າກັນຊຸມນຸມກັນໃນຫ້ອງໂດຍອັດປະຕູຢ່າງຄັກແນ່ເພື່ອປ້ອງກັນບໍ່ໃຫ້ພວກຢິວທີ່ມີອຳນາດເຂົ້າໄປຫາເຣື່ອງພວກເຂົາ ແລະເຂົາກໍບໍ່ຄິດວ່າຈະມີໃຜມາອີກເພາະບັນດາສາວົກຢູ່ຄົບຖ້ວນກັນແລ້ວ. ໃນຖ້າມກາງການປຶກສາຫາລືກັນວ່າຈະເຮັດແນວໃດຕໍ່ໄປ ພຣະເຢຊູໄດ້ປາກົດຕົວຕໍ່ສາວົກແລ້ວກ່າວວ່າ *"ສັນຕິສຸກຈົ່ງມີແກ່ທ່ານທັງຫລາຍ"* (ຂໍ້ 19ຂ). ເຫດການທີ່ບໍ່ຄາດຝັນໄດ້ເກີດຂຶ້ນກະທັນຫັນເປັນ ຕົ້ນເຫດພວກສາວົກຕົກໃຈຢ່າງບອກບໍ່ຖືກ ແລະເຫດການນີ້ຊີ້ແຈງໃຫ້ເຮົາເຂົ້າໃຈວ່າບໍ່ມີປະຕູໃດໆສາມາດປິດບໍ່ໃຫ້ ພຣະເຢຊູເຂົ້າໄປໄດ້ຫາກພຣະອົງພໍພຣະທັຍ, ໃນເວລານີ້ສະພາບຂອງພຣະອົງປ່ຽນແປງຈາກມະນຸດທັມະດາແມ່ນຝາ ເຮືອນທີ່ແຂງແກ່ນພຣະອົງກໍເຂົ້າໄປໄດ້ໂດຍຝາເຮືອນນັ້ນບໍ່ໄດ້ເພພັງ ຫາກຈະເວົ້າພາສາເຮົາແລ້ວແມ່ນຫາຍຕົວເໝືອນເຮົາເຄີຍເຫັນໃນໜັງ. ພຣະອົງຊົງເປັນພຣະເຈົ້າເໜືອຄວາມຕາຍ ແລະຄວາມຕາຍນັ້ນຈະບໍ່ມີແກ່ພຣະອົງອີກຕໍ່ໄປ. ໃນຂະນະທີ່ປາກົດຕົວແກ່ພວກສາວົກພຣະອົງເລີ້ມດ້ວຍການປະໂລມໃຈພວກສາວົກ *ສັນຕິສຸກຈົ່ງມີແກ່ທ່ານທັງຫລາຍ.* ເພາະພວກເຂົາມີຄວາມທຸກໃຈໃນເຣື່ອງການຕາຍຂອງພຣະອົງ ແຕ່ພວກສາວົກຍັງຢ້ານແລະສົງສັຍວ່າແມ່ນພຣະເຢຊູແທ້ບໍ່ *"ພຣະອົງກໍສະແດງພຣະຫັດແລະຂ້າງ ຂອງພຣະອົງໃຫ້ເຂົາເບິ່ງ ແລະເມື່ອພວກສາວົກໄດ້ເຫັນພຣະຜູ້ເປັນເຈົ້າແລ້ວກໍເກີດມີຄວາມຊົມຊື່ນຍິນດີ"* (ຂໍ້ ຂ0).

ຫຼັງຈາກສາວົກທັງສິບເອັດຄົນໄດ້ສັມຜັສເບິ່ງອົ້ງມືແລະຂ້າງຂອງພຣະອົງຍັງມີຮອຍບາດແຜທີ່ພວກທະຫານຕອກຕະປູ ແລະຮອຍບາດແຜທີ່ຂ້າງທີ່ຖືກແທງທີ່ໄມ້ກາງແຂນແລ້ວພວກສາວົກຈຶ່ງແນ່ໃຈວ່າແມ່ນພຣະເຢຊູແທ້ໆ ຈຶ່ງມີຄວາມຊົມຊື່ນຍິນດີອັນໃຫຍ່ຫລວງ, ຫລັງຈາກນັ້ນພຣະເຢຊູຊົງກ່າວກັບສາວົກວ່າ *"ສັນຕິສຸກຈົ່ງມີຢູ່ກັບທ່ານທັງຫລາຍ ພຣະບິດາໄດ້ຊົງໃຊ້ເຮົາມາຢ່າງໃດ ຝ່າຍເຮົາກໍໃຊ້ທ່ານໄປຢ່າງນັ້ນ"* (ຂໍ້ ຂ1ຂ). ໃນຄຳເວົ້າຂອງພຣະເຢຊູຕອນນີ້ມີຄວາມສຳຄັນຢູ່ສອງປະການຄື 1. ອວຍພອນແກ່ຜູ້ທີ່ຮັບຮູ້ພຣະອົງ. *ສັນຕິສຸກຈົ່ງມີຢູ່ກັບທ່ານທັງຫລາຍ*

2. ພຣະອົງຊົງມອບງານສຳຄັນໃຫ້ສາວົກ *ພຣະບິດາໄດ້ຊົງໃຊ້ເຮົາມາຢ່າງໃດ ຝ່າຍເຮົາກໍໃຊ້ທ່ານໄປຢ່າງນັ້ນ.* ສ່ວນຂໍ້ 22-23 ແມ່ນພຣະອົງໂຜດປະທານອຳນາດແກ່ສາວົກຂອງພຣະອົງ.

<u>ຄຳຖາມ</u>

1. ນາງມາຣີອາພາພວກຜູ້ຍິງໄປຍັງອຸບໂມງຝັງສົບພຣະເຢຊູແຕ່ເຊົ້າມືດດ້ວຍຈຸດປະສົງອັນໃດ?

2. ພວກນາງໄດ້ພົບເຫັນຫຍັງເມື່ອໄປເຖິງອຸບໂມງ?

3. ເປັນຫຍັງພຣະເຢຊູຈຶ່ງຖາມນາງວ່າ *"ເຈົ້າຮ້ອງໄຫ້ເຮັດຫຍັງ ເຈົ້າຊອກຫາຜູ້ໃດ?"*

4. ນາງມາຣີອາຄິດໃນໃຈວ່າ ພຣະເຢຊູເປັນໃຜ? ທ່ານເດຄິດວ່າພຣະເຢຊູແມ່ນໃຜໃນເວລານີ້?

5. ຫາກທ່ານຕອບວ່າພຣະເຢຊູເປັນພຣະເຈົ້າ ທ່ານຈະຕອບສນອງຄວາມຄິດຂອງທ່ານຢ່າງໃດ?

6. ພວກສາວົກປະຊຸມກັນເຣື່ອງອັນໃດຢູ່ໃນຫ້ອງ?

7. ພຣະເຢຊູຊົງປາກົດຕົວຢ່າງໃດ?

8. ເປັນຫຍັງພວກສາວົກຈຶ່ງສົງສັຍໃນການປາກົດຂອງພຣະອົງ? ທ່ານເດສົງສັຍພຣະອົງແນວໃດ?

9. ຫລັງຈາກເຂົາສັນນະສູດວ່າແມ່ນພຣະເຢຊູແລ້ວພຣະອົງກ່າວວ່າ *"ພຣະບິດາໄດ້ຊົງໃຊ້ເຮົາມາຢ່າງໃດ ຝ່າຍເຮົາກໍໃຊ້ທ່ານໄປຢ່າງນັ້ນ"* ທ່ານເຂົ້າໃຈຢ່າງໃດ? ພຣະເຢຊູສັ່ງໃຫ້ທ່ານໄປທາງໃດ?

*ດຣ. ທຸມພັນ ວົງສຸຣິດທ໌*

# <u>ບົດຮຽນທີ 13</u>
# <u>ຊົງເປັນຜູ້ເລືອກ</u>

---

<u>**ຂໍ້ພຣະຄັມພີສຳລັບບົດຮຽນນີ້:**</u> ໂຢຮັນ 21:15-23
<u>**ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:**</u> ໂຢຮັນ 21
<u>**ຈຸດສຳຄັນຂອງບົດຮຽນນີ້:**</u> ເຮົາມີໜ້າທີ່ຮັບຜິດຊອບຮັບໃຊ້ພຣະເຢຊູຄຽງບ່າຄຽງໄລ່ກັນ.
<u>**ຄຳຖາມເພື່ອການສຳຣວດ:**</u> ເປັນຫຍັງຄົນເຮົາຈຶ່ງມັກປຽບທຽບຕົນໃສ່ຜູ້ອື່ນ ແທນທີ່ຈະມີຊີວິດຕົນເອງ?
<u>**ຈຸດປະສົງຂອງບົດຮຽນນີ້:**</u> ເພື່ອຊັກຊວນໃຫ້ພວກຕັ້ງໃຈຮັບໃຊ້ຮ່ວມກັນແທນທີ່ຈະປຽບກັບຜູ້ອື່ນ.

<u>**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**</u>

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.
- ປະກາດແກ່ທຸຄົນໂດຍບໍ່ເລືອກໜ້າ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## <u>ບົດນຳ</u>

ສາວົກຂອງພຣະເຢຊູພາກັນກັບໄປຫາປາໃນເວລາກາງຄືນເພື່ອລ້ຽງປາກລ້ຽງທ້ອງຂອງພວກເຂົາເຈົ້າ ແຕ່ປາກໍດວ່າຄືນນັ້ນທັງຄືນບໍ່ໄດ້ປາແມ່ນແຕ່ໂຕດຽວ, ຕາມປົກກະຕິແລ້ວເວລາຄ່ຳເປັນເວລາທີ່ຫາປາໄດ້ດີກວ່າກາງເວັນໃນຂົງເຂດນັ້ນ. ພໍໃກ້ຈະຮຸ່ງເຊົ້າຂອງວັນໃໝ່ພຣະເຢຊູໄດ້ປາກົດແກ່ພວກສາວົກ ແຕ່ພວກສາວົກເບິ່ງບໍ່ເຫັນພຣະເຢຊູຢ່າງຄັກແນ່ອາດຈະເປັນເພາະຍັງມືດຢູ່ ຫລືອາດຈະຢູ່ໄກໄປແດ່. ພຣະເຢຊູໄດ້ບອກພວກສາວົກຢ່ອນມອງລົງນ້ຳອີກແລ້ວກໍໄດ້ປາຢ່າງຫລວງຫລາຍທັງນີ້ກໍຍ້ອນວ່າເຂົາເຊື່ອຟັງພຣະເຢຊູ.

<u>ມອບພຣະຣາຊກິດ</u> (21: 15-19 )

ເມື່ອສາວົກພາກັນມາຮອດຝັ່ງແລ້ວກໍຮ່ວມປັ້ນເຂົ້າເຊົ້າທີ່ຈັດຕຽມໂດຍພຣະເຢຊູ (ຂໍ້ 9), ຫລັງຈາກປັ້ນເຂົ້າເຊົ້າແລ້ວພຣະຊູໄດ້ໂອ້ລົມກັບເປໂຕເພື່ອສ້າງສຳພັນທີ່ຖືກມ້າງລົງໃນຂະນະທີ່ເປໂຕປະຕິເສດພຣະອົງ. ສາມວັນທີ່ຜ່ານມາໃນ (18:15-27). ພຣະເຢຊູຊົງກ່າວວ່າ *"ຊີໂມນລູກໂຢຮັນເອີຍ, ເຈົ້າຮັກເຮົາຫລາຍກວ່ານີ້ຫລື"* (ຂໍ້ 15). ໃນເວລານັ້ນເປັນເວລາທີ່ເປໂຕຫາປາໄດ້ຫລາຍໂດຍສເພາະຢ່າງຍິ່ງຢູ່ໃນເຮືອມີປາເຖິງ 153ໂຕ (ຂໍ້ 11). ຄຳວ່າຮັກຫລາຍກວ່ານີ້ຫລື? ພຣະເຢຊູອາດຈະຊີ້ໃສ່ປາໃນເຮືອ, ຫລືອາດຈະຊີ້ໃສ່ອາຊີບຫາປາແລ້ວຖາມວ່າ *ເຈົ້າຮັກເຮົາຫລາຍກວ່ານີ້ຫລື?* ຄຳຖາມຕອນນີ້ນັກສາສນາສາດໃຫ້ຄຳເຫັນວ່າເປັນຄວາມຮັກ <u>ອາກາເປ</u> ໃນພາສາກຣີກທີ່ມີຄວາມໝາຍວ່າ ເປັນຄວາມຮັກຍິ່ງໃຫຍ່ໃນຣະຫວ່າງມະນຸດກັບພຣະເຈົ້າ ແຕ່ເປໂຕບໍ່ເຂົ້າໃຈຄວາມໝາຍຢ່າງຄັກແນ່ເພິ່ນຈຶ່ງຕອບພຣະເຢຊູວ່າ *"ໂດຍ ພຣະອົງເຈົ້າເອີຍ, ພຣະອົງຊົງຊາບວ່າຂ້ານ້ອຍຮັກແພງພຣະອົງ"* ເປໂຕໃຊ້ຄຳວ່າ <u>ຮັກແພງ</u> ນັກສາສນາ

ສາດໃຫ້ຄຳ ເຫັນວ່າ ເປໂຕໃຊ້ຄຳວ່າ <u>ຟີໂລ</u> ໃນພາສາກຣີກທີ່ມີຄວາມໝາຍວ່າ ຮັກແພງແບບໝູ່ເພື່ອນ, ແບບອ້າຍນ້ອງຄອບຄົວ ດຽວກັນຊຶ່ງເປັນຄວາມຮັກທີ່ຕ່ຳກວ່າ <u>ອາກາເປ</u>, ເມື່ອເປໂຕຕອບພຣະເຢຊູວ່າ ຮັກແພງພຣະອົງແລ້ວພຣະອົງສັ່ງເປໂຕ ວ່າ *"ຈົ່ງລ້ຽງແກະໝູ່ມຂອງເຮົາເນີ"* (ຂໍ້ 15ຄ). ຄຳວ່າແກະທີ່ພຣະເຢຊູກ່າວບໍ່ແມ່ນແກະໃນທົ່ງນາ ແຕ່ແມ່ນຄົນໃນໂບດ ຫລື ຄົນທີ່ເຊື່ອໃນພຣະເຢຊູຄຣິດ, ເຫດຜົນທີ່ພຣະອົງຊົງປຽບຄຣິສຕຽນວ່າເປັນແກະກໍເພາະວ່າໃນເວລານັ້ນອາຊີບຂອງຄົນທັມດາສາມັນນິຍົມກັນລ້ຽງແກະເປັນອາຊີບ, ຜູ້ລຽງແກະໄດ້ໃຊ້ເວລາເປັນສ່ວນໃຫຍ່ນຳຝູງແກະລ້ຽງດູໃຫ້ອີ່ມທັງປົກປ້ອງບໍ່ໃຫ້ຕົກເຮັ່ຽເສັຽຫາຍ ຕລອດເຖິງຮັກສາຄວາມປອດພັຍບໍ່ໃຫ້ສັດຮ້າຍມາເຮັດອັນຕະລາຍອີກ. ສ່ວນແກະ ເອງກໍເປັນສັດທີ່ລ້ຽງງ່າຍ ເປັນສັດທີ່ຟັງຄວາມຜູ້ລ້ຽງ, ແກະມັກຢູ່ນຳກັນເປັນຝູງເປັນໝູ່ ບໍ່ເຮັດອັນຕະລາຍສັດອື່ນໃດ ພ້ອມທັງບໍ່ເຮັດອັນຕະລາຍແກ່ແກະໂຕອື່ນອີກ. ພຣະເຢຊູຊົງບອກເປໂຕວ່າ *ຈົ່ງລ້ຽງແກະໝູ່ມຂອງເຮົາເນີ* ແປວ່າ ພຣະເຢຊູ ມອບໝາຍວຽກງານ ໃຫ້ເປໂຕເປັນຜູ້ລ້ຽງດູຈິດວິນຍານພວກສາວົກແລະຄຣິສຕຽນອື່ນໆອີກ.

*"ພຣະເຢຊູຊົງກ່າວກັບເປໂຕເປັນເທື່ອທີສອງວ່າ ຊີໂມນລູກໂຢຮັນເອີຍ, ເຈົ້າຮັກເຮົາຫລື ເປໂຕທູນວ່າໂດຍພຣະອົງເຈົ້າເອີຍ, ພຣະອົງຊົງຊາບວ່າຂ້ານ້ອຍຮັກແພງພຣະອົງ"* (ຂໍ້ 16).ພຣະເຢຊູຖາມເປໂຕ ເປັນຄຳຖາມໃນຮູບແບບ <u>ອາກາເປ</u> ເໝືອນຄຳຖາມຄັ້ງແລ້ວ ແຕ່ເປໂຕຍັງຕອບ ວ່າຮັກພຣະອົງໃນຄຳຕອບ <u>ຟີໂລ</u> ຄືຄຳຕອບຄັ້ງແຮກ. ຄວາມຈິງແລ້ວພຣະເຢຊູຢາກໄດ້ຍິນເປໂຕຕອບພຣະອົງວ່າ ໂດຍຂ້ານ້ອຍ <u>ອາກາເປ</u>ພຣະອົງ ແຕ່ເປໂຕກັບຕອບວ່າ <u>ຟີໂລ</u> ພຣະອົງໆຊົງບອກເປໂຕວ່າ *"ຈົ່ງຮັກສາແກະຂອງເຮົາເນີ"* (ຂໍ້ 16ຂ).

ເມື່ອເປໂຕຕອບພຣະອົງສອງຄັ້ງໂດຍໃຊ້ຄຳວ່າ ຟີໂລ, ຈຶ່ງຊົງຖາມເປໂຕເປັນເທື່ອທີສາມໃນຮູບແບບວ່າ ເຈົ້າ <u>ຟີໂລ</u> ເຮົາຫລື. *"ພຣະອົງຊົງກ່າວກັບເປໂຕເທື່ອທີສາມວ່າ ຊີໂມນລູກໂຢຮັນເອີຍ, ເຈົ້າຮັກແພງເຮົາຫລື"* (ຂໍ້ 17ກ) ເປໂຕກໍເກີດມີຄວາມທຸກໃຈວ່າເປັນຫຍັງພຣະອົງຈຶ່ງຖາມຫລາຍເທື່ອແທ້ ເພາະວ່າເປໂຕບໍ່ເຂົ້າໃຈເຖິງຈິດໃຈສ່ວນເລິກຂອງພຣະເຢຊູ, ດັ່ງນັ້ນເປໂຕຈຶ່ງຕອບພຣະເຢຊູວ່າ *"ພຣະອົງເຈົ້າເອີຍ, ພຣະອົງຊົງຊາບທຸກສິ່ງພຣະອົງຊົງຊາບວ່າຂ້ານ້ອຍຮັກແພງພຣະອົງ"* (ຂໍ້ 17ຂ). ສັງເກດວ່າຄັ້ງນີ້ເປໂຕຕອບພຣະເຢຊູດ້ວຍຄວາມໝັກໃຈໃນຄັ້ງນີ້, ເຖິງປານນັ້ນພຣະເຢຊູຍັງມອບງານສຳຄັນໃຫ້ກັບເປໂຕເໝືອນສອງຄັ້ງທີ່ຜ່ານມາໂດຍກ່າວວ່າ *"ຈົ່ງລ້ຽງແກະຂອງເຮົາເນີ"* (ຂໍ້ 17ຄ).

ເປໂຕໄດ້ປະຕິເສດພຣະເຢຊູເຖິງສາມເທື່ອໃນໂຢຮັນ 18, ເວລານີ້ພຣະເຢຊູຖາມເປໂຕສາມເທື່ອເພື່ອເປັນການເຕືອນສະຕິບໍ່ໃຫ້ເປໂຕປະຕິເສດພຣະອົງເໝືອນຄັ້ງກ່ອນ, ຂໍ້ 18-19 ພຣະເຢຊູທຳນວາຍເຖິງຄວາມທຸກທໍຣະມານຂອງເປໂຕທີ່ຈະໄດ້ຮັບໃນຂະນະທີ່ເປໂຕຮັບໃຊ້ພຣະເຢຊູ, ຊຶ່ງມີຄວາມໝາຍວ່າການຮັບໃຊ້ແລະການຕິດຕາມພຣະເຢຊູຈະພົບກັບຄວາມຫຍຸ້ງຍາກ ລຳບາກຊົ່ວຂະນະນຶ່ງ. ດັ່ງນັ້ນໃຜຜູ້ໃດທີ່ຍອມພົບຄວາມທຸກຍາກລຳບາກເພື່ອເຫັນແກ່ພຣະຄຸນຂອງພຣະອົງ, ພຣະອົງ ກໍຈະຮ້ອງໃຫ້ຕິດຕາມພຣະອົງຄືກັນກັບຮ້ອງເປໂຕວ່າ *"ເຈົ້າຈົ່ງຕາມເຮົາມາ"* (ຂໍ້ 19ຂ).

<u>**ຊົງໃຊ້ຕາມນ້ຳພຣະທັຍ**</u> (21:20-23)

ເມື່ອເປໂຕໄດ້ຮັບໜ້າທີ່ມອບໝາຍແລ້ວ *"ເປໂຕກໍຫລຽວຫລັງເຫັນສາວົກທີ່ພຣະເຢຊູຊົງຮັກກຳລັງຕາມມາ ຄືຜູ້ທີ່ເນີ້ງກາຍລົງອີງພຣະຊວງຂອງພຣະອົງເມື່ອຮັບປະທານອາຫານແລງນັ້ນແລະທູນຖາມວ່າ ນາຍເຈົ້າເອີຍ, ຜູ້ທີ່ຈະມອບທ່ານໄວ້ຄືຜູ້ໃດ"* (ຂໍ້ 20). ເປໂຕເຫັນສາວົກຜູ້ນຶ່ງທີ່ພຣະຄັມພີບໍ່ໄດ້ອອກຊື່ ແຕ່ພວກສາສນາສັນນິຖານວ່າແມ່ນໂຢຮັນ, ຜູ້ທີ່ເນີ້ງກາຍລົງທີ່ເອິກພຣະເຢຊູເພື່ອສະແດງຄວາມຮັກແພງໃນຂະນະທີ່ພຣະເຢຊູທຳນວາຍວ່າຄົນນຶ່ງໃນພວກສາວົກຈະທໍຣະຍົດຕໍ່ພຣະອົງ (ໂຢຮັນ 13:21-21). ເມື່ອເປໂຕເຫັນສາວົກຜູ້ນັ້ນເພິ່ນຈຶ່ງຖາມພຣະເຢຊູວ່າ *"ພຣະອົງເຈົ້າເອີຍ, ຜູ້ນີ້ເດ, ຈະເປັນຢ່າງໃດ"* (ຂໍ້ 21ຂ). ເປໂຕຖາມເຊັ່ນນີ້ກໍເພາະວ່າພຣະເຢຊູໄດ້ທຳນວາຍຄວາມທຸກຍາກລຳບາກຂອງເປໂຕໃນຂໍ້ 18-19 ມາແລ້ວ ດັ່ງນັ້ນເປໂຕຈຶ່ງຢາກຮູ້ວ່າສາວົກຜູ້ທີ່ເນີ້ງລົງນັ້ນອະນາຄົດຈະເປັນແນວໃດ? ຊຶ່ງເປັນການບໍ່ສົມຄວນທີ່ຜູ້ຮັບໃຊ້ພຣະເຈົ້າຈະປຽບຕົນເອງໃສ່ກັບຜູ້ອື່ນ ດ້ວຍວ່າພຣະເຈົ້າບໍ່ຕ້ອງການໃຫ້ໃຜຜູ້ນຶ່ງປຽບທຽບ

ໃສ່ອີກຜູ້ນຶ່ງ, ດ້ວຍເຫດນີ້ພຣະເຢຊູຈຶ່ງຕອບເປໂຕວ່າ *ຖ້າເຮົາມີໃຈຢາກໃຫ້ຜູ້ນີ້ຢືນຢູ່ຈົນເຖິງເຮົາມານັ້ນຈະເປັນທຸຣະອັນໃດກັບເຈົ້າພໍ* "(ຂໍ້ 22ກ). ໝາຍຄວາມວ່າພຣະເຢຊູມີແຜນການຈະໃຫ້ຊີວິດຜູ້ໃດເປັນແນວໃດກໍສຸດແລ້ວແຕ່ພຣະອົງ ບໍ່ແມ່ນໜ້າທີ່ຂອງທ່ານຈະໄປຮູ້ເຫັນຫລືປຽບຕົນເອງໃສ່ກັບຜູ້ອື່ນ, "*ສ່ວນເຈົ້າຈົ່ງຕາມເຮົາມາ*" (ຂໍ້ 22ຂ). ມີຄວາມໝາຍວ່າພຣະອົງມີພຣະປະສົງນຳແຕ່ລະຄົນບໍ່ຄືກັນ, ແຕ່ລະຄົນມີໜ້າທີ່ຕິດຕາມພຣະເຢຊູຕາມການຂອງໃຜລາວ, ຄຳສັ່ງໄດ້ບອກແຈ້ງແລ້ວວ່າ "*ສ່ວນເຈົ້າຈົ່ງຕາມເຮົາມາ*"

ດ້ວຍຄຳເວົ້າຂອງພຣະເຢຊູທີ່ກ່າວວ່າ "*ຖ້າເຮົາມີໃຈຢາກໃຫ້ຜູ້ນີ້ຢືນຢູ່ຈົນເຖິງເຮົາມານັ້ນ*" ຈຶ່ງຊ່າລືກັນໄປທຸກບ່ອນດ້ວຍວ່າບໍ່ເຂົ້າໃຈຄວາມໝາຍອັນແທ້ຈິງກ່ຽວກັບເລື່ອງນີ້. "*ເຫດສັນນັ້ນຄຳທີ່ວ່າສາວົກຜູ້ນັ້ນຈະບໍ່ຕາຍ ຈຶ່ງຊ່າລືໄປຖ້າມກາງຂອງພວກພີ່ນ້ອງ ແຕ່ພຣະເຢຊູບໍ່ໄດ້ກ່າວວ່າສາວົກຜູ້ນັ້ນຈະບໍ່ຕາຍ ແຕ່ຊົງກ່າວວ່າ ຖ້າເຮົາມີໃຈຢາກໃຫ້ຜູ້ນີ້ຢືນຢູ່ຈົນຮອດເຮົາມານັ້ນຈະເປັນທຸຣະອັນໃດກັບເຈົ້າພໍ*" (ຂໍ້ 23). ແປວ່າຊົງໃຊ້ແຕ່ລະຄົນຕາມນ້ຳພຣະທັຍພຣະອົງ.

## <u>ເລືອກໃຊ້ໃຫ້ບັນທຶກ</u> ( 21:24-25 )

ໂຢຮັນໄດ້ລົງທ້າຍການບັນທຶກຂອງເພິ່ນໂດຍບອກວ່າເພິ່ນເປັນຜູ້ທີ່ຮັກພຣະເຢຊູ ແລະເປັນຜູ້ທີ່ພຣະເຢຊູຊົງຮັກດ້ວຍ, ໂຢຮັນຄ້ຳປະກັນວ່າທຸກສິ່ງທີ່ສຳຄັນທີ່ເພິ່ນບັນທຶກນັ້ນລ້ວນແລ້ວແຕ່ເປັນຄວາມຈິງຕາມທີ່ໂຢຮັນໄດ້ເຫັນ ແລະໄດ້ຍິນ, ໂຢຮັນຍັງບອກອີກວ່າ "*ຖ້າຈະຂຽນໄວ້ຕາມລຳດັບທຸກປະການ ຂ້າພະເຈົ້າຄາດວ່າໝົດທັງໂລກກໍບໍ່ມີບ່ອນພໍໄວ້ພັງສືທີ່ຈະຂຽນນັ້ນ*" (ຂໍ້ 25). ໝາຍຄວາມວ່າເພິ່ນໄດ້ບັນທຶກແຕ່ພາກສ່ວນສຳຄັນເທົ່ານັ້ນ ມີສາສນາຈານບາງຄົນຄິດວ່າພວກເຖົ້າແກ່ໃນຄຣິສຕະຈັກເມືອງເອເຟໂຊເປັນຜູ້ໃຫ້ຂໍ້ມູນກັບໂຢຮັນເພີ້ມອີກ.

<u>ຄຳຖາມ:</u>

1. ພຣະເຈົ້າຊົງໃຊ້ໂຢຮັນແນວນັ້ນ, ພຣະເຈົ້າຊົງໃຊ້ທ່ານຢ່າງໃດ?

2. ທ່ານໄດ້ເຮັດສິ່ງທີ່ພຣະອົງຊົງໃຊ້ທ່ານຢ່າງຄັກແນ່ບໍ່?

3. ເປັນຫຍັງພຣະອົງບໍ່ຕ້ອງການໃຫ້ເປໂຕປຽບທຽບກັບຜູ້ອື່ນ?

4. ບົດຮຽນນີ້ສອນທ່ານແນວໃດແດ່?

*ດຣ. ທຸນພັນ ວົງສຸຣິດທ໌*

# ບົດຮຽນຄຣິສມັສ
## ຫລັງຈາກປະສູດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມັດທາຍ 2:1-12
**ຂໍ້ພຣະຄັມພີທັງໝົດສຳລັບບົດຮຽນນີ້:** ມັດທາຍ 1:18--2:23
**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອໃຫ້ທຸກຄົນຮູ້ຈັກການເກີດຂອງພຣະກຸມມານ
**ຄຳຖາມເພື່ອການສຳຣອດ:** ຫລັງຈາກຄຣິສມັສແລ້ວເປັນແນວໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອບອກເຣື່ອງການເກີດຂອງພຣະເຢຊູໃຫ້ຜູ້ອື່ນຟັງ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.
- ປະກາດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ເຫັນທຸກຄົນເປັນສີພຣະທັດຂອງອົງພຣະຜູ້ເປັນເຈົ້າ.

**ບົດນຳ**

ຄຣິສມັສເປັນຣະດູການທີ່ທຸກທີ່ນທຸກແຫ່ງຕົບແຕ່ງດ້ວຍເຄື່ອງປະດັບປະດາດ້ວຍຄວາມຊົມຊື່ນຍິນດີ, ເປັນເທສການທີ່ຄົນທັງໂລກມີຄວາມມ່ວນຊື່ນເບີກບານ ດ້ວຍວ່າເປັນວັນແຫ່ງພຣະຜູ້ໄຖ່ໄດ້ລົງມາເກີດໃນໂລກເພື່ອໂຜດມະນຸດທັງຫລາຍໃຫ້ພົ້ນຈາກ ຄວາມຜິດບາບ, ເປັນວັນແຫ່ງສັນຕິສຸກທີ່ມະນຸສທີ່ບໍ່ເຄີຍມີມາກ່ອນ.

<u>ພາກຕາເວັນອອກ</u> ( 2:1-2 )

ການຈົດສຳມະໂນຄົວຄັ້ງທຳອິດເປັນການລົງທະບຽນດ້ວຍຄວາມຍາກລຳບາກຫຼາຍທຸກໆຄົນຈະຕ້ອງໄປຈົດທະບຽນພົລເຮືອນທີ່ບ້ານເກີດເມືອງນອນຂອງໃຜລາວ ຕາມຄຳສັ່ງຂອງຄະນະປົກຄອງບ້ານເມືອງຊຶ່ງເປັນຄຳສັ່ງເດັດຂາດໂດຍບໍ່ຍົກເວັ້ນຜູ້ໃດ. ຝ່າຍໂຢເຊບຜູ້ເປັນຄູ່ໝັ້ນຂອງນາງມາຣີອາກໍພາກັນເດີນທາງຈາກບ້ານໃໝ່ຂອງເຂົາເຈົ້າທີ່ບ້ານນາຊາເຣັດ, ແຂວງຄາລີເລໄປຍັງເມືອງເບັດເລເຮັມ, ແຂວງຢູດາຍ ໃນຣະຍະທາງປະມານ 40 ໄມຖ້າມກາງຄວາມໜາວເຢັນ, ຈຸດປະສົງໃນການລົງທະບຽນນີ້ແມ່ນເພື່ອເກັບພາສີສົ່ງເສີມຣັຖບານໂຣມໃນການປົກຄອງປະເທດຊາດຢືວທົ່ວປະເທດ.ເມື່ອທັງສອງເດີນທາງໄປເຖິງແລ້ວກໍຊອກຫາທີ່ພັກເຊົາບໍ່ມີ ເພາະຄົນທັງຫລາຍກໍພາກັນມາຈົດທະບຽນສຳມະໂນຄົວ ຢ່າງຫລວງຫລາຍຈົນໂຮງແຮມໃດໆກໍບໍ່ຫວ່າງ, ໃນເວລານັ້ນມາຣີອາພວມຈະປະສູດບຸດນ້ອຍເຢຊູຈຶ່ງໄປຂໍອາສັຍຄອກສັດເປັນບ່ອນປະສູດບຸດເອົາຜ້າອ້ອມພັນໄວ້ແລະວາງໄວ້ໃນຮາງຫຍ້າ (ລູກາ 2:7)

*"ເມື່ອພຣະເຢຊູຊົງປະສູດຢູ່ທີ່ບ້ານເບັດເລເຮັມແຂວງຢູດາຍໃນສມັຍຂອງກະສັດເຮໂຣດ ເບິ່ງແມ, ມີພວກໂຫຣາຈານຈາກທິດຕາເວັນອອກມາຍັງກຸງເຢຣູຊາເລັມ "* (ຂໍ້ 1). ເຮົາບໍ່ຮູ້ຫຍັງຫລາຍກ່ຽວກັບພວກໂຫຣາຈານດ້ວຍວ່າພຣະຄັມພີບໍ່ໄດ້ກ່າວມາກ່ອນແລະບໍ່ກ່າວຕໍ່ໄປອີກ. "Magi" ພາສາກຣີກແປວ່າ Wise man ຊຶ່ງພາສາລາວເຮົາແປວ່າໂຫຣາຈານ, ພວກໂຫຣາຈານນີ້ມີຄວາມຈິງຈັງກັບຄວາມຝັນ, ເຣື່ອງໂຫຣາສາດ (ຄວາມຮູ້ເຣື່ອງດາວຕ່າງໆ). ຄຳວ່າ Magician ແມ່ນອອກມາຈາກຄຳວ່າ Magi ດ້ວຍເຫດນີ້ມັດທາຍຈຶ່ງໃຫ້ສາຍານາມພວກນີ້ວ່າໂຫຣາຈານ ແປວ່າກຸ່ມຄົນມີຄວາມຮູ້ວິທະຍາສາດເຣື່ອງດວງດາວ, ແລະໃນສມັຍນັ້ນນັກວິທະຍາສາດເຣື່ອງດາວນີ້ບໍ່ມີຫລາຍ, ພວກໂຫຣາຈານນີ້ໄດ້ພາກັນເດີນທາງຈາກພາກຕາເວັນອອກໂດຍຕິດຕາມດາວທີ່ພວກເຂົາເຈົ້າໄດ້ຮຽນຮູ້ມາຈົນເຖິງບ່ອນພຣະເຢຊູເກີດ. ເມືອຕາມດາວມາເຖິງແລ້ວກໍຖາມວ່າ *"ກຸມມານທີ່ເກີດມາເປັນກະສັດຂອງຊາວຢິວນັ້ນຢູ່ທີ່ໃດ ເພາະເຮົາໄດ້ເຫັນດາວຂອງທ່ານປາກົດຂຶ້ນ ເຮົາມາເພື່ອຈະຂາບໄຫວ້ທ່ານ "* (ຂໍ້ 2). ຂໍ້ສັງເກດຄຳເວົ້າພວກໂຫຣາຈານທີ່ເວົ້າວ່າ *"ເຮົາໄດ້ເຫັນ ດາວຂອງທ່ານປາກົດຂຶ້ນ "* ອາຈມີຄວາມໝາຍວ່າດາວດວງນີ້ເປັນດາວປະຈຳຕົວຂອງພຣະກຸມມານ ແລະ ອາຈບໍ່ເຄີຍປາກົດມາກ່ອນ ພ້ອມກັນນັ້ນຍັງບົ່ງບອກອີກວ່າພວກໂຫຣາຈານເຫລົ່ານີ້ຮູ້ເຣື່ອງດາວເປັນຢ່າງດີ.

<u>**ກະສັດເຮໂຣດປອງຮ້າຍ**</u> ( 2:3-8 )

*"ຄັນກະສັດເຮໂຣດໄດ້ຍິນດັ່ງນີ້ແລ້ວກໍຫວຸ້ນວາຍພຣະທັຍ(ຫວຸ້ນວາຍໃຈ) ທັງໄທກຸງເຢຣູຊາເລັມກໍພ້ອມກັນຫວຸ້ນວາຍດ້ວຍ "* (ຂໍ້ 3). ບໍ່ແປກປະຫລາດທີ່ກະສັດເຮໂຣດຫວຸ້ນວາຍເພາະວ່າເພິ່ນເອງເປັນກະສັດຂອງຊາວຢິວໃນເວລາທີ່ພຣະເຢຊູຊົງປະສູດ ເມື່ອໄດ້ຍິນຄຳເວົ້າຂອງໂຫຣາຈານທີ່ເວົ້າວ່າ *"ກຸມມານທີ່ເກີດມາເປັນກະສັດຂອງຊາວຢິວ "* ກໍເຂົ້າໃຈວ່າເພິ່ນເອງຈະເສັຽຕຳແໜ່ງກະສັດ. ພວກໂຫຣາຈານເຫລົ່ານັ້ນບໍ່ມີເຈຕະນາຈະໃຫ້ກະສັດເຮໂຣດຫວຸ້ນວາຍໃຈແຕ່ເຈຕະນາໃຫ້ຄົນຢິວທັງຊາດພ້ອມດ້ວຍກະສັດມີຄວາມຊົມຊື່ນຍິນດີທີ່ພຣະຜູ້ໂຜດໃຫ້ພົ້ນລົງມາເກີດ. *"ເມື່ອນັ້ນເຮໂຣດຈຶ່ງສັ່ງປະຊຸມບັນດາຜູ້ໃຫຍ່ແລະພວກປະໂລຫິດໃນພຣະຣາຊວັງ. "ເມື່ອກະສັດຮັບສັ່ງໃຫ້ປະຊຸມບັນດາປະໂລຫິດຕົນໃຫຍ່ກັບພວກນັກທັມຂອງປະຊາຊົນ ແລ້ວພຣະອົງຈຶ່ງຖາມເຂົາວ່າຜູ້ເປັນພຣະຄຣິດນັ້ນຈະບັງເກີດຢູ່ທີ່ໃດ "* (ຂໍ້ 4). ການປະຊຸມຄັ້ງນີ້ແມ່ນຄັ້ງສຳຄັນທີ່ສຸດສຳລັບເຮໂຣດ ເພິ່ນເປັນເຖິງກະສັດຍັງບໍ່ຮູ້ເຣື່ອງນີ້ ດ້ວຍເຫດນີ້ເພິ່ນເອີ້ນພວກນັກທັມທີ່ຮຽນຮູ້ເຣື່ອງທີ່ຈະເກີດຂຶ້ນມາເຂົ້າພົບພຣະອົງ ດ້ວຍເຫດນີ້ເພິ່ນຈຶ່ງຖາມເຖິງບ່ອນພຣະເຢຊູຊົງປະສູດຫລັງຈາກຮູ້ແລ້ວກໍຈະໃຊ້ທະຫານໄປທຳລາຍພຣະອົງເສັຽ, ນີ້ຄືແຜນການປອງຮ້າຍຂອງເຮໂຣດ.

ພວກໂຫຣາຈານໄດ້ຮຽນຮູ້ເຣື່ອງນີ້ພຣະທັມມີກາວ່າ *"ເບັດເລເຮັມ ເອຟຣາທາເອີຍ ເຈົ້າເປັນບ້ານເມືອງນ້ອຍເມືອງນຶ່ງໃນເຂດ ຢູດາ ແຕ່ວ່າເຮົາຈະ ແຕ່ງຕັ້ງໃຫ້ມີຜູ້ນຶ່ງມາປົກຄອງພວກອິສຣາເອນ ໝໍ່ເຊື້ອສາຍຂອງເພິ່ນຈະມາຈາກສມັຍເດີມ "* (ມີກາ 5:2), ຈຶ່ງທູນຕອບເຮໂຣດວ່າ *"ໃນບ້ານເບດເລເຮັມ ແຂວງຢູດາຍ ເພາະຜູ້ປະກາດພຣະທັມໄດ້ຂຽນໄວ້ດັ່ງນີ້ວ່າບ້ານເບດເລເຮັມໃນແຜ່ນດິນຢູດາຍເອີຽເຈົ້າກໍບໍ່ແມ່ນຜູ້ເລັກນ້ອຍທີ່ສຸດໃນຖ້າມກາງພວກເຈົ້ານາຍຂອງຢູດາຍເພາະ ວ່າເຈົ້ານາຍຜູ້ນຶ່ງຈະອອກມາຈາກເຈົ້າຜູ້ຊຶ່ງຈະປົກຄອງອິສຣາເອັນໄພ່ພົນຂອງເຮົາ "* (ຂໍ້ 5-6). ພວກໂຫຣາຈານ ໄດ້ບອກຕາມຄວາມຈິງທຸກປະການຕໍ່ເຮໂຣດ ດັ່ງນັ້ນເພິ່ນຈຶ່ງເອີ້ນພວກໂຫຣາຈານເຂົ້າມາໃກ້ເພື່ອຈະເວົ້າກັບໂຫຣາຈານເປັນການລັບ *"ແລ້ວເຮໂຣດໄດ້ຊົງເອີ້ນພວກໂຫຣາຈານເຂົ້າມາເປັນການລັ ບ ຊົງຖາມເຂົາໄດ້ຄວາມຖ້ວນຖີ່ເຖິງເວລາດາວປາກົດຂຶ້ນ ແລ້ວກະສັດໄດ້ສັ່ງໃຫ້ພວກໂຫຣາຈານໄປຍັງບ້ານເບັດເລເຮັມສັ່ງວ່າຈົ່ງໄປຄົ້ນຫາກຸມມານນັ້ນດ້ວຍຄັກແນ່ ເມື່ອພົບແລ້ວຈົ່ງກັບມາບອກເຮົາເພື່ອເຮົາຈະໄດ້ໄປຂາບໄຫວ້ທ່ານເໝືອນກັນ "* (ຂໍ້ 7-8). ຫລັງຈາກເຮໂຣດສືບໄດ້ເຣື່ອງຢ່າງຄັກແນ່ແລ້ວເພິ່ນກໍວາງເລ້ກົນໃຫ້ໂຫຣາຈານໄປຄົ້ນຫາພຣະກຸມມານ ເມື່ອພົບເຫັນແລ້ວໃຫ້ກັບມາບອກເຮໂຣດເພື່ອເພິ່ນຈະໄດ້ສົ່ງທະຫານໄປປະຫານກຸມມານເສັຽ, ສ່ວນພວກໂຫຣາຈານບໍ່ຮູ້ເຖິງຈິດ ໃຈອັນແທ້ຈິງຂອງເຮໂຣດ *"ເມື່ອພວກໂຫຣາຈານໄດ້ຍິນຄຳສັ່ງດັ່ງນີ້ກໍພາກັນອອກໄປ "* (ຂໍ້ 8ຂ). ສ່ວນເຮໂຣດເອງກໍໄວ້ວາງໃຈພວກໂຫຣາຈານວ່າຫລົງກົນເພິ່ນ ແລະຄິດວ່າພວກໂຫຣາຈານຈະຕ້ອງກັບມາລາຍງານແນ່ນອນຈຶ່ງບໍ່ ສົ່ງທະຫານໄປ

ພ້ອມ.

<u>ໂຫຣາຈານນະມັສການ</u> ( ຂ:9-12 )

ພວກໂຫຣາຈານໄດ້ອຳລາກະສັດເຮໂຣດແລ້ວກໍພາກັນເດີນທາງໄປຊອກພຣະກຸມມານ ຕາມທີ່ພວກເຂົາເຈົ້າໄດ້ຮຽນຮູ້ຈາກພຣະທັມມີກາໄດ້ບອກເລົ່າໄວ້ລ່ວງໜ້າແລ້ວ, ໃນຂະນະທີ່ພວກໂຫຣາຈານກຳລັງເດີນທາງໄປນັ້ນດາວພິເສດຂອງອົງພຣະຜູ້ເປັນເຈົ້າກໍປາກົດຂຶ້ນ ແລະນຳທາງພວກໂຫຣາຈານໄປຈົນເຖິງບ່ອນພຣະກຸມມານເກີດຢ່າງອັສຈັນ *"ດາວທີ່ເຂົາໄດ້ເຫັນເມື່ອປາກົດຂຶ້ນນັ້ນກໍໄດ້ນຳໜ້າເຂົາໄປ ຈົນມາຢຸດຢູ່ຊື່ສະຖານທີ່ກຸມມານຢູ່ນັ້ນ "* (ຂໍ້ 9). ມັດທາຍບໍ່ໄດ້ບອກແຈ້ງວ່າດາວປາກົດຂຶ້ນຢ່າງໃດ? ເປັນຮູບຮ່າງແນວໃດ? ຫລືຍ້າຍນຳໜ້າພວກໂຫຣາຈານຢ່າງໃດ? ແຕ່ມັດທາຍບັນທຶກວ່າ ແມ່ນດາວພິເສດທີ່ພຣະເຈົ້າສັ່ງດາວດວງນີ້ມາເປັນເຄື່ອງຊີ້ທາງເດີນໃຫ້ພວກໂຫຣາຈານພົບພຣະກຸມມານ. ເມື່ອດາວນັ້ນຢຸດແລ້ວພວກໂຫຣາຈານຈຶ່ງເຂົ້າໄປຂາບໄຫວ້ພຣະກຸມມານດ້ວຍຄວາມຊົມຊື່ນຍິນດີ *"ເມື່ອພວກໂຫຣາຈານໄດ້ເຫັນດາວດວງນັ້ນແລ້ວກໍມີຄວາມຊົມຊື່ນຍິນດີອັນໃຫຍ່ ຄັນເຂົ້າໄປໃນເຮືອນກໍພົບກຸມມານກັບນາງມາຣີອາມານດາຂອງເພິ່ນ "* (ຂໍ້ 10). ພວກໂຫຣາຈານເຫລົ່ານີ້ຮູ້ເຣື່ອງຂອງພຣະເຈົ້າດ້ວຍວ່າພວກເຂົາເຈົ້າໄດ້ຮຽນຮູ້ຈາກວິທະຍາສາດ ແລະຮຽນຮູ້ຈາກພຣະທັມຂອງອົງພຣະຜູ້ເປັນເຈົ້າ ດັ່ງນັ້ນພວກເຂົາເຈົ້າຈຶ່ງບໍ່ແປກປລາດທີ່ພຣະເຢຊູມາບັງເກີດທີ່ຄອກສັດ.

ເມື່ອພວກໂຫຣາຈານເຂົ້າໄປຊັ້ນໃນກໍພົບເຫັນພຣະກຸມມານ ແລະມາຣີອາມານດາຂອງພຣະອົງຢູ່ທີ່ນັ້ນພວກເຂົາຈຶ່ງຂາບລົງນະມັສການພຣະອົງ *"ພວກເຂົາຈຶ່ງກົ້ມລົງຂາບໄຫວ້ກຸມມານນັ້ນ ແລ້ວໄຂຫີບເອົາຊັບຂອງເຂົາອອກມາຖວາຍແກ່ກຸມມານເປັນເຄື່ອງໂຄຣົບ ຄືຄຳ, ກຳຍານ, ແລະຢາງໄມ້ຫອມ "* (ຂໍ້ 11). ເຮົາເຫັນການກະທຳຂອງພວກໂຫຣາຈານມີຢ່າງສຳຄັນຄື; <u>1.</u> ນະມັສການ. <u>ຂ.</u> ຖວາຍ ຄຳ, ກຳຍານ ແລະຢາງໄມ້ຫອມ ເພື່ອເປັນເຄື່ອງສແດງອອກເຖິງຄວາມໂຄຣົບນັບຖື, ສິ່ງຂອງທີ່ມີຣາຄາທີ່ພວກໂຫຣາຈານໄດ້ຖວາຍນັ້ນເປັນຜົນດີຕໍ່ໂຢເຊບແລະມາຣີອາຈະຕ້ອງໃຊ້ຈ່າຍໃນການເດີນທາງກັບບ້ານ, ແລະການນະມັສການແບບນີ້ຄຣິສຕຽນເຮົາຄວນຮຽນເອົາເປັນແບບຢ່າງ.

ມັດທາຍບໍ່ໄດ້ບອກລາຍລະອຽດກ່ຽວກັບການເດີນທາງກັບບ້ານຂອງພວດໂຫຣາຈານ ແຕ່ໄດ້ບອກວ່າພຣະເຈົ້າໄດ້ເຕືອນທາງຄວາມຝັນບໍ່ໃຫ້ກັບໄປບອກເຣື່ອງນີ້ແກ່ເຮໂຣດ, ອາຈເປັນຄືນຕໍ່ມາທີ່ພຣະເຈົ້າໃຫ້ນິມິດເຂົາທາງຄວາມຝັນ. *"ພຣະເຈົ້າຊົງເຕືອນເຂົາທາງຄວາມຝັນບໍ່ໃຫ້ກັບໄປເຝົ້າເຮໂຣດ ດັ່ງນັ້ນເຂົາຈຶ່ງກັບໄປຍັງເມືອງຂອງຕົນໂດຍທາງອື່ນ "* (ຂໍ້ 12).

<u>ຄຳຖາມ</u>

1. ໂຢເຊບແລະມາຣີອາພາກັນເດີນທາງຈາກໃສໄປໃສ?

ຂ. ເປັນຫຍັງທັງສອງຈຶ່ງເດີນທາງໃນຍາມຍາກລຳບາກແນວນີ້?

3. ເມື່ອເດີນທາງໄປຮອດແລ້ວໄປພັກເຊົາຢູ່ໃສ?

4. ພວກໂຫຣາຈານແມ່ນໃຜ? ເປັນຫຍັງຈຶ່ງຊອກຫາພຣະກຸມມານນ້ອຍ?

5. ພວກໂຫຣາຈານມີຫຍັງເປັນເຄື່ອງນຳໜ້າໃນການເດີນທາງຊອກຫາພຣະກຸມມານນ້ອຍ?

6. ເມື່ອພວກໂຫຣາຈານພົບເຫັນແລ້ວເຂົາເຮັດຫຍັງແດ່?

7. ການຖວາຍຂອງເຂົາມີຄວາມໝາຍຢ່າງໃດ?

8. ເປັນຫຍັງກະສັດເຮໂຣດຈຶ່ງປອງຮ້າຍພຣະກຸມມານນ້ອຍ?

*ດຣ. ທຸມພັນ ວົງສຸຣິດທ໌*